# ຄູ່ຟ້າ ປູກປັນຍາ




ຄຳເມືງ ວໍລະຈິດ

27. 7. 2012

# ຄະນະຜູ້ຈັດພິມ

..........................

**ຮວບຮວມ, ຂຽນ ແລະບັນນາທິການ:**

ຄຳອອນ ເພັດດາວເຮືອງ

ຫົງເຫີນ ຊຸນພິທັກ

**ຖ່າຍຮູບພາບ**

ຄຳອອນ ເພັດດາວເຮືອງ

ຫົງເຫີນ ຊຸນພິທັກ

ດວງມາລາ ຣາຊະວົງໄຊ

ບຸນທົງ ຍົດໝັ້ນຄົງ

**ຕີພິມ-ອອກແບບ-ຈັດໜ້າ**

ດວງມາລາ ຣາຊະວົງໄຊ

**ຈັດພິມໂດຍ:**

ຄຳເມິງ ວໍລະຈິດ ພ້ອມດ້ວຍຄອບຄົວ

ເພື່ອເປັນທີ່ລະນຶກ ໃນໂອກາດມອບ-ຮັບໂຮງຮຽນມັດທະຍົມ ຕອນຕົ້ນ

ບ້ານຊອຍນາຟ້າ ເມືອງແປກ ແຂວງຊຽງຂວາງ

ຈຳນວນພິມ 2.000 ຫົວ

**ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດລາວ**

ຄຳເມິງ ວໍລະຈິດ

ຄູ່ຟ້າ ປູກປັບຍາ / ຄຳເມິງ ວໍລະຈິດ, ຮິບໂຮມໂດຍ ຄຳອອນ ເພັດດາວເຮືອງ
ແລະ ຫົງເຫີນ ຊຸນພິທັກ.--ວຽງຈັນ: ໂຮງພິມມັນທາຕຸລາດ, 2012

130 ໜ້າ: ພາບປະກອບສີ; 21 ຊມ

1. ຊີວິດ ແລະ ຜົນງານ. I. ເລື່ອງ

923.7--dc21

ISBN 978-9932-00-037-1

# ຄູ່ຟ້າ
# ປູກປັນຍາ

໒໗ ໗ ໒໐໑໒

ຄຳເມິງ ວໍລະຈິດ









# ສາລະບັນເລື່ອງ ໜ້າ


| | |
|---|---|
| ບົດບັນນາທິການ | 9 |
| ດ້ວຍຄວາມຫ່ວງໃຍ | 12 |
| ສຸກໃຈໄດ້ປະກອບສ່ວນ | 20-25 |
| ຄຳເຫັນຂອງທ່ານ ສົມສະນິດ ວິລິວົງ | 26 |
| ຄວາມເປັນມາ ໂຮງຮຽນ ມັດທະຍົມ ຕອນຕົ້ນ ນາຟ້າ | 28 |
| ພູມໃຈຕໍ່ການອຸທິດ | 39 |
| ການມອບ-ຮັບໂຄງການພັດທະນາໂຮງຮຽນອິນແປງ | 49-59 |
| ບາດກ້າວໃໝ່ ຂອງ ໂຮງຮຽນ ມັດທະຍົມສົມບູນ ອິນແປງ | 61-67 |
| ອິນແປງ ປ່າ ບັນດານ | 73 |
| ຫ້ອງສະໝຸດ ໂຮງຮຽນ | 75-85 |
| ຖົງແດງ | 86 |
| ສາລະໜ້າຮູ້ຕ່າງໆ | 88-92 |
| ສາດສະໜາ -ຮີດຄອງ ປະເພນີ | 93 |
| ເມືອງລາວ ສວຍງາມ | 104 |
| ດອກບົວ | 105 |
| ເພັດ ພົບເພັດ | 108 |
| ຊຽງຂວາງແດນງາມ | 112 |
| ກາງນາ | 122 |
| ຈຳປາມາລາລາວ | 123 |
| ບົດກະວີ ຈາກທົ່ງນາ | 128 |
| ເຂົ້າໄກ່ນ້ອຍ | 134 |



# ບັນນາທິການ

ປື້ມຫົວນີ້ນັບເປັນຫົວທີສີ່ ທີ່ພວກເຮົາໄດ້ຮັບຄວາມໄວ້ວາງໃຈ ແລະມອບໝາຍຈາກປ້າຄໍາເມິງ ວໍລະຈິດ ໃຫ້ເປັນຜູ້ຮວບຮວມຂໍ້ມູນ ຂຽນ ບັນນາທິການ ແລະຈັດພິມຂຶ້ນ.

ຫົວທໍາອິດແມ່ນ **"ແທນຄຸນແຜ່ນດິນທີ່ໃຫ້ກໍາເນີດ"** ຫົວທີສອງແມ່ນ **"ປະຫວັດແລະມູນເຊື້ອການສຶກສາໃນເຂດຍອດງື່ມ-ຄັງວຽງ"** ທັງສອງຫົວ ພິມແຈກຢາຍໃນໂອກາດມອບ-ຮັບອາຄານຮຽນໂຮງຮຽນມັດທະຍົມສົມບູນອິນແປງ ເຂດຄັງວຽງ ໄລຍະ II ເມື່ອວັນທີ 5 ພະຈິກ 2010

ສໍາລັບປື້ມຫົວນີ້ ຈັດພິມຂຶ້ນເພື່ອເປັນອະນຸສອນໃນໂອກາດ ຈັດພິທີມອບ-ຮັບອາຄານຮຽນໂຮງຮຽນມັດທະຍົມຕອນຕົ້ນ ບ້ານຊອຍ-ນາຟ້າ, ຫົວທີສາມ ແມ່ນຈັດພິມຂຶ້ນ ເພື່ອເປັນອະນຸສອນໃນການມອບ-ຮັບ ຕຶກພິເສດໂຮງໝໍ 101 ວິລະຊົນຊຽງຂວາງ.

ບົດຄວາມ ຄໍາຄິດເຫັນ ແລະຮູບພາບໃນປື້ມນີ້ ສ່ວນໜຶ່ງ ແມ່ນພວກເຮົາຜູ້ຈັດພິມຂຽນ ຮຽບຮຽງຂຶ້ນ ແລະຖ່າຍຮູບເອົາເອງ ແຕ່ອີກສ່ວນໜຶ່ງ ແມ່ນບົດຂຽນຂອງຜູ້ກ່ຽວຂ້ອງຂຽນຂຶ້ນເອງ ບົດຂອງໃຜ ຄວາມຄິດເຫັນຂອງໃຜ ກໍມີຮູບກໍາກັບໄວ້ພ້ອມ ແລ້ວພວກເຮົາເປັນພຽງຜູ້ຄັດຈ້ອນ ຮ້ອຍຮຽງ ແລະຕົບແຕ່ງໃຫ້ເຂົ້າຮູບເຂົ້າຊົງຕາມຫຼັກວິຊາການທີ່ນັ້ນ ການເກັບເອົາເນື້ອໃນໃຈຄວາມ ຫຼາຍຄວາມຮູ້ສຶກນຶກຄິດ ແລະຫຼາຍຮູບພາບ ການເຄື່ອນໄຫວ ມາລົງໃສ່ໜ້າເຈ້ຍທີ່ມີຢ່າງຈໍາກັດນີ້ ເປັນພາລະອັນບໍ່ງ່າຍປານໃດ ສໍາລັບພວກເຮົາ ຄ້າຍຄືກັບແມ່ຄົວທີ່ປຸງແຕ່ງແນວກິນເພື່ອໃຫ້ຖືກປາກຫຼາຍຄົນຫັ້ນລະ. ດັ່ງນັ້ນຫາກເກີດຂໍ້ຂາດຕົກບົກພ່ອງປະການໃດ ຮູບບໍ່ຖືກກັບບົດ ຫຼືບົດບໍ່ຖືກກັບຈິດໃຈ ພວກເຮົາກໍຂໍອະໄພມານະທີ່ນີ້ດ້ວຍ ແລະຂໍນ້ອມຮັບເອົາ ຄໍາຕໍານິຕິຊົມທຸກປະການ.

ເນື້ອໃນຂອງປຶ້ມນີ້ແບ່ງເປັນ3ສ່ວນຄື:ສ່ວນທີໜຶ່ງ ແມ່ນບົດຄຳເຫັນກ່າວມອບ-ຮັບໂຮງຮຽນມັດທະຍົມຕອນຕົ້ນບ້ານຊອຍນາຟ້າ ພ້ອມຄຳເຫັນຂອງບຸກຄົນ ແລະການຈັດຕັ້ງ, ສ່ວນທີສອງເປັນເລື່ອງກ່ຽວກັບ ໂຮງຮຽນມັດທະຍົມສົມບູນອິນແປງ ຊຶ່ງມີການມອບ-ຮັບໂຄງການພັດທະນາໄລຍະທີ 3 ເມື່ອວັນທີ 22 ພະຈິກ 2011 ແລະສ່ວນທີສາມເປັນສາລະໜ້າຮູ້ຈຳນວນໜຶ່ງກ່ຽວວັດທະນະທຳປະເພນີ ແລະເປັນບົດຂຽນ ບົດກະວີຂອງນັກປະພັນບາງທ່ານ.

ພວກເຮົາຫວັງວ່າປຶ້ມຫົວນີ້ ຈະໃຫ້ປະໂຫຍດແກ່ຜູ້ອ່ານ ໂດຍສະເພາະໄດ້ຮູ້ເຖິງປະຫວັດຄວາມເປັນມາ ກຽດສັກສີຂອງໂຮງຮຽນ, ເຫດຜົນ, ຂໍ້ມູນໃນການປະກອບສ່ວນ ສ້າງສາພັດທະນາໂຮງຮຽນທັງສອງແຫ່ງ, ພິເສດແມ່ນ ແນວຄວາມຄິດຈິດໃຈອັນປະເສີດ ຄຸນສົມບັດ ຄວາມຫວັງດີ ຄວາມເປັນຫ່ວງເປັນໃຍອັນໃຫຍ່ຫຼວງຂອງປ້າຄຳເນີງ ຊຶ່ງມີມາຕັ້ງແຕ່ຍັງເຍົາໄວ ຕາບເທົ້າເຖິງປັດຈຸບັນ ທີ່ມີຕໍ່ບ້ານພະບຸລຸດບ້ານເກີດເມືອງນອນ ແລະພໍ່ແມ່ພີ່ນ້ອງບັນດາເຜົ່າ ລວມທັງຄວາມຈິງໃຈກະຕືລືລົ້ນປະກອບສ່ວນຂອງທ່ານຜູ້ໃຈບຸນ ແລະຂອງທຸກຄົນທີ່ມີຕໍ່ການປົກປັກຮັກສາ ແລະພັດທະນາປະເທດຊາດໃນໄລຍະໃໝ່ ໂດຍສະເພາະແມ່ນດ້ານການສຶກສາ ຊຶ່ງສອດຄ່ອງກັບແນວທາງນະໂຍບາຍ ຂອງພັກ ແລະລັດຖະບານ ທີ່ຖືເອົາການພັດທະນາຊັບພະຍາກອນມະນຸດ ເປັນໜຶ່ງໃນບຸລິມະສິດແຫ່ງການພັດທະນາປະເທດຊາດ.

ບຸນກຸສົນ ຫຼືຄວາມດີ ຄວາມງາມ ອັນເກີດມີຈາກການຈັດພິມປຶ້ມທັງໝົດເຫຼົ່ານີ້ ພວກເຮົາຂໍມອບເປັນທຶນສົມທົບເຂົ້າໃນການສ້າງສາ ພັດທະນາໂຮງຮຽນທັງສອງແຫ່ງ ແລະຂໍເທີດທູນບູຊາກຽດສັກສີ **"ວິລະຊົນ"** ຂອງຊາວເມືອງແປກ ແລະຂອງຊາວຊຽງຂວາງຕະຫຼອດໄປ.

ດ້ວຍຄວາມເຄົາລົບ ແລະ ຮັກແພງ
ຈາກໃຈຂອງຄະນະຜູ້ຈັດພິມ
ຫົງເຫີນ ຊຸນພິທັກ



# ຄຳຂອງແມ່

ແມ່ຮັກ ແມ່ມອບໃຫ້ ທຸກສິ່ງມວນມີ ອວນເອີຍ
ຊີວິທັງກາຍໃຈ ບໍ່ຄຶງຄາໄວ້
ອຸທິດທາໂທມປ້ອງ ມາຕຸພູມຜືນແຜ່ນ
ເງິນຄຳແສນໂກດລ້ານ ກໍບໍ່ແກ້ວແກ່ນໃຈ

ແມ່ຫ່ວງ ຫ່ວງລູກເຕົ້າ ສະເໝີດັ່ງດວງຕາ ແພງເອີຍ
ຢາກໃຫ້ມີວິຊາ ໃຫຍ່ສູງຈູງໜ້າ
ມີປັນຍາເຍືອງແຈ້ງ ທາງເດີນໃສສ່ອງ
ພົ້ນພຸ່ງພາພີ່ນ້ອງ ເມືອງບ້ານດ່ານແດນ

ແມ່ໃຫ້ ແມ່ກໍ່ເກື້ອ ປັນປະກອບເປັນທຶນ ເຈົ້າແລ້ວ
ຈິດວິນຍານພະລັງຮັກ ປູກປຸນແປງປັ້ນ
ແມ່ຂໍ ຂໍໃຫ້ເຍົາວະຊົນເຊື້ອ ພຽນແພງຮຽນຮ່ຳ
ຂໍແຕ່ພຽງລູກເຕົ້າ **ມີນ້ຳໃຈ**ໂອບເອື້ອ
**ແພງເຊື້ອເຜົ່າພົງ** ແມ່ຖ້ອນ.

..............................................

ໂດຍ: ທົງເທີນ ຊຸນພິທັກ



# ດ້ວຍຄວາມຫ່ວງໃຍ ຕໍ່ລູກຫຼານ

........................

ພໍ່ ແມ່ ພີ່ນ້ອງ ລູກຫຼານ ການຈັດຕັ້ງ ຄູອາຈານ ນັກຮຽນ ທີ່ຮັກແພງ
ດ້ວຍຄວາມກະຕັນຍູ ຮູ້ບຸນຄຸນ ຢ່າງສຸດຊຶ້ງ ຕໍ່ແຜ່ນດິນຖິ່ນກຳເນີດ
ດ້ວຍຄວາມເຄົາລົບຮັກຢ່າງສູງສົ່ງ ລົ້ນເກົ້າເໜືອຫົວ ຕໍ່ຜູ້ບັງເກີດເກົ້າ
ດ້ວຍຄວາມຫ່ວງໃຍ ຕໍ່ອະນາຄົດອັນສົດໃສ ກວ້າງໄກຂອງລູກຫຼານ ແລະຮຸ່ນ
ຄົນທີ່ຈະຮັບຜິດຊອບຕໍ່ຊະຕາກຳຂອງບ້ານເກີດເມືອງນອນແລະປະເທດຊາດ

ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະພາກພູມໃຈ ເປັນຢ່າງຍິ່ງທີ່ໄດ້ເກີດເປັນລູກຂອງພໍ່ ວັນນາ ແລະແມ່ຫຸມມາ ທີ່ບ້ານຄັງວຽງ ເມືອງແປກ ແຂວງຊຽງຂວາງ, ໄດ້ເປັນລູກຫຼານຂອງປະຊາຊົນຊາວຊຽງຂວາງວິລະຊົນ ມີເອື້ອຍນ້ອງຮ່ວມກັນທັງໝົດ 6 ຄົນ, ຍິງ 4 ຊາຍ 2 ແລະບຸນຫຼາຍສາຍຍາວ ຈຶ່ງມີຊີວິດລອດຈາກຄວັນໝີ້ ຄວັນປືນ ແລະຫ່າລະເບີດໃນປາງສົງຄາມ ຊຶ່ງຍາມດຸເດືອດຂ້ຽວຂາດທີ່ສຸດ ແມ່ນບັ້ນຮົບ ໂອເດແອນ (ODL) ບັ້ນຮົບກູ້ກຽດ ບັ້ນຮົບທະນົງກຽດ ແລະບັ້ນຮົບບໍ່ຕ່າວຄືນ ທີ່ພວກສັດຕູຜູ້ຮຸກຮານໄດ້ກໍ່ຂຶ້ນ

ໃຜໆ ກໍຮູ້ດີວ່າ ໃນປາງສົງຄາມ ຜືນແຜ່ນດິນພູພຽງຊຽງຂວາງແຫ່ງນີ້ ຖືກທຳລາຍຢ່າງໜັກໜ່ວງ ຈາກໂຈນອາກາດຜູ້ຮຸກຮານ ຊຸມລະເບີດ ຊຸມຫຼືບໄພ ຮຽງຢາຍກັນໄປປານສັບຕາຜ້າ ຫຼືວ່າສັກລຸ້ງເຂົ້າໄຮ່ ຜູ້ຄົນລົ້ມຫາຍຕາຍຈາກບໍ່ຈັກວ່າເທົ່າໃດ ບັນດາຜູ້ລອດຊີວິດ ກໍລ້ວນຈຳໃຈພັດພາກຈາກບ້ານເກີດເມືອງນອນ.



ການທີ່ຂ້າພະເຈົ້າມີຊີວິດລອດມາໄດ້ ກໍຄືງແມ່ນຍ້ອນບຸນຄຸນບິດາ ມານດາ ຄູບາ ອາຈານ ບັນພະບຸລຸດ ແລະສິ່ງສັກສິດທັງຫຼາຍປົກປັກຄຸ້ມຄອງ, ດ້ານໜຶ່ງ ກໍແມ່ນຍ້ອນສິລະປະຍຸດ ຍຸດທະວິທີສູ້ຮົບ ຫຼົບຫຼີກຢ່າງສະຫຼາດຄ່ອງແຄ້ວ... ຍ້ອນມີການຊີ້ນຳ ນຳພາມີການບັນຊາຈາກຄະນະພັກ ຄະນະບັນຊາແຕ່ລະຄັ້ງ ແຕ່ລະບັ້ນຮົບ ຈຶ່ງຕະຫຼອດ ປອດໄພມາເຖິງປັດຈຸບັນ

ເມື່ອຫວນກັບຄືນມາຍາມ ບ້ານເກີດເທື່ອໃດ, ພາບອະດີດ ໃນສະໄໝປີ 1958-59 ຍັງຝັງຈິດຝັງໃຈຂອງຂ້າພະເຈົ້າທີ່ສຸດ ກໍແມ່ນການດຳລົງຊີວິດອັນອົບອຸ່ນກັບຄອບຄົວຢູ່ທ່າມກາງຄວາມຮັກແພງຂອງພໍ່ແມ່ ເອື້ອຍນ້ອງ ແລະຊາວບ້ານ, ໄດ້ຍອກໄຍ ໄລ່ແລ່ນກັບເອື້ອຍນ້ອງຕາມທົ່ງຄັງ ເປີ້ນພູນັ້ນ ສັນພູນີ້, ແຕ່ບ້ານປຸ່ງ-ສີຄູນ-ຄັງວຽງ ບ້ານທາດ... ນັ້ນຄືເຖື່ອນຫຼີ້ນ ເຖື່ອນນຳງົວ ນຳຄວາຍ ຊ່ວຍພໍ່ແມ່, ລະດູເຮັດນາ ພໍ່ແມ່ພີ່ນ້ອງຊາວບ້ານ ກໍພ້ອມກັນເຮັດນາເຮົາ ນາວານ ຫາຝຸ່ນໃສ່ນາ, ຕຶກປາ ຕຶກຂົວະ (ຮອກ), ໄປນາ ເຮົາດຳນາ, ເຮົາບາຍຫຍ້ານາ, ເຮົາກ່ຽວເຂົ້າ, ເຮົາຕີເຂົ້າ ແລະເຮົາຂົນເຂົ້າຂຶ້ນເລົ້າ ຂຶ້ນເຍຍ, ວິຖີແຫ່ງຊີວິດຊາວນາຍັງຈົດຈຳ ແລະຈາລຶກໄວ້ໃນດວງໃຈຕະຫຼອດມາ.



ເມື່ອເຖິງໄວເຂົ້າໂຮງຮຽນ ພໍ່ແມ່ກໍໃຫ້ເຂົ້າຮຽນພ້ອມເອື້ອຍນ້ອງ ເພາະຢູ່ແປະໆ ບ້ານກໍມີໂຮງຮຽນອິນແປງ, ເຫັນຮຸ່ນຜູ້ໃຫຍ່ເພິ່ນຮຽນ ຕົນກໍແລ່ນໄປແລ່ນມາຈອບເບິ່ງ ຄິດຢາກຮຽນຄືເພິ່ນ ຄວາມຄິດຂອງຕົນກໍສອດຄ່ອງກັບຄວາມຫວັງຂອງພໍ່ແມ່ ແລະ ນ້າບ່າວ (ທ່ານ ຄູສີທົນ ທິບດາລາ) ຈຶ່ງໄດ້ເລີ່ມຕົ້ນເຂົ້າຮຽນໜັງສືໃນຫ້ອງທີ 5-4-3 (ຫ້ອງ ປ.1, 2, 3 ໃນປັດຈຸບັນ) ທີ່ໂຮງຮຽນອິນແປງແຫ່ງນີ້, ໂດຍມີນາຍຄູປ່ອງ, ນາຍຄູ ແກ້ວ ມາລີຍະ ແລະນ້າບ່າວຄູ ສີທົນ ທິບດາລາ ເປັນຜູ້ສິດສອນ

ບໍ່ແມ່ນຍ້ອງຕົນເອງເກີນໄປ, ຄວາມຈິງຕົນເອງກໍເປັນເດັກຄຳຮູ້, ຂະຫຍັນ, ຮຽນເກັ່ງ ຮຽນດີ ມີຄວາມເຂົ້າໃຈ ແລະຈື່ຈຳດີ 3 ປີທີ່ຮຽນ ປ.1, ປ.2, ປ.3, ສາມນາຍ ຄູຄື: ຄູປ່ອງ, ຄູແກ້ວ, ຄູສີທົນ ຕ່າງຄົນກໍຢັ້ງຢືນວ່ານາງນີ້ຮຽນໄດ້ດີ ຄວນສົ່ງເສີມຕໍ່, ສຸດທ້າຍກໍຕັດສິນໃຈໄປຮຽນຫ້ອງທີສອງນ້ອຍ (ປ.4) ຢູ່ບ້ານຄາຍ ທີ່ຫ່າງຈາກໂຮງ ຮຽນອິນແປງໄປປະມານ 3-4 ຫຼັກ ຊຶ່ງເວລານັ້ນແມ່ນ ທ່ານຄູຄຳພອງ ດາລາແສນ ເປັນຄູສອນ (ປັດຈຸບັນເປັນພະນັກງານບຳນານ ບ້ານເຮືອນເພິ່ນຕັ້ງຢູ່ສາມແຍກ ໜອງເປັດນີ້ເອງ).



ໄລຍະຮຽນ ຢູ່ບ້ານຄາຍນັ້ນ ມີຄວາມຫຍຸ້ງຍາກຫຼາຍ ເປັນຕົ້ນແມ່ນໄດ້ຍ່າງໄປ-ກັບ, ໝູ່ຄູ່ຈະຍ່າງໄປນຳພໍເປັນຄູ່ປາກຄູ່ລົມນຳທາງກໍບໍ່ມີ, ແມ່ຍິງມີແຕ່ຂ້າພະເຈົ້າຜູ້ດຽວຊ້ຳ. ຕ້ອງຕື່ນນອນແຕ່ເຊົ້າ ໄດ້ຫຸ່ງເຂົ້າແລ້ວກໍອອກເຮືອນໄປໂລດ ບາງເທື່ອກໍທັງຍ່າງທັງແລ່ນ ເພາະຢ້ານບໍ່ທັນໂມງຮຽນ. ມີບາງຄົນກໍບໍ່ທັນແທ້ ທ່ານຄູກໍເອົາໄປຢືນຂ້າງເສົາຫຼັກທຸງຊາດ ປະກາດຕໍ່ໜ້າໝູ່ເພື່ອນວ່າເປັນຄົນຂີ້ຄ້ານນອນຕື່ນສວາຍ ບໍ່ຄວນເອົາເປັນແບບຢ່າງ. ບາງເທື່ອກໍຮູ້ສຶກທໍ້ຖອຍໃຈ ແຕ່ກໍຍ້ອນຄວາມເອົາໃຈໃສ່ຂອງພໍ່ແມ່ແລະເອື້ອຍອີ່ນອອຍ ປຸກລະດົມໃຫ້ອົດທົນຮ່ຳຮຽນ. ໃນຄອບຄົວເອື້ອຍສອງຄົນກໍບໍ່ໄດ້ຮຽນໜັງສື, ເຮັດວຽກໄຮ່ການນາ ແລະວຽກຄອບຄົວຊ່ອຍພໍ່ແມ່, ເພິ່ນຈຶ່ງລະດົມແລະສົ່ງເສີມໃຫ້ຂ້າພະເຈົ້າໄດ້ຮຽນໜັງສື. ພິເສດແມ່ນທ່ານຄູ ສີທົນ ທິບດາລາ ເຊິ່ງເປັນນ້ອງຊາຍຂອງແມ່ ໄດ້ຊຸກຍູ້ໃຫ້ອົດທົນຮ່ຳຮຽນ ທັງໃຫ້ຄວາມຮັກແພງ ແລະຄຳຊີ້ນຳຕັກເຕືອນ(ປັດຈຸບັນເພິ່ນເປັນພະນັກງານບຳນານຢູ່ໂພນສະຫວັນນີ້ເອງ).

ອ້າຍຄູຄຳພວງ ກໍຢັ້ງຢືນແຕ່ມື້ນັ້ນມາວ່າ ອີຕົນເປັນຜູ້ນ້ອຍແມ່ຍິງຜູ້ດຽວມາຮຽນທັນເວລາ,ຄຸນສົມບັດດີ, ຮຽນເກັ່ງ ກຳລັງໃຈຈາກພໍ່ແມ່ ນ້າບ່າວ ແລະເອື້ອຍນ້ອງທາງບ້ານບວກໃສ່ຄວາມເອົາໃຈໃສ່ ແລະກຳລັງໃຈຈາກອ້າຍຄູກໍໄດ້ເພີ່ມໃຫ້ມີກຳລັງໃຈໃນການຮຽນ.



ດັ່ງນັ້ນ ເຖິງຈະຫຍຸ້ງຍາກປານໃດ ຂ້າພະເຈົ້າ ກໍຕັດສິນໃຈໃສ່ໃນການຮໍ່າຮຽນຕາມຄວາມມຸ່ງຫວັງຂອງຕົນ ແລະຄວາມປາຖະໜາດີຂອງພໍ່ແມ່ ເອື້ອຍ ແລະນ້າບ່າວ. ຮອດປີ 1963 ຂ້າພະເຈົ້າກໍຮຽນຈົບຫ້ອງທີສອງນ້ອຍ (ປ.4) ແລ້ວກໍມີອ້າຍຮັກຊື່ວ່າ ອ້າຍທອງໃບມາເວົ້ານຳພໍ່ແມ່ເພື່ອໃຫ້ຕົນເອງໄດ້ໄປເຮັດການປະຕິວັດເມື່ອພໍ່ແມ່ຕົກລົງ ອ້າຍທອງໃບ ພ້ອມໝູ່ໜຶ່ງຄົນກໍໄດ້ ມາຮັບເອົາ ແລະພາກັນຍ່າງແຕ່ບ້ານໄປຢູ່ສີ່ສານທະຫານ (ຄັງໄຂ) ໄດ້ໄລຍະໜຶ່ງແລ້ວ ກໍໄປຮຽນແພດ ຈາກນັ້ນກໍເຄື່ອນໄຫວຮັບໃຊ້ກອງທັບ ໃນແຕ່ລະບັ້ນ ຮົບທີ່ດຸເດືອດຂຮ້ວຂາດ ຊຶ່ງສັດຕູບຸກຕີແຂວງຊຽງຂວາງໃນໄລຍະດັ່ງກ່າວ (ເລື່ອງເສີກ ສົງຄາມ ອ່ານໃນປື້ມນາງແພດປະຕິວັດ ຊີວິດຕິດພັນກັບໂຮງໝໍ 101 ວິລະຊົນ).

ເມື່ອສັນຕິພາບກັບຕ່າວມາ, ທ່ານບຸນຍັງ ວໍລະຈິດ ຜູ້ເປັນສາມີ ໄດ້ຮັບຄວາມໄວ້ວາງໃຈຈາກພັກ ຈາກລັດຖະບານ ແລະປະຊາຊົນໃຫ້ດຳລົງໜ້າທີ່ຕຳແໜ່ງສູງຂຶ້ນເລື້ອຍໆ ຂ້າພະເຈົ້າໃນຖານະພັນລະຍາ ກໍໄດ້ຕິດຕາມເພິ່ນໄປປະຕິບັດໜ້າທີ່ ຊຶ່ງນອກຈາກເຮັດວຽກຄອບຄົວແລ້ວ ຍັງໄດ້ສະໜັບສະໜູນໃຫ້ເພິ່ນໄດ້ສຳເລັດໜ້າທີ່ຂອງຜູ້ນຳປະເທດຊາດ. ເວົ້າລວມແມ່ນໄດ້ຄຽງຄູ່ກັບຄອບຄົວ, ກັບເພື່ອນຮ່ວມຮົບ ກັບບັນດາແມ່ປ້ານ້າອາ ແລະພີ່ນ້ອງຮ່ວມຊາດ ປະກອບສ່ວນປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ ດັ່ງນັ້ນຕົນເອງຈຶ່ງໄກຈາກບ້ານໄປເລື້ອຍໆ.



ເມື່ອເວົ້າເຖິງບ້ານເກີດເມືອງນອນ ຂ້າພະເຈົ້າມີຄວາມຄິດຮອດ ຄິດເຖິງເປັນຫ່ວງເປັນໃຍ ແລະສຳນຶກຢູ່ສະເໝີວ່າ ຕົນເອງຍັງມີພາລະໜ້າທີ່ຕ້ອງຕອບບຸນແທນຄຸນ. ດັ່ງນັ້ນ ໃນປີ 2004 ຂ້າພະເຈົ້າພ້ອມຄອບຄົວ ຈຶ່ງໄດ້ຊ່ວຍສ້າງອາຄານຮຽນໃສ່ໂຮງຮຽນອິນແປງ 1 ຫຼັງ ມູນຄ່າກວ່າ 400 ລ້ານກີບ ແລະຕໍ່ມາອຳນາດການປົກຄອງ ທ້ອງຖິ່ນ ຊາວບ້ານ ພໍ່ແມ່ພີ່ນ້ອງ ແລະລູກຫຼານ ກໍສະເໜີຄວາມຮຽກຮ້ອງຕ້ອງການມາຍັງຂ້າພະເຈົ້າອີກວ່າ ຢາກມີອາຄານຮຽນຫຼັງໃໝ່ຕື່ມ ເພື່ອໃຊ້ສຳລັບການສຶກສາຂັ້ນສູງຂຶ້ນໄປ.

ຄວາມຮຽກຮ້ອງຕ້ອງການນີ້ ແມ່ນຖືກຕ້ອງສອດຄ່ອງທີ່ສຸດ, ເພາະວ່າການສ້າງສາພັດທະນາປະເທດຊາດ ບ້ານເມືອງ ໃນປັດຈຸບັນ ແລະອະນາຄົດ ຍິ່ງຕ້ອງການຄົນມີຄວາມຮູ້ ຄວາມສາມາດສູງ ແລະມີຄຸນສົມບັດສິນທຳ ປະຈຳໃຈ ດັ່ງນັ້ນ ພັກ-ລັດຈຶ່ງເລັ່ງໃສ່ພັດທະນາຊັບພະຍາກອນມະນຸດ ແລະຮຽກຮ້ອງໃຫ້ທຸກຄົນປະກອບສ່ວນພັດທະນາການສຶກສາຂອງຊາດ. ດ້ວຍເຫດນີ້ ຂ້າພະເຈົ້າພ້ອມຄອບຄົວ ຈຶ່ງຕັດສິນໃຈເປັນເອກະພາບ ຍິນດີຫາທາງຊ່ວຍເຫຼືອ ດຳເນີນການເຕົ້າໂຮມທຶນ ຈາກລູກຫຼານ ຍາດພີ່ນ້ອງ ແລະຜູ້ມີນ້ຳໃຈທັງຫຼາຍ ອາໄສກຳລັງແຮງ ກຳລັງຊັບ ກຳລັງສະຕິປັນຍາຂອງຫຼາຍຄົນ ສົມທົບໃສ່ຄວາມອາດສາມາດຂອງພໍ່ແມ່ພີ່ນ້ອງ ແລະການຈັດຕັ້ງທຸກພາກສ່ວນໃນທ້ອງຖິ່ນ.



ໃນການລະດົມທຶນນັ້ນ ຂ້າພະເຈົ້າໄດ້ຮັບຄວາມຮ່ວມມືເປັນຢ່າງດີ ທຸກຄົນຕ່າງກໍເຫັນດີເຫັນພ້ອມ ຍິນດີສະໝັກໃຈ ແລະຈິງໃຈສະໜັບສະໜູນ. ທຸກຄົນສະເໜີໃຫ້ຂ້າພະເຈົ້າເປັນຫຼັກແຫຼ່ງອອກໜ້າພາທາງ ທ້ອນໂຮມທຶນຮອນ ເພື່ອໃຫ້ໄດ້ຕາມຄວາມປະສົງທີ່ຄາດໝາຍໄວ້. ໂຊກດີທີ່ເວລາປີ 2004 ນັ້ນ ລາຄາວັດສະດຸ ອຸປະກອນ ແລະແຮງງານກໍ່ສ້າງບໍ່ທັນສູງປານໃດ ແຕ່ວ່າມາເຖິງບັດນີ້ ຄ່າກໍ່ສ້າງ ແລະອື່ນໆກໍນັບມື້ນັບສູງຂຶ້ນ. ດັ່ງນັ້ນ ຈຶ່ງໄດ້ຂະຫຍາຍການປຶກສາຫາລືໄປພ້ອມໆກັບການລະດົມທຶນນັ້ນ ກໍໄດ້ມອບໝາຍໃຫ້ ທ້າວສີສົມພູ ຜູ້ເປັນຫຼານຊາຍ ຄົ້ນຄວ້າ ພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງລົງມືຈັດຕັ້ງປະຕິບັດໂຄງການກໍ່ສ້າງ ໂດຍເລີ່ມແຕ່ວັນທີ 08/02/2010. ໃນການກໍ່ສ້າງ ກໍໄດ້ຮັບຄວາມຮ່ວມມືເປັນຢ່າງດີຈາກທຸກຝ່າຍ. ມາເຖິງ ວັນທີ 5 ພະຈິກ 2011 ຈຶ່ງໄດ້ມີການມອບ-ຮັບ ຢ່າງເປັນທາງການ.

ຂໍໃຫ້ພວກເຮົາທຸກຄົນ ຜູ້ມີສ່ວນຮ່ວມໃນການພັດທະນາໂຮງຮຽນຫຼັງນີ້ ຈົ່ງມີຄວາມພາກພູມໃຈ ຕໍ່ຜົນງານທີ່ພວກເຮົາໄດ້ສາມັກຄີກັນສ້າງຂຶ້ນມາ. ອາຄານຮຽນຫຼັງນີ້ ມີຄວາມສໍາຄັນຫຼາຍ ເພາະມັນໄດ້ໄຂປະຫວັດສາດໜ້າໃໝ່ ໃຫ້ແກ່ເຂດຄ້ວງວຽງວ່າມີໂຮງຮຽນມັດທະຍົມສົມບູນເກີດຂຶ້ນແລ້ວ, ເປັນອາຄານຮຽນ ແລະເດີ່ນກິລາທີ່ເກີດຂຶ້ນຈາກຄວາມສາມັກຄີ ຈາກກອງກຸສົນລວມນໍ້າໃຈຂອງຫຼາຍຄົນ ໂດຍສະເພາະຂອງພວກເຮົາຜູ້ເປັນລູກຫຼານແຫ່ງເມືອງແປກ ດິນແດນຊຽງຂວາງວິລະຊົນ.



ຂ້າພະເຈົ້າມີຄວາມສຸກ ແລະມີຄວາມພາກພູມໃຈຫຼາຍ, ຄູອາຈານ ພໍ່ແມ່ ພີ່ນ້ອງ ແລະ ລູກຫຼານ ກໍຄົງມີຄວາມດີອົກດີໃຈຫຼາຍທີ່ສຸດ ເພາະນັບແຕ່ນີ້ເປັນຕົ້ນໄປ ລູກຫຼານ ຂອງພວກເຮົາ ໃນບໍລິເວນເຂດຄັງວຽງ ຜູ້ທີ່ຮຽນຈົບມັດທະຍົມຕົ້ນແລ້ວ ຈະບໍ່ໄດ້ແຍກຍ້າຍກັນໄປຮຽນຕໍ່ມັດທະຍົມປາຍ ຢູ່ບ່ອນອື່ນໆຕາມເງື່ອນໄຂຂອງໃຜລາວ ເໝືອນດັ່ງແຕ່ກ່ອນອີກ. ພໍ່ແມ່ ຄູອາຈານ ແລະນັກຮຽນຈະໄດ້ຢູ່ໃກ້ຊິດກັນ ຊ່ວຍເຫຼືອກັນອົບຮົມ ສິດສອນ ແລະຮໍ່າຮຽນຢ່າງເຕັມກໍາລັງ.

ໂຮງຮຽນອິນແປງແຫ່ງນີ້ ໃນອະດີດ ເຖິງວ່າເປັນຫຼັງນ້ອຍໆ ມຸງດ້ວຍຫຍ້າຄາ ແຕ່ກໍແມ່ນເບົ້າຊຸບຫຼໍ່ທໍາອິດ ຊຶ່ງສົ່ງຜົນໃຫ້ຫຼາຍໆຄົນໃນປັດຈຸບັນນີ້ ໄດ້ກາຍເປັນພະນັກງານຂອງລັດ ເປັນນາຍທະຫານ ນາຍຕໍາຫຼວດ ເປັນແພດ-ໝໍ ເປັນຄູອາຈານ ເປັນນັກທຸລະກິດ ແລະຜູ້ສໍາຄັນໃນສາຂາອາຊີບອື່ນໆ. ບັດນີ້ພວກເຮົາມີອາຄານຮຽນຫຼັງໃໝ່ ທີ່ແໜ້ນໜາຖາວອນ ແລະຈົບງາມ ພ້ອມທັງມີລະດັບການສຶກສາສູງຂຶ້ນກວ່າເກົ່າອີກ. ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ພໍ່ແມ່ ຄູອາຈານ ແລະການຈັດຕັ້ງທຸກພາກສ່ວນຈະພ້ອມກັນປົກປັກຮັກສາເປັນຢ່າງດີ, ນໍາໃຊ້ຢ່າງຮູ້ຄຸນຄ່າ ເຂົ້າໃນການສຶກສາອົບຮົມກໍ່ສ້າງລູກຫຼານໃຫ້ມີຄວາມຮູ້ຄວາມຫຼັກ ມີສະຕິປັນຍາ ເສີມຂະຫຍາຍມູນເຊື້ອໂຮງຮຽນອິນແປງ ມູນເຊື້ອວັດທະນະທໍາອັນດີງາມ ແລະມູນເຊື້ອຊຽງຂວາງວິລະຊົນຂອງພວກເຮົາ, ສ້າງຄົນຮຸ່ນໃໝ່ໃຫ້ເປັນຄົນດີຂອງພໍ່ແມ່ ຂອງສັງຄົມ ແລະເປັນຜູ້ສືບທອດທີ່ດີຂອງແຜ່ນດິນຖິ່ນຄັງຄາຍ ກໍຄືປະເທດຊາດບ້ານເມືອງ ໃນອະນາຄົດຕໍ່ໆໄປ.



# ສຸກໃຈໄດ້ປະກອບສ່ວນສ້າງ

**ສີສົມພູ ບັນທະພອນ**

..................................

ຂໍສະແດງຄວາມນັບຖື ແມ່ປ້າຄຳເມິງ ວໍລະຈິດ

ສະແດງຄວາມຮັກແພງ ທ່ານຜູ້ຕາງໜ້າການຈັດຕັ້ງທຸກພາກສ່ວນ ພ້ອມດ້ວຍພໍ່ແມ່ປະຊາຊົນ ຄູອາຈານ ແລະລູກຫຼານນັກຮຽນທຸກຖ້ວນໜ້າທີ່ມາຮ່ວມໃນພິທີມອບ-ຮັບອາຄານໂຮງຮຽນມັດທະຍົມຕອນຕົ້ນບ້ານຊອຍນາຟ້າໃນມື້ນີ້.

ຂ້າພະເຈົ້າ ກໍແມ່ນລູກໃນບ້ານ ຫວ້ານໃນສວນຂອງຊາວພອນ ດິນແດນວິລະຊົນແຫ່ງນີ້ ຂ້າພະເຈົ້າພາກພູມໃຈທີ່ປ້າຄຳເມິງໄດ້ໃຫ້ຄວາມໄວ້ວາງໃຈໃຫ້ຂ້າພະເຈົ້າເປັນຜູ້ດຳເນີນການກໍ່ສ້າງອາຄານໂຮງຮຽນມັດທະຍົມຕອນຕົ້ນ ບ້ານຊອຍນາຟ້າ ຊຶ່ງນັບເປັນອີກໂຄງການໜຶ່ງ ທີ່ຂ້າພະເຈົ້າໄດ້ປະກອບສ່ວນເຂົ້າໃນການສ້າງໂຄງລ່າງພື້ນຖານເພື່ອການສຶກສາຮ່ຳຮຽນຂອງລູກຫຼານ.

ຂ້າພະເຈົ້າໄດ້ຮັບຜິດຊອບດຳເນີນການສ້າງສາ ອາຄານສະຖານທີ່ມາແລ້ວຫຼາຍແຫ່ງ ແຕ່ທຸກເທື່ອທີ່ໄດ້ຮ່ວມປະກອບສ່ວນສ້າງສະຖານທີ່ເພື່ອການສຶກສາແລ້ວ ຂ້າພະເຈົ້າ ກໍຄືຄອບຄົວ ແມ່ນມີຄວາມຮູ້ສຶກພິເສດຄື ດີໃຈພາກພູມໃຈ ແລະມີຄວາມສຸກ ເພາະຮູ້ດີວ່າ ອັນນີ້ມັນເປັນທັງຄວາມຮັບຜິດຊອບ ທັງແມ່ນໜ້າທີ່ຂອງພວກເຮົາຜູ້ເປັນພໍ່ແມ່ທີ່ມີຕໍ່ລູກຫຼານ ຕໍ່ປະເທດຊາດບ້ານເມືອງ ການໄດ້ຮ່ວມສ້າງຈຶ່ງເປັນທັງໂອກາດໄດ້ຕອບບຸນແທນຄຸນບັນພະບຸລຸດ ແລະບ້ານເກີດເມືອງນອນ ແລະ ຄືວ່າຕົນເອງໄດ້ເຮັດໜ້າທີ່ອັນຄວນກະທຳຂອງຕົນໄດ້ສຳເລັດ.

ຂໍສະແດງຄວາມຮູ້ບຸນຄຸນ ທີ່ປ້າໄດ້ມອບຄວາມຮັບຜິດຊອບ ແລະໄວ້ວາງໃຈ ໃຫ້ເປັນຜູ້ດຳເນີນການກໍ່ສ້າງ ຂອບໃຈຕໍ່ຄະນະກຸ່ມລາດບວກ ຄະນະອຳນາດການ ປົກຄອງບ້ານຊອຍນາຟ້າ ຄູອາຈານ ລູກຫຼານນັກຮຽນ ພໍ່ແມ່ພີ່ນ້ອງ ອ້າຍນ້ອງກຳມະ ກອນ ແລະທຸກໆທ່ານ ທີ່ໄດ້ອຳນວຍຄວາມສະດວກ ແລະປະກອບສ່ວນ ບໍ່ວ່າຈະເປັນ ເງິນຄຳ ວັດຖຸເຂົ້າຂອງ ເຫື່ອແຮງ ສະຕິປັນຍາ ກຳລັງໃຈ ເຂົ້າໃນການກໍ່ສ້າງ ຈົນເຮັດ ໃຫ້ອາຄານຮຽນທີ່ພວກເຮົາໄຝ່ຝັນ ຄອງຄອຍມາເປັນເວລາດົນນານນັ້ນ ໄດ້ປາກົດຂຶ້ນ ເທິງຜືນແຜ່ນດິນທີ່ພວກເຮົາຮັກ ແລະຫວງແຫນ ຢ່າງແໜ້ນໜາຈົບງາມ ມີມາດຕະ ຖານຄົບຖ້ວນ ຕາມແບບແຜນທີ່ພວກເຮົາໄດ້ກຳນົດໄວ້ທຸກປະການ.

ພິເສດຂໍສະແດງຄວາມປິ້ມປິຕິ ຍິນດີນຳພໍ່ແມ່ພີ່ນ້ອງເຂດລາດບວກ ກໍຄືຊາວ ບ້ານຊອຍນາຟ້າ ຄູອາຈານ ແລະລູກຫຼານນັກຮຽນ ທີ່ຈະໄດ້ມີອາຄານຮຽນຫຼັງໃໝ່ ຈົບງາມ ແລະແໜ້ນໜາຖາວອນ ແລະກໍຂໍຝາກຄວາມຫວັງດີ ຄວາມເຊື່ອໝັ້ນວ່າ ນັບ ແຕ່ນີ້ເປັນຕົ້ນໄປ ການສຶກສາໃນໂຮງຮຽນແຫ່ງນີ້ ຄົງຈະມີບັນຍາກາດໃໝ່ ແລະກ້າວສູ່ ຄຸນະພາບໃໝ່.

ບັດນີ້ ເຖິງເວລາກຳນົດແລ້ວ ຂ້າພະເຈົ້າຂໍມອບອາຄານນີ້ໃຫ້ແກ່ເຈົ້າຂອງໂຄງ ການ ເພື່ອຈະໄດ້ດຳເນີນການຕໍ່ໄປ ຕາມຈຸດປະສົງອັນດີງາມຂອງພວກທ່ານ

ຂໍຂອບໃຈ

24/7 ຫ້າມຈຳໜ່າຍ





# ພູມໃຈທີ່ໄດ້ປະກອບສ່ວນ

## ຄຳໄພ ຊະນະ

.........................................

ຂໍສະແດງຄວາມນັບຖື ແມ່ປ້າ ຄຳເມິງ ວໍລະຈິດ ສະແດງຄວາມຮັກແພງ ທ່ານຜູ້ຕາງໜ້າການຈັດຕັ້ງທຸກພາກສ່ວນ ພ້ອມດ້ວຍພໍ່ແມ່ປະຊາຊົນ ຄູອາຈານ ແລະລູກຫຼານນັກຮຽນທຸກຖ້ວນໜ້າ ທີ່ມາຮ່ວມໃນພິທີມອບ-ຮັບອາຄານໂຮງຮຽນມັດທະຍົມຕອນຕົ້ນນາຟ້າ ໃນມື້ນີ້.

ກ່ອນອື່ນ ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈທີ່ ປ້າຄຳເມິງ ການຈັດຕັ້ງ ຄູອາຈານ ແລະພໍ່ແມ່ປະຊາຊົນ ອະນຸຍາດໃຫ້ຂ້າພະເຈົ້າຂຶ້ນມາເປັນຜູ້ຕາງໜ້າຜູ້ປະກອບທຶນ ມີຄຳຄິດເຫັນໃນເວທີນີ້.

ຂ້າພະເຈົ້າກໍແມ່ນລູກໃນບ້ານ ຫວ້ານໃນສວນ ຂອງຊາວພວນ ດິນແດນວີລະຊົນແຫ່ງນີ້ ເຖິງວ່າໄປດຳລົງຊີວິດ ແລະເຮັດທຸລະກິດຢູ່ແຫ່ງຫົນໃດໆ ຈະສິວິໄລ ຫຼືຫຍຸ້ງຍາກປານໃດກໍຕາມ, ຂ້າພະເຈົ້າກໍຍັງລະລຶກນຶກເຖິງດິນແດນເມືອງພວນສະເໝີ ຊາວພວນພວກເຮົາດຳລົງຊີວິດມີອະລິຍະທຳອັນມີລັກສະນະສະເພາະຕົວ ເປັນຕົ້ນແມ່ນ ຄວາມຈະເລີນທາງດ້ານຈິດໃຈ ມີຄວາມເຫຼື້ອມໃສ ໂອບເອື້ອອາລີ, ມີແຂກໄປໄທມາກໍໄດ້ສູ່ເຂົ້າປາອາຫານ, ຍາມຈາກໄປກໍມີຂອງຕ້ອນຂອງຝາກເລັກໆນ້ອຍໆ ຕິດໄມ້ຕິດມື ນີ້ຄືນ້ຳໃຈໄມຕີຂອງຄົນພວນທີ່ຊົງຄຸນຄ່າ.



ໃນສະໄໝສົງຄາມ ຊາວພອນພວກເຮົາໃຜໆກໍພ້ອມຈິດພ້ອມໃຈກັນຕໍ່ສູ້ປົດປ່ອຍບ້ານເກີດເມືອງນອນຈົນໄດ້ຮັບນາມະຍົດ ເປັນເມືອງວິລະຊົນ ແລະແຂວງວິລະຊົນ ໃນວາລະແຫ່ງການສ້າງສາພັດທະນານີ້ ຊາວພອນກໍໄດ້ສຸມຈິດສຸມໃຈສ້າງສາພັດທະນາ ຈົນບ້ານເມືອງມີຄວາມຈະເລີນກ້າວໜ້າພໍສົມຄວນ ຂ້າພະເຈົ້າກໍໄດ້ມີໂອກາດໄດ້ຮູ້ຂ່າວດີຈາກແມ່ປ້າຄຳເມີງ ວໍລະຈິດ ວ່າຈະໄດ້ມາຊ່ວຍສ້າງໂຮງຮຽນ ໂຮງໝໍ ວັດວາອາຮາມຢູ່ທ້ອງຖິ່ນດິນພອນຂອງພວກເຮົາ, ຂ້າພະເຈົ້າພ້ອມຄອບຄົວ ຈຶ່ງຂໍອະນຸຍາດເປັນສ່ວນໜຶ່ງຮ່ວມກັບປ້າ ເພື່ອໄດ້ສ້າງໂຮງຮຽນມັດທະຍົມຕົ້ນ ຂອງຊາວບ້ານຊອຍນາຟ້າ.

ໂຮງຮຽນແຫ່ງນີ້ໃນອະດີດ ເຖິງວ່າຈະມີສະພາບແນວໃດກໍຕາມ ແຕ່ກໍໄດ້ໃຫ້ການສຶກສາແກ່ລູກຫຼານ ໃຫ້ມີຄວາມຮູ້ຄວາມຫຼັກ ບັດນີ້ພວກເຮົາມີອາຄານຮຽນຫຼັງໃໝ່ທີ່ແໜ້ນໜາຖາວອນ ແລະຈົບງາມພ້ອມທັງມີສິ່ງອຳນວຍຄວາມສະດວກ ຄົບຊຸດພໍສົມຄວນ ເຖິງຈະຍັງບໍ່ທັນສະໄໝກໍຕາມ ຂ້າພະເຈົ້າເຊື່ອວ່າ ກໍຄົງຈະເປັນພື້ນຖານທີ່ສາມາດອຳນວຍຄວາມສະດວກ ໃຫ້ແກ່ລູກຫຼານໃນໄວຮຽນດີຂຶ້ນຕື່ມອີກ ແລະຈະເປັນການປະກອບສ່ວນສຳຄັນ ໃນການປະຕິບັດແຜນນະໂຍບາຍຂອງພັກທີ່ກຳນົດອອກມາ ໃນມະຕິກອງປະຊຸມຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ໃນການສ້າງຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນເປັນກ້າວໆ.



*ອາຄານ ໂຮງຮຽນ ມັດທະຍົມ ຕອນຕົ້ນ ບ້ານຊອຍນາຟ້າ ຫຼັງເກົ່າ*

ຂ້າພະເຈົ້າ ມີຄວາມເຊື່ອໝັ້ນສະເໝີວ່າ ລູກຫຼານຊາວພວນ ກໍຄືລູກຫຼານຂອງພໍ່ແມ່ພີ່ນ້ອງຊາວລາວພວກເຮົາ ຫາກໄດ້ຮັບການສຶກສາອົບຮົມບົ່ມສອນຢ່າງພຽງພໍແລ້ວເຂົາເຈົ້າກໍຈະເຕີບໃຫຍ່ຂຶ້ນພ້ອມ ກັບມີສະຕິປັນຍາ ມີຄວາມກະຕັນຍູ ມີຄວາມຮູ້ຄວາມສາມາດ ທີ່ຈະສ້າງສາພັດທະນາປະເທດຊາດ ເສີມຂະຫຍາຍມູນເຊື້ອອັນດີງາມຂອງບັນພະບຸລຸດ ແລະເຊື່ອໝັ້ນວ່າທຶນຮອນທີ່ລົງໃສ່ການສຶກສານີ້ ບໍ່ມີວັນຈະສູນຫາຍແຕ່ຈະນັບມື້ຈະແຕກດອກອອກຜົນຢ່າງງົດງາມ

ບັດນີ້ ໄດ້ເວລາອັນເປັນສິລິມຸງຄຸນແລ້ວ ຂ້າພະເຈົ້າຂໍມອບສິ່ງກໍ່ສ້າງທັງໝົດຄວາມຫວັງດີທັງໝົດ ແລະຄວາມທຸ່ມເທທັງໝົດໄວ້ໃຫ້ແກ່ຄູອາຈານນັກຮຽນ ພໍ່ແມ່ພີ່ນ້ອງ ແລະການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງໃນບ້ານນາຟ້າ ເຂດລາດບວກ ກໍຄືເມືອງແປກ ແຂວງຊຽງຂວາງ ໂດຍຊ່ອງໜ້າທ່ານຜູ້ນຳຂັ້ນສູງຂອງພັກ, ຂອງລັດ ແລະທຸກໆທ່ານທີ່ໃຫ້ກຽດມາຮ່ວມ ເປັນສັກຂີພະຍານ ນັບແຕ່ວີນາທີນີ້ເປັນຕົ້ນໄປ

ຂໍສະແດງ ຄວາມດີອົກດີໃຈແລະ ຂອບໃຈນຳແມ່ປ້າ ຄຳເມີງເປັນຢ່າງສູງທີ່ໄດ້ໃຫ້ໂອກາດເຂົ້າຮ່ວມເປັນເຈົ້າພາບມອບຂອງ ຂັວນອັນລ້ຳຄ່າໃຫ້ແກ່ພໍ່ແມ່ປະຊາຊົນແລະລູກຫຼານໃນ 6 ບ້ານຂອງພວກເຮົາ. ຂໍຂອບໃຈການຈັດຕັ້ງທຸກພາກສ່ວນ ພໍ່ແມ່ອ້າຍນ້ອງຄູອາຈານ ແລະລູກຫຼານນັກຮຽນທຸກໆຄົນ.



*ອາຄານ ໂຮງຮຽນ ມັດທະຍົມ ຕອນຕົ້ນ ບ້ານຊອຍນາຟ້າ ຫຼັງໃໝ່*

# ລາຍຊື່ຜູ້ປະກອບທຶນ

| | |
|---|---|
| 1. ບໍລິສັດ ຄຳໄພ ຊະນະ ກໍ່ສ້າງ | = 560,000,000 ກີບ |
| 2. ບໍລິສັດ ພັດທະນາກະສິກຳ ຂາເຂົ້າ-ຂາອອກ ຄົບວົງຈອນກອງທັບ | = 150,000,000 ກີບ |
| 3. ບໍລິສັດ ສີສົມພູ ກໍ່ສ້າງ ສ້ອມແປງເຄຫາສະຖານຈຳກັດ | = 30,000,000 ກີບ |
| ລວມ | = 740,000,000 ກີບ |





# ຄຳເຫັນຂອງ
# ທ່ານ ສົມສະນິດ ວິລິວົງ

**ຫົວໜ້າຫ້ອງການສຶກສາທິການ ແລະກິລາ ເມືອງແປກ**

ໂຮງຮຽນມັດທະຍົມຕົ້ນ ນາຟ້າເປັນເຂດບໍລິຫານ ການສຶກສາ ຊັ້ນມັດທະຍົມຕົ້ນໃຫ້ແກ່ລູກຫຼານປະຊາຊົນ ບ້ານຊອຍນາຟ້າ, ບ້ານຍາບສີ, ບ້ານຫວ້ານ, ບ້ານວຽງຄວນ, ບ້ານວຽງ ແລະນາຄວນ. ໂຮງຮຽນແຫ່ງ ນີ້ໄດ້ຖືກສ້າງຕັ້ງຂຶ້ນມາໂດຍການປະກອບສ່ວນຂອງຊຸມຊົນ ໃນການປຸກສ້າງສ້ອມແປງ ມັນເປັນອາຄານຊົ່ວຄາວ ຫ້ອງຮຽນ ໂຕະຕັ່ງ ບໍ່ໄດ້ມາດຖານ ສິ່ງແວດລ້ອມ ພາຍໃນ ແລະນອກ ຫ້ອງຮຽນບໍ່ສະດວກຕໍ່ການສອນ ການຮຽນຂອງຄູ ແລະນັກຮຽນ ໃນແຕ່ລະປີເວລາໃກ້ຈະໄຂສົກຮຽນຄູອາຈານ ແລະຊາວບ້ານ ຕ້ອງໄດ້ຊຸ້ນຂ້ຽວ ຊອກທຶນຮອນ ຈັດກຳລັງແຮງງານເພື່ອເຮັດການບູລະນະສ້ອມແປງພໍໄດ້ດຳເນີນການຮຽນການສອນ. ການບຳລຸງຮັກສາສ້ອມແປງແຕ່ລະປີຕ້ອງເປັນພາລະຂອງອຳນາດການປົກຄອງ ແລະຊຸມຊົນຕະຫຼອດມາ.

ນັບແຕ່ການເຂົ້າຮ່ວມກິດຈະກຳການກໍ່ສ້າງໂຮງຮຽນມັດທະຍົມສົມບູນອິນແປງ ເຂດຄັງວຽງ ທີ່ໄດ້ຮັບການພັດທະນາອາຄານສະຖານທີ່ ດ້ວຍຄວາມຄິດການເຕົ້າໂຮມທຶນຂອງປ້າຄຳເມີງ ວໍລະຈິດ. ອຳນາດການປົກຄອງ ຄະນະຮັບຜິດຊອບວຽກງານສຶກສາ ແລະຊຸມຊົນ ຈຶ່ງໄດ້ນຳສະເໜີແນວຄວາມຄິດ ເພື່ອຂໍທຶນຮອນປຸກສ້າງອາຄານຮຽນໃຫ້ແກ່ໂຮງຮຽນມັດທະຍົມຕົ້ນນາຟ້າ ໂດຍເຫັນຄວາມສຳຄັນໃນອະນາຄົດຂອງລູກຫຼານ ແລະຊ່ວຍແບ່ງເບົາພາລະຂອງອຳນາດການປົກຄອງ ແລະຊຸມຊົນ ປ້າຄຳເມີງ ວໍລະຈິດ ໄດ້ຕອບສະໜອງການຮ້ອງຂໍຕົກລົງເຫັນດີ ກໍ່ສ້າງອາຄານຮຽນໃຫ້ແກ່ໂຮງຮຽນແຫ່ງນີ້.

ຂ້າພະເຈົ້າ ໄດ້ມີຄວາມຮູ້ສຶກວ່າ ປ້າເປັນຜູ້ສະແຫວງຫາການສ້າງອະນາຄົດທີ່ດີໃຫ້ແກ່ລູກຫຼານຂອງປະຊາຊົນ ທີ່ຈະເປັນຜູ້ສືບທອດພາລະກິດຂອງຊາດໃຫ້ໄປສູ່ຄວາມກ້າວໜ້າຮຸ່ງເຮືອງ ປ້າແມ່ນນັກຮົບປະຕິວັດ ທີ່ຜ່ານການຕໍ່ສູ້ກູ້ຊາດຢ່າງອົງອາດກ້າຫານ ດຸເດືອດ ຂ້ຽວຂາດຈາກເສິກສົງຄາມ ມູນເຊື້ອການເຄື່ອນໄຫວປະຕິວັດຂອງປ້າ ຈິ່ງໃຫ້ຕິດພັນກັບໂຮງຮຽນ ຄູອາຈານທຸກຄົນ ຕ້ອງເອົາໃຈໃສ່ສຶກສາທາງດ້ານຄວາມຮູ້ ຄວາມສາມາດ ແລະດ້ານການເມືອງ ແນວຄິດໃຫ້ແກ່ນັກຮຽນ ເພື່ອຮ່ຳຮຽນເອົາມູນເຊື້ອການເຄື່ອນໄຫວ ແລະແບບແຜນການດຳລົງຊີວິດຂອງປ້າ ແລະກໍຕ້ອງເປັນຜູ້ກະຕັນຍູ, ການຮ່ຳຮຽນເອົາມູນເຊື້ອ ແລະການຮູ້ບຸນຄຸນຕ້ອງສະແດງອອກໃນພຶດຕິກຳ ຕ້ອງຕັ້ງໜ້າຮ່ຳຮຽນ ຕ້ອງເຝິກຝົນຫຼໍ່ຫຼອມຕົນເອງ ຮູ້ທະນຸຖະໜອມ ປົກປັກຮັກສາສະຖານທີ່ການສຶກສາຂອງຕົນ ໃຫ້ມີຄວາມສະອາດຈົບງາມ. ອຳນາດການປົກຄອງຊຸມຊົນ ແລະຜູ້ປົກຄອງນັກຮຽນ ຕ້ອງເຂົ້າໃຈ ແລະເຫັນໄດ້ຄວາມສຳຄັນຂອງວຽກງານສຶກສາ ຕ້ອງໃກ້ຊິດຕິດແທດ, ຊຸກຍູ້ຕິດຕາມການສອນ ການຮຽນ ການເຄື່ອນໄຫວກິດຈະກຳຂອງໂຮງຮຽນ.

ຂ້າພະເຈົ້າ ໃນນາມຜູ້ຮັບຜິດຊອບວຽກງານສຶກສາຂອງເມືອງແປກ ຂໍສຳນຶກໃນຄວາມຕັ້ງໃຈທຸ່ມເທຂອງປ້າ ເພື່ອອະນາຄົດຂອງລູກຫຼານປະຊາຊົນບັນດາເຜົ່າ ໂດຍສະເພາະແມ່ນໃນເມືອງແປກພວກເຮົາ ທີ່ໄດ້ໃຫ້ການຊ່ວຍເຫຼືອພັດທະນາໂຮງຮຽນມັດທະຍົມສົມບູນອິນແປງ, ໂຮງຮຽນມັດທະຍົມສົມບູນໜອງເປັດ (ຊ່ວຍສ້າງເດີ່ນບານ, ໂຕະ, ຕັ່ງ) ໂຮງຮຽນມັດທະຍົມຕົ້ນລາດບວກ, ຊ່ວຍບູລະນະສ້ອມແປງ ແລະກໍ່ສ້າງໂຮງຮຽນມັດທະຍົມຕອນຕົ້ນນາຟ້າຫຼັງນີ້. ອັນນັ້ນຖືເປັນການປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການພັດທະນາການສຶກສາຂອງເມືອງແປກພວກເຮົາ ໂດຍສະເພາະ ແມ່ນການພັດທະນາທາງດ້ານພື້ນຖານໂຄງລ່າງ ແລະຊ່ວຍປັບປຸງຄຸນນະພາບການຮຽນ-ການສອນ,

ຂ້າພະເຈົ້າຂໍຖືໂອກາດນີ້ ອວຍພອນໄຊໃຫ້ແກ່ ປ້າຄຳເມີງ ວໍລະຈິດ ແລະທຸກໆທ່ານທີ່ໃຫ້ການສະໜັບສະໜູນຕໍ່ແນວຄິດຂອງພວກເຮົາ ຈົ່ງມີສຸຂະພາບພະລານາໄມສົມບູນ, ມີຄວາມຜາສຸກ ປະສົບຜົນສຳເລັດໃນທຸກວຽກງານ ແລະໄດ້ຮັບສິ່ງທີ່ ດີງາມສົມດັ່ງຄວາມປາຖະໜາທຸກປະການເທີ້ນ.

# ຄວາມເປັນມາ ຂອງໂຮງຮຽນມັດທະຍົມ ຕອນຕົ້ນ ບ້ານຊອຍນາຟ້າ

ໂຮງຮຽນມັດທະຍົມຕອນຕົ້ນນາຟ້າ ຕັ້ງຢູ່ບ້ານຊອຍ ນາຟ້າ ທິດໃຕ້ຂອງເຂດລາດບວກ, ໃນເມື່ອກ່ອນລູກຫຼານພໍ່ແມ່ປະຊາຊົນ 6 ບ້ານໃນເຂດນີ້ ແມ່ນຫຼວໄປຮຽນຢູ່ໂຮງຮຽນມັດທະຍົມຕົ້ນລາດບວກ ຊຶ່ງໄກຈາກນີ້ປະມານ 7-8 ກິໂລແມັດ ເຮັດໃຫ້ນັກຮຽນມີຄວາມຫຍຸ້ງຍາກຫຼາຍ.

ຮອດສົກຮຽນ 1990-1991 ໂດຍໄດ້ຮັບການອະນຸຍາດຈາກຂັ້ນເທິງ ຄວາມເຫັນດີ ເຫັນພ້ອມ ຂອງອຳນາດການປົກຄອງ ແລະພໍ່ແມ່ປະຊາຊົນ ບ້ານນາຟ້າ ຈຶ່ງໄດ້ມີການສົມທົບຮ່ວມມືກັບ 5 ບ້ານອ້ອມຂ້າງຄື: ບ້ານວຽງ ບ້ານວຽງຄວນ ບ້ານຫວ້ານ ບ້ານຍາບສີ ແລະບ້ານນາຄວນ ນຳພາປະຊາຊົນເຂົ້າປ່າຕັດໄມ້ດ້ວຍຄວາມຫຍຸ້ງຍາກລຳບາກ, ແຕ່ຍ້ອນຄວາມອົດທົນຂອງປະຊາຊົນໃນເຂດບໍລິການຈຶ່ງສາມາດເລື່ອຍໄມ້ດ້ວຍມືເພື່ອໂຮມກັນມາສ້າງເປັນ **"ໂຮງຮຽນມັດທະຍົມຕອນຕົ້ນນາຟ້າ"** ຂຶ້ນເຊິ່ງລວມມີ 3 ຊັ້ນຮຽນ ຄື: ຊັ້ນ ມ1-ມ3 ມີນັກຮຽນ 36 ຄົນ,ຍິງ 15 ຄົນ ແລະຄູອາຈານ 5 ຄົນ.

ສົກຮຽນ 1991-1992 ມີນັກຮຽນ 47 ຄົນ, ຍິງ 22 ຄົນ
ສົກຮຽນ 2001-2002 ມີນັກຮຽນ 186 ຄົນ, ຍິງ 91 ຄົນ
ສົກຮຽນ 2005-2006 ມີນັກຮຽນ 195 ຄົນ, ຍິງ 100 ຄົນ

ເວົ້າລວມແລ້ວ ຈຳນວນນັກຮຽນ ໄດ້ເພີ່ມຂຶ້ນເປັນລຳດັບ ແລະປັດຈຸບັນໄດ້ຂະຫຍາຍເປັນ 4 ຊັ້ນຮຽນຄື: ມ1-ມ4. ຜູ້ອຳນວຍການ ຄົນທຳອິດຂອງໂຮງຮຽນແມ່ນອາຈານ ຄຳກ້ອນ ມີລີວົງ ຕໍ່ຈາກນັ້ນແມ່ນອາຈານ ທອງສາຍ ເພັດມະນີ ຮອດສົກຮຽນ 2009-2010 ທ່ານທອງສາຍ ໄດ້ຍົກຍ້າຍ, ອາຈານນາງ ຄຳມີ ສີດາວັນ ໄດ້ຂຶ້ນເປັນຜູ້ອຳນວຍການໂຮງຮຽນສືບຕໍ່ມາເຖິງປັດຈຸບັນ.

ນັກຮຽນທີ່ຮຽນຈົບໂຮງຮຽນແຫ່ງນີ້ ມີຫຼາຍຄົນໄດ້ເປັນນັກຮຽນເກັ່ງ ແລະໄດ້ໄປຮັບໃຊ້ວຽກງານຂອງພັກ ແລະລັດ ຕົວຢ່າງ: ນາງ ຂັນທອງ ເພັດມະນີ ແລະນາງມີນລາ ສີສົມພອນ ທີ່ເປັນນັກຮຽນເກັ່ງ ແລະປະຕິບັດລະບຽບວິໄນດີ ຫຼັງຈາກຈົບ

 

ນາງ ຂັນທອງ ເພັດມະນີ
ແລະ ນາງ ມິນລາ
ສີສົມພອນ

ມັດທະຍົມຕອນຕົ້ນນາຟ້າ ທັງສອງຄົນໄດ້ໄປຮຽນສ້າງຄູທີ່ວິທະຍາໄລຄູຄັງໄຂ, ຫຼັງຈາກຮຽນຈົບແລ້ວກໍກັບຄືນມາສອນ ແລະພັດທະນາຢູ່ໂຮງຮຽນມັດທະຍົມຕອນຕົ້ນນາຟ້າ ຈົນເຖິງປັດຈຸບັນ. ລວມໄລຍະເວລາການສອນໄດ້ 20 ສົກຮຽນແລ້ວ.

ໃນເມື່ອກ່ອນ ອາຄານໂຮງຮຽນ ປຸກດ້ວຍໄມ້ ມຸງຫຍ້າ ຕໍ່ມາຂັ້ນເທິງຈຶ່ງສະໜອງສັງກະສີ ຈຶ່ງໄດ້ມຸງສັງກະສີ ມາເຖິງປັດຈຸບັນນີ້ ອາຄານຮຽນຜ່ານຫຼາຍຟ້າຫຼາຍຝົນ ກໍເກົ່າແກ່ຊຸດໂຊມຫຼາຍ. ສະນັ້ນໃນແຕ່ລະປີປະລິມານນັກຮຽນເພີ່ມຂຶ້ນ, ຍິ່ງເພີ່ມໃຫ້ອຳນາດການປົກຄອງ ແລະຊຸມຊົນມີຄວາມຫຍຸ້ງຍາກສັບສົນ ແລະຂາດເຂີນທຶນຮອນ, ອີງໃສ່ຄວາມຫຍຸ້ງຍາກຂາດເຂີນອັນນີ້ ທາງການຈັດຕັ້ງ ແລະພາກສ່ວນທີ່ກ່ຽວຂ້ອງ ຈຶ່ງໄດ້ນຳສະເໜີຂໍຄວາມຊ່ວຍເຫຼືອມາຍັງຄອບຄົວຂອງ ລຸງບຸນຍັງ ວໍລະຈິດ ພ້ອມຍາດຕິພີ່ນ້ອງ ແລະກໍໄດ້ຮັບຄວາມຊ່ວຍເຫຼືອຈາກພວກເພິ່ນ ໂດຍໃຫ້ທຶນສ້າງໂຮງຮຽນແຫ່ງໃໝ່ແບບຖາວອນ ໃຫ້ແກ່ໂຮງຮຽນມັດທະຍົມຕອນຕົ້ນນາຟ້າ,

ສະນັ້ນ ໃນສົກຮຽນ 2011-2012 ນີ້ ທາງໂຮງຮຽນມັດທະຍົມຕອນຕົ້ນນາຟ້າເຮົາ ກໍຈະມີໂສມໜ້າໃໝ່ ແລະສະດວກແກ່ການດຳເນີນການຮຽນ ການສອນ, ພວກເຮົາການຈັດຕັ້ງຂອງໂຮງຮຽນ ພ້ອມທັງລູກຫຼານ ນັກຮຽນໃນເຂດນີ້ ຂໍຈາລຶກບຸນຄຸນຂອງພວກທ່ານໄວ້ຢ່າງບໍ່ມີວັນລືມ ແລະຈະນຳໃຊ້ໂຮງຮຽນແຫ່ງນີ້ ໃຫ້ເກີດປະໂຫຍດຢ່າງສູງສົ່ງ ສົມກັບຄວາມຫ່ວງໃຍຂອງປ້າ ແລະ ລຸງ ພ້ອມທັງຍາດຕິພີ່ນ້ອງນັກທຸລະກິດທຸກໆທ່ານ ລວມທັງການຈັດຕັ້ງອຳນາດການປົກຄອງທ້ອງຖິ່ນ ທັງພໍ່ແມ່ປະຊາຊົນເຮົາທີ່ຮ່ວມຊ່ວຍເຫຼືອໃນຄັ້ງນີ້.



# ຂໍຂອບໃຈ ແລະຮູ້ບຸນຄຸນ

**ອາຈານ ຄຳມີ ສີດາວັນ**
**ຜູ້ອຳນວຍການໂຮງຮຽນມັດທະຍົມ ຕອນຕົ້ນ**
**ບ້ານຊອຍນາຟ້າ**

ຂ້າພະເຈົ້າ ຄຳມີ ສີດາວັນ ຜູ້ອຳນວຍການໂຮງຮຽນມັດທະຍົມຕອນຕົ້ນນາຟ້າ ມີຄວາມດີອົກ ດີໃຈຢ່າງລົ້ນເຫຼືອ, ຂໍສະແດງຄວາມກະຕັນຍູກະຕະເວທີເປັນຢ່າງຍິ່ງ ມາຍັງ ປ້າຄຳເມີງ ວໍລະຈິດ ພ້ອມດ້ວຍຄອບຄົວ ແລະຍາດພີ່ນ້ອງທີ່ໄດ້ມີນ້ຳໃຈອັນປະເສີດ ເປັນຫ່ວງເປັນໃຍນຳການສຶກສາຂອງລູກຫຼານ ຈົນຫາອັນປຽບປານບໍ່ໄດ້. ຈຶ່ງສະໜອງທຶນຮອນໃຫ້ແກ່ການສ້າງສາ ແລະພັດທະນາໂຮງຮຽນ ມັດທະຍົມຕອນຕົ້ນ ບ້ານຊອຍນາຟ້າ.

ຫົວໃຈອັນປະເສີດຍອດຍິ່ງ ແລະເສຍສະຫຼະຂອງປ້າ ທີ່ໄດ້ຝາກໄວ້ໃຫ້ແກ່ລູກຫຼານ ເຂດລາດບວກ ເວົ້າລວມ ເວົ້າສະເພາະແມ່ນ 6 ບ້ານ ຄື: ບ້ານນາຟ້າ, ບ້ານຍາບສີ, ບ້ານຫວ້ານ, ບ້ານວຽງຄວນ, ບ້ານວຽງ ແລະບ້ານນາຄວນນັ້ນ ປຽບເໝືອນສາຍຝົນທີ່ໂຮຍລົງໃສ່ເຂົ້າໃນນາທີ່ກຳລັງຕັ້ງຕົ້ນ ໃຫ້ຂຽວງາມ ແຕກດອກຖອກຮວງ ແລະສຸກເຫຼືອງ, ເຮັດໃຫ້ລູກຫຼານມີສະຖານທີ່ສຶກສາທີ່ດີ, ມີໂຮງຮຽນງາມ, ມີບ່ອນຫຼິ້ນກິລາ ແລະອື່ນໆ ກໍຈະເຮັດໃຫ້ໜໍ່ແໜງຂອງພວກເຮົາເຕີບໃຫຍ່ຂຶ້ນດ້ວຍຄວາມຮູ້ສະຕິປັນຍາ.

ເກືອບ 20 ກວ່າປີແລ້ວ ທີ່ພວກເຮົາມີຄວາມຝັນ ແລະຄອງຄອຍຢາກໄດ້ໂຮງຮຽນຫຼັງໃໝ່ເພື່ອໃຫ້ນັກຮຽນໄດ້ສຶກສາຮ່ຳຮຽນ. ຄູອາຈານແລະນັກຮຽນມີຄວາມຫວັງຕໍ່ອາຄານຮຽນຫຼັງນີ້ຫຼາຍຈົນຫາອັນປຽບບໍ່ໄດ້ ເມື່ອໄດ້ອາຄານຫຼັງໃໝ່ນີ້ແລ້ວ ສິ່ງສຳຄັນພວກເຮົາຈະເພີ່ມທະວີເອົາໃຈໃສ່ສິດສອນ-ຮ່ຳຮຽນ, ໃຫ້ສົມກັບຄວາມເປັນຫ່ວງເປັນໃຍ ແລະເອົາໃຈໃສ່ຂອງປ້າ ແລະຜູ້ໃຫ້ທຶນທັງຫຼາຍ-ຄູອາຈານຕ້ອງສອນໃຫ້ເກັ່ງ-ນັກຮຽນຕ້ອງຮຽນດີ-ພ້ອມກັນປົກປັກຮັກສາອາຄານຫຼັງໃໝ່ໃຫ້ສະອາດຈົບງາມ ຮັກສາຄວາມສະຫງົບປອດໄພ ໃຫ້ຢູ່ຄຽງຂ້າງກັບພວກເຮົາຕະຫຼອດການະນານ.



ເນື່ອງໃນໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງສົ່ງ ແລະບໍ່ມີວັນຈະ ຫຼົງລືມຕໍ່ຄວາມຕັ້ງໜ້າ, ຄວາມບໍລິສຸດໃຈຂອງຜູ້ໃຫ້ ການປະກອບສ່ວນພັດທະນາ ປຸກສ້າງອາຄານໂຮງ ຮຽນແຫ່ງນີ້. ຂ້າພະເຈົ້າຂໍຈົດຈຳ ແລະບັນທຶກໄວ້ໃນ ປຶ້ມປະຫວັດສາດຂອງໂຮງຮຽນຕະຫຼອດໄປ.

*ອາຈານ ວຽງຄຳ ຊຸນສີວົງ*
*ຮອງອຳນວຍການໂຮງຮຽນ*
*ມັດທະຍົມຕົ້ນ ນາຟ້າ*

ຂໍອວຍໄຊໃຫ້ພອນແດ່ຄອບຄົວປ້າ ຄຳເມິງ ວໍລະຈິດ ແລະຍາດຕິພີ່ນ້ອງ ຜູ້ໃຈບຸນຈົ່ງອາຍຸໝັ້ນ ຂວັນຍືນ ເຂັ້ມແຂງຮັ່ງມີລ້ຳລວຍ ສົມດັ່ງຄຳປາຖະໜາ ຂອງທ່ານທຸກປະການເທີ້ນ.



24 / VII
ບ້ານຈ້າໝາຍ

*ນາງ ເພັດສະໝອນ ທະລາວົງ*
*ຄູສອນວິຊາພາສາລາວ-ວັນນະຄະດີ ມ 4.*
*ຮອງຫົວໜ້າໜ່ວຍງານກິດຈະກຳ ນັກຮຽນ*



*ພອນສະໄໝ ຈັນທະມາໄລຄຳ*
*ຄູສອນວິຊາພາສາລາວ-ວັນນະຄະດີ ຫ້ອງ ມ.2*
*ຮອງຫົວໜ້າໜ່ວຍງານວິຊາການໂຮງຮຽນມັດທະຍົມ*
*ຕອນຕົ້ນ ນາຟ້າ*



## ນາງ ອ່ອນຈັນ ສີສົມພອນ

**ຄູສອນວິຊາທຳມະຊາດ + ຊີວະສາດ ຊັ້ນ ມ. 3**
**ຫົວໜ້າໜ່ວຍບໍລິຫານ, ຫົວໜ້າສະຫະພັນແມ່ຍິງ**
**ໂຮງຮຽນມັດທະຍົມຕອນຕົ້ນນາຟ້າ**

ໂຮງຮຽນຂອງພວກເຮົາ ຢູ່ຫ່າງໄກຕົວເມືອງ ເປັນໂຮງຮຽນນ້ອຍ ຕັ້ງຂຶ້ນມາໄດ້ຍ້ອນເຫື່ອແຮງຂອງ ປະຊາຊົນ ອາຄານບໍ່ໄດ້ມາດຖານ ເຮັດໃຫ້ການສອນ ການຮຽນພົບຄວາມຫຍຸ້ງຍາກຫຼາຍດ້ານ ມາຮອດໂອກາດນີ້ ເຫັນວ່າໂຮງຮຽນພວກເຮົາມີໃບໜ້າອັນໃໝ່ ຍ້ອນໄດ້ຮັບນ້ຳຈິດນ້ຳໃຈ ແລະການອຸປະຖຳຄ້ຳຊູ ຂອງລຸງ ບຸນຍັງ + ປ້າຄຳເມີງ ວໍລະຈິດ ພ້ອມດ້ວຍຍາດພີ່ນ້ອງ ຜູ້ໃຈບຸນທັງຫຼາຍທີ່ໄດ້ມາຊ່ວຍສ້າງສາພັດທະນາໂຮງຮຽນກາຍເປັນໂຮງຮຽນແບບຖາວອນ.

ຂ້າພະເຈົ້າ ພ້ອມດ້ວຍຄູ ແລະນັກຮຽນ ຂໍໃຫ້ຄຳໝັ້ນສັນຍາວ່າ ຈະພ້ອມກັນຕັ້ງໜ້າສິດສອນ ແລະຮ່ຳຮຽນເຮັດໃຫ້ຄຸນນະພາບການສຶກສາໃນຂົງເຂດນີ້ນັບມື້ກ້າວໜ້າ ແລະຈະສ້າງເຍົາວະຊົນໃຫ້ເປັນໜໍ່ແໜງທີ່ດີຂອງປະເທດຊາດ ພ້ອມກັນຈາລຶກບຸນຄຸນຂອງພວກທ່ານໄວ້ຕະຫຼອດໄປ.

*ປ້າເຮີຍ ບຸນຄຸນຂອງປ້ານີ້ ໜັກກວ່າພູຜາ ແທ້ໄດ*
*ຫາແນວຊາມາແທນ ປຽບປານບໍ່ມີໄດ້*
*ປ້າຄືບັນໄດແກ້ວ ຂົວຄຳພວກຫຼານໄຕ່*
*ຄືຂັ້ນໄດກ່າຍຂຶ້ນ ສະຫວັນຟ້າບ່ອນເຮືອງ ພຸ້ນນາ*
*ອາຈານ + ນັກຮຽນ ເຮົາຂໍຍໍມືໄຫວ້ ກົ້ມກາບບຸນຄຸນ ກ່ອນເນີ*
*ປ້າຜູ້ມີຄຸນຫຼາຍ ເລີດປະມານເຫຼືອລົ້ນ*
*ເຕົ້າໂຮມທຶນຫຼາຍດ້ານ ໂຮມກັນມາຊິດຊ່ວຍ*
*ໃຫ້ຊາວຝູງພີ່ນ້ອງ ອາໄສຊົ້ນເພິ່ງພາ ແທ້ນາ*
*ບັດນີ້ ຄູອາຈານທຸກທົ່ວໜ້າ ຂໍຮັບປາກຄຳສາບານ ກ່ອນເນີ*
*ໄດ້ອາຄານຫຼັງດີ ຈະຄ່ອຍພຽນຖະໜອມໄວ້*
*ບໍ່ໃຫ້ໃຜມາມ້າງ ເພພັງຫຼຸບຫຼົ່ມ*
*ຈະຖະໜອມຮັກໄວ້ ເລິງເລື້ອຍບໍ່ຫຼ່າສິ ນັ້ນແລ້ວ*



**ທ່ານ ຄຳກ້ອນ ມີລີວົງ**
**ພະນັກງານບຳນານ**
ອະດີດ ຫົວໜ້າອຳນວຍການໂຮງຮຽນ
ມັດທະຍົມຕົ້ນນາຟ້າ

ຂ້າພະເຈົ້າ ຄຳກ້ອນ ມີລີວົງ ພະນັກງານບຳນານ ອະດີດ ຫົວໜ້າອຳນວຍການໂຮງຮຽນມັດທະຍົມຕອນຕົ້ນ ນາຟ້າ ໃນໄລຍະປີ 1990-1998

ໃນໂອກາດມອບ-ຮັບອາຄານຮຽນໃໝ່ຫຼັງນີ້, ຂ້າພະເຈົ້າເຊິ່ງເປັນຜູ້ທີ່ໄດ້ມາປະຈຳການ ແລະ ເປັນຜູ້ອຳນວຍການ ຜູ້ທຳອິດໃນໂຮງຮຽນແຫ່ງນີ້. ຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ທ່ານນາງ ຄຳເບີງ ເຊິ່ງແມ່ນຄອບຄົວຄະນະນຳຂັ້ນເທິງ ໄດ້ມີນ້ຳໃສໃຈຈິງ ໄດ້ສະຫຼະກ້ອນທຶນອັນມະຫາສານມາສ້າງໂຮງຮຽນຫຼັງນີ້ຂຶ້ນ. ດັ່ງນັ້ນ ຂ້າພະເຈົ້າໃນນາມ ຄະນະນຳໂຮງຮຽນຜ່ານມາ ຂໍຂອບໃຈນຳທ່ານຜູ້ມີຈິດໃຈເອື້ອເຟື້ອ ເຜື່ອແຜ່ມາໃຫ້ລູກຫຼານ ແລະຊາວບ້ານແຫ່ງນີ້ ເພື່ອໃຫ້ມີຄວາມສະດວກ, ຈະເລີນກ້າວໜ້າໄປເລື້ອຍໆ ແລະຫວັງຢ່າງຍິ່ງວ່າໃນຕໍ່ໜ້າກໍຂໍໃຫ້ທ່ານຈົ່ງຊ່ວຍໃກ້ຊິດດູແລໂຮງຮຽນແຫ່ງນີ້ອີກຕໍ່ໄປ. ທ້າຍສຸດນີ້ ຂໍອວຍພອນໄຊໃຫ້ແດ່ທ່ານ ຈົ່ງມີສຸຂະພາບ ເຂັ້ມແຂງ, ພະລານາໄມສົມບູນ ສຳເລັດທຸກໜ້າທີ່ການງານທຸກປະການເທີ້ນ.

ຂໍຂອບໃຈ ນາຟ້າ, ວັນທີ 4/5/2012





## ແກ່ນແກ້ວ ສີທະນົນທອງ

**ເລຂາພັກຮາກຖານ,**
**ຫົວໜ້າກຸ່ມບ້ານພັດທະນາລາດບວກ.**
**ອະດີດຄູສອນ ຢູ່ໂຮງຮຽນ ມ.ຕົ້ນລາດບວກ,**

ຂ້າພະເຈົ້າ ມີຄວາມຮູ້ສຶກພາກພູມໃຈເປັນຢ່າງສູງ ທີ່ໄດ້ຕາງໜ້າໃຫ້ຄະນະພັກຮາກຖານ, ອຳນາດການປົກຄອງທ້ອງຖິ່ນເວົ້າລວມ, ເວົ້າສະເພາະແມ່ນໃນຈຳນວນ 6 ບ້ານ ພ້ອມຄູ-ອາຈານ ແລະນັກຮຽນທັງໝົດ ທີ່ຂຶ້ນກັບເຂດບໍລິການຂອງໂຮງຮຽນຂອງມັດທະຍົມຕອນຕົ້ນ ນາຟ້າ ກຸ່ມລາດບວກ. ກ່ອນອື່ນໝົດ ຂ້າພະເຈົ້າຂໍສະແດງ ຄວາມຮູ້ບຸນຄຸນ ແລະຂອບໃຈຢ່າງສູງຕໍ່ ປ້າຄຳເມິງ ວໍລະຈິດ ພ້ອມດ້ວຍຄອບຄົວແລະຜູ້ໃຫ້ທຶນທຸກໆ ຄົນທີ່ມີນ້ຳໃຈອັນປະເສີດ ໄດ້ມາປະກອບສ່ວນສ້າງໂຮງຮຽນມັດທະຍົມຕົ້ນນາຟ້າ.

ທົ່ວກຸ່ມລາດບວກ ມີ 16 ບ້ານ ມີ 19 ໜ່ວຍພັກ 560 ຫຼັງຄາເຮືອນ ພົນລະເມືອງທັງໝົດ 3,402 ຄົນ, ຍິງມີ 1,657 ຄົນ, ການຕັ້ງພູມລຳເນົາຂອງປະຊາຊົນກະແຈກກະຈາຍ ບ້ານຫຼາຍຍາຍຫ່າງຕາມພື້ນທີ່ໄຮ່ນາຮົ້ວສວນ ບໍ່ສາມາດໂຮມບ້ານນ້ອຍເຂົ້າເປັນບ້ານໃຫຍ່ໄດ້ ການດຳລົງຊີວິດຂອງປະຊາຊົນຍັງເພິ່ງພາອາໄສທຳມະຊາດ. ດ້ວຍຄວາມຫ່ວງໃຍ ແລະເອົາໃຈໃສ່ຂອງພະແນກສຶກສາແຂວງ ແລະຫ້ອງການສຶກສາປະຈຳເມືອງໆແປກ ພ້ອມກັບຊຸມຊົນໃນ 6 ບ້ານ ໂຮງຮຽນມັດທະຍົມຕົ້ນ ນາຟ້າ ຖືກສ້າງຂຶ້ນເມື່ອປີ 1990 ເປັນໂຮງຮຽນຊັ້ນມັດທະຍົມຕອນຕົ້ນແຫ່ງທີ 2 ຂອງກຸ່ມລາດບວກ ທັງນີ້ກໍເພື່ອປະຕິບັດຕາມແຜນຍຸດທະສາດຂອງການສຶກສາຂະຫຍາຍໂຮງຮຽນໄປສູ່ຊົນນະບົດ ຮອງຮັບການຂະຫຍາຍຕົວຂອງພົນລະເມືອງ ແລະເດັກໃນເກນອາຍຸເຂົ້າຮຽນ. ດ້ານໜຶ່ງກໍເພື່ອແກ້ໄຂຄວາມຫຍຸ້ງຍາກຂອງພໍ່ແມ່ປະຊາຊົນ ແລະນັກຮຽນ ທີ່ຢູ່ຫ່າງໄກຈາກໂຮງຮຽນມັດທະຍົມຕົ້ນລາດບວກ ເຖິງ 7-8 ກິໂລແມັດເສັ້ນທາງໄປມາບໍ່ສະດວກ.

ອາຄານໂຮງຮຽນ ທີ່ປຸກສ້າງນັ້ນ ເວົ້າລວມແລ້ວ ເປັນພຽງພື້ນຖານ ເປັນເສົາໄມ້ມອກຕອກໄມ້ຫຼົ້ມ ບໍ່ແໜ້ນໜາຖາວອນເທົ່າທີ່ຄວນ ຍ້ອນຂາດເຂີນງົບປະມານ ແລະ

ທຶນຮອນ ໃນແຕ່ລະປີອຳນາດການປົກຄອງ ແລະພໍ່ແມ່ປະຊາຊົນເຮົາ ກໍໄດ້ພະຍາຍາມປະກອບສ່ວນ ປັບປຸງປົວແປງ ຕາມກຳລັງຊັບກຳລັງເຫື່ອແຮງ ແລະສະຕິປັນຍາມາເປັນລຳດັບ ແຕ່ເນື່ອງຈາກນຳໃຊ້ຜ່ານຫຼາຍຟ້າຫຼາຍປີ ມາເຖິງປັດຈຸບັນໃນທົ່ວເມືອງແປກ ກໍເຫັນວ່າໂຮງຮຽນແຫ່ງນີ້ ຊຸດໂຊມກວ່າໝູ່

ບັດນີ້ຍ້ອນຄວາມເອົາໃຈໃສ່ຈາກພັກ-ລັດຖະບານເວົ້າລວມ, ເວົ້າສະເພາະແມ່ນຄວາມຫ່ວງໃຍຂອງ ປ້າຄຳເມິງ ວໍລະຈິດ ພ້ອມຄອບຄົວ ແລະຜູ້ໃຈບຸນ ປະກອບທຶນທັງຫຼາຍ ທີ່ເຫັນໄດ້ຄວາມໝາຍຄວາມສຳຄັນ ຂອງວຽກງານສຶກສາ ຈຶ່ງໄດ້ເຕົ້າໂຮມທຶນຮອນເພື່ອມາພັດທະນາຍົກລະດັບສ້າງໂຮງຮຽນ ໃຫ້ມີອາຄານຖາວອນຈົບງາມເປັນພື້ນຖານເຮັດໃຫ້ການຮຽນການສອນກ້າວເຂົ້າສູ່ຄຸນນະພາບໃໝ່.

ຂ້າພະເຈົ້າ ຈະນຳເອົາຜົນງານ ແລະນ້ຳຈິດນ້ຳໃຈ ອັນປະເສີດນີ້ ໄປເຜີຍແຜ່ສຶກສາໃຫ້ການຈັດຕັ້ງ ແລະພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວກຸ່ມມີຄວາມຮັບຮູ້ຕໍ່ຜົນງານດັ່ງກ່າວ. ອີກດ້ານໜຶ່ງກໍຈະໄດ້ສຶກສາໃຫ້ຊຸມຊົນ, ຄູອາຈານ, ນັກຮຽນ ໃນໂຮງຮຽນນີ້ເຂົ້າໃຈໃນການປົກປັກຮັກສາ ແລະນຳໃຊ້ຮັກສາຄວາມສະອາດໃຫ້ມີຄວາມຍືນນານ. ຂໍຈົດຈຳ ຈາລຶກຄຸນງາມຄວາມດີ ຄວາມຫ່ວງໃຍຂອງປ້າ ພ້ອມດ້ວຍຄອບຄົວ ແລະຜູ້ໃຫ້ທຶນໄວ້ໃນຄວາມຊົງຈຳ ແລະປຶ້ມປະຫວັດສາດຂອງກຸ່ມບ້ານໄວ້ຊົ່ວກາລະນານ.



**ນາງ ຫຼ້າທອງສີ**
**ຫົວໜ້າສະຫະພັນແມ່ຍິງ**
**ກຸ່ມພັດທະນາເຂດລາດບວກ ເມືອງແປກ**

ຂ້າພະເຈົ້າຕາງໜ້າໃຫ້ເອື້ອຍນ້ອງແມ່ຍິງເຂດລາດບວກ ຂໍສະແດງຄວາມຮູ້ບຸນຄຸນນຳ ປ້າຄຳເມິງ ພ້ອມດ້ວຍຄອບຄົວ ແລະຍາດພີ່ນ້ອງ ທີ່ໄດ້ມາຊ່ວຍສ້າງສາພັດທະນາໂຮງຮຽນມັດທະຍົມຕົ້ນ ບ້ານຊອຍນາຟ້າໃຫ້ຈະເລີນກ້າວໜ້າ ແລະ ກຸ່ມພັດທະນາລາດບວກໃຫ້ເຂັ້ມແຂງ ພວກເຮົາຈະປະກອບສ່ວນຍົກຄຸນນະພາບຂອງການສຶກສາໃຫ້ດີຂຶ້ນ ຂ້າພະເຈົ້າຂໍສະແດງຄວາມດີໃຈຢ່າງລົ້ນເຫຼືອ ແລະໃຫ້ພວກທ່ານທັງຫຼາຍມີຄວາມຜາສຸກ ມີອາຍຸໝັ້ນຍືນຕະຫຼອດໄປ.



ຄຳຜິວ ສິດທິໄຊ
ອະດີດເລຂາພັກ
ບ້ານຊອຍນາຟ້າ



ອຳພອນ ອຸດົມມົນ
ອະດີດສະມາຄົມ
ພໍ່ແມ່ນັກຮຽນ



ນາງ ທອງຈັນ ບັນທະວົງ
ອະດີດຫົວໜ້າສະຫະພັນ
ແມ່ຍິງ ບ້ານນາຟ້າ



ສົມພອນ
ນາຍບ້ານ ບ້ານວຽງ



ບົວລີ ອິນທະວົງ
ນາຍບ້ານ ບ້ານວຽງຄວນ



ຈັນສົມ
ນາຍບ້ານ ບ້ານຫວ້ານ



ບຸນຈັນ ຫຼວງມີໄຊ
ນາຍບ້ານ ບ້ານ ຍາບສີ

ວັນສົມ
ນາຍບ້ານ ບ້ານນາຄວນ

# ມີຄວາມດີໃຈ ແລະ ຂໍຈາລຶກບຸນຄຸນ

ພວກເຮົາໃນນາມເລຂາພັກ, ອະດີດເລຂາພັກ, ອະດີດສະມາຄົມ ພໍ່ແມ່ນັກຮຽນ ອະດີດ ຫົວໜ້າສະຫະພັນແມ່ຍິງ ແລະນາຍບ້ານທຸກໆຄົນ ຕ່າງກໍ ມີຄວາມ ດີໃຈ ແລະຂໍຂອບໃຈເປັນຢ່າງຍິ່ງຕໍ່ປ້າຄຳເມີງວໍລະຈິດພ້ອມຄອບຄົວທີ່ໄດ້ມີຄວາມເປັນຫວ່ງເປັນໃຍ ນຳລູກຫຼານ ທາງບ້ານຂອງພວກຂ້າພະເຈົ້າ ໃນການສຶກສາຮ່ຳຮຽນ.

ພວກຂ້າພະເຈົ້າຂໍຈາກລຶກບຸນຄຸນ ແລະຈະນຳພາລູກຫຼານ ນັກຮຽນ ພ້ອມທັງຄູອາຈານທຸກຄົນ ນຳໃຊ້ໂຮງຮຽນແຫ່ງນີ້ໃຫ້ເກີດປະໂຫຍດສູງສຸດໃຫ້ສົມກັບຄວາມເປັນຫ່ວງເປັນໃຍຂອງແມ່ປ້າພ້ອມຄອບຄົວ ຍາດຕິພີ່ນ້ອງ ແລະທຸກໆຄົນ ທີ່ໄດ້ເຕົ້າໂຮມຮ່ວມນ້ຳໃຈໃຫ້ເປັນທຶນຮອນແກ່ລູກຫຼານ,ຄົງບໍ່ມີຫຍັງປື້ມປິຕິໄປກວ່ານີ້ອີກແລ້ວ.

ຂໍຂອບໃຈອີກເທື່ອໜຶ່ງ, ແລະຂໍອວຍພອນໃຫ້ແມ່ປ້າ ພ້ອມຄອບຄົວ ຍາດຕິພີ່ນ້ອງ ແລະທຸກໆຄົນ ຈົ່ງມີສຸຂະພາບເຂັ້ມແຂງ ມີຄວາມສຸກ ຄວາມຈະເລີນ ປະສົບຜົນສຳເລັດຕາມຄວາມມຸ່ງມາດປາດຖະໜາ.





# ດີໃຈຫຼາຍ

**ດວງຈັນ ຈັນທະວົງ**
**ເລຂາພັກ ບ້ານຊອຍນາຟ້າ**

ເຮົາເອງເລີ່ມແຕ່ເຕີບໃຫຍ່ຂຶ້ນມາ ແມ່ນໄດ້ດຳລົງຊີວິດ ຮ່ວມຢູ່ກັບບ້ານຊອຍນາຟ້າມາຕະຫຼອດ ພ້ອມໄດ້ຮັບໜ້າທີ່ເປັນການນຳ, ພວກເຮົາສຸດທີ່ເປັນຫ່ວງນຳວຽກງານການສຶກສາ ເພາະອາຄານ ຂອງໂຮງຮຽນນາຟ້ານີ້ແມ່ນເກົ່າແກ່ແລະຊຸດໂຊມກວ່າທຸກໆ ແຫ່ງ. ແຕ່ໂຊກດີທີ່ສຸດຍັງມີຜູ້ໃຈບຸນອັນປະເສີດຄື: ທ່ານລຸງບຸນຍັງ ແລະ ປ້າຄຳເມີງ ວໍລະຈິດ ໄດ້ເຕົ້າໂຮມທຶນ ຮອນອັນລ້ຳຄ່າມາຊ່ວຍພວກເຮົາ, ທັງອຳນາດ ການປົກຄອງ ພ້ອມປະຊາຊົນກໍໄດ້ສົມ ທົບເຫື່ອແຮງຈິດໃຈ ແລະວັດຖຸສິ່ງຂອງຕາມຄວາມສາມາດ.

ຕໍ່ທຶນຮອນອັນປະເສີດນີ້ ເຮົາເອງພ້ອມດ້ວຍພໍ່ແມ່ປະຊາຊົນ ແລະລູກຫຼານຂໍສະແດງ ຄວາມຮູ້ບຸນຄຸນ ແລະຂອບໃຈ ເປັນຢ່າງລົ້ນເຫຼືອນຳ ລຸງ ແລະປ້າ ພ້ອມດ້ວຍຍາດ ຕິພີ່ນ້ອງທີ່ມີຄວາມຫ່ວງໃຍ ແລະນ້ຳໃຈອັນສູງສົ່ງ ທີ່ໄດ້ຊ່ວຍໃຫ້ລູກຫຼານພວກເຮົາມີບ່ອນຮ່ຳຮຽນຢ່າງຖາວອນ, ທ້າຍນີ້ຂໍໃຫ້ພວກທ່ານຈົ່ງປະສົບແຕ່ຄວາມສຸກກາຍສະບາຍໃຈ ທຸກປະການເທີ້ນ.

ຜົນງານການ ປະກອບສ່ວນຂອງຊຸມຊົນ

- ຂຸດຂຸມ 210 ແຮງງານ
- ປະກອບໄມ້ຄ້ຳແບບ 450 ລຳ
- ເອົາດິນເຂົ້າໂຮງຮຽນ 500 ແຮງງານ
- ແປງດິນອ້ອມໂຮງຮຽນ 3 ຄັ້ງ 320 ແຮງງານ
- ປັບໜ້າດິນ 130 ແຮງງານ
- ນອກນັ້ນຍັງໄດ້ປະກອບສ່ວນເຂົ້າປາອາຫານໃຫ້ແກ່ກຳມະກອນເຊັ່ນ: ແຕ່ລະບ້ານເຂົ້າຢ້ຽມຢາມ 6 ຄັ້ງ ມີຄື: ເຂົ້າ, ເປັດ, ໄກ່, ຜັກ, ແຈ່ວບອງ ແລະອື່ນໆ ຈຳນວນ 200 ກວ່າກິໂລ. ຄິດເປັນມູນຄ່າ



# ພູມໃຈຕໍ່ການອຸທິດ, ຖະໜອມຮັກອາຊີບທີ່ເປັນຄູ

## ປະຈຳຢູ່ໂຮງຮຽນບ້ານຊອຍ-ນາຟ້າ

ສົມວັນດີ ນາຖາວົງ
ຄູສອນຜູ້ທຳອິດປະຈຳບ້ານຊອຍ-ນາຟ້າ
ປັດຈຸບັນຮອງເຈົ້າຄອງນະຄອນຫຼວງວຽງຈັນ

ບັນດາທ່ານທີ່ເຄົາລົບ ພໍ່ແມ່, ອ້າຍນ້ອງ ບ້ານນາຟ້າ ທີ່ນັບຖື ແລະຮັກແພງ

ເມື່ອຫວນຄືນອາຍຸພຽງ 16 ຂວບ ທີ່ໄດ້ຮັບການສຶກສາຮ່ຳຮຽນ ແລະ ເສັງຈົບຢູ່ໝວດໂຮງຮຽນບ້ານຄາຍແຫ່ງນີ້, ຊີວິດຂອງຂ້າພະເຈົ້າ ຈົດຈຳບໍ່ລືມ ຜູ້ທີ່ມີຊື່ສຽງແຫ່ງດວງວິນຍານຄູ ທ່ານຄຳພວງ ດາລາແສນ ແມ່ນອາຈານທີ່ສອນດີ, ສອນເກັ່ງ ທັງເປັນແວ່ນແຍງແຫ່ງມານະຈິດທີ່ມີສະເໜ່, ນອກຈາກສິດສອນໃຫ້ນັກຮຽນມີຄວາມຮູ້ ວິທະຍາສາດແລ້ວ ຍັງຊອກວິທີກຳຈິດຕະສາດ ແລະບຳລຸງສ້າງໃຫ້ມີພອນສະຫວັນ ແຫ່ງຄວາມມັກຮັກອາຊີບເລີ່ມແຕ່ຫົວທີ, ໃນຊີວິດພວມຮ່ຳຮຽນ ຂ້າພະເຈົ້າໄດ້ຮັບການເບິ່ງແຍງຄືລູກຫຼານໃນຄອບຄົວ, ນອກນັ້ນ ຍັງໄດ້ຮັບການບຳລຸງດ້ານແນວຄິດເປັນພິເສດໂດຍການມອບໝາຍຈາກທ່ານ ໃຫ້ເປັນຜູ້ຊ່ວຍເພື່ອນນັກຮຽນທີ່ຮຽນຮ່ວມຫ້ອງດຽວກັນຮັບຮູ້, ເຂົ້າໃຈບົດຮຽນບໍ່ໄດ້ດີ ດ້ວຍການອະທິບາຍ ຊີ້ແຈງຄືນການສິດສອນຂອງຄູພ້ອມທັງຊ່ວຍແນະນຳວິທີແກ້ບົດເຝິກຫັດວິຊາຕ່າງໆ, ຈາກພຶດຕິກຳຄືແນວນີ້ ຊີວິດຄ່ອຍໆເຈືອຈານ ແລະມັກຮັກຢາກເປັນຄູ.

ວັນທີ 15/5/1965 ຂ້າພະເຈົ້າໄດ້ສະໝັກເຂົ້າເປັນຄູຢູ່ໂຮງຮຽນໝວດລາດບວກ ໂດຍ ທ່ານ ຄຳກິ່ງ ນັນທະວົງ ຫົວໜ້າໝວດໂຮງຮຽນອະນຸຍາດຮັບເອົາ ພ້ອມທັງມອບໝາຍໃຫ້ສິດສອນທົດລອງປະຈຳຫ້ອງ ປ.3, ຢູ່ນີ້ບໍ່ດົນພຽງ 3 ເດືອນ ທ່ານໄດ້ລຸລ່ວງໃຫ້ໄປສິດສອນປະຈຳຢູ່ບ້ານຊອຍ-ນາຟ້າ ເປັນໂຮງຮຽນເປີດຂຶ້ນແຫ່ງທຳອິດ ແລະໃຫ້ຂ້າພະເຈົ້າສອນພຽງຄົນດຽວ ຊຶ່ງໂຮງຮຽນແຫ່ງນີ້ມີທັງ ປ.1, ປ.2 ແລະປ.3.



*ທ່ານ ນາງຄຳອອນ, ທ່ານ ຄຳໄພ ພ້ອມພັນລະຍາ, ທ່ານນາງອ່ອນຈັນ ແລະ ທ່ານສົມວັນດີ*

ຂ້າພະເຈົ້າຮູ້ສຶກພູມໃຈຕໍ່ໜ້າທີ່ມອບໝາຍອັນມີກຽດ ແຕ່ກໍຮູ້ສຶກງົ່ງຮຽງຕໍ່ວຽກງານມອບໝາຍມັນໃຫຍ່ຫຼວງ ໃນເມື່ອທຽບໃສ່ຄວາມສາມາດ, ປະສົບການຂອງຕົນເອງ, ຂ້າພະເຈົ້າ ໃນຖານະຄົນບ້ານດຽວກັບ ທ່ານ ຄຳກິ່ງ ມັນທະວົງ ຖືເພິ່ນຄືອ້າຍຄິງໆ ຈິ່ງຕອບວ່າ ນ້ອງຂໍສອນຢູ່ບ່ອນເກົ່າ ແລະຮໍ່າຮຽນເອົາບົດຮຽນຢູ່ນີ້ຕື່ມກ່ອນໄດ້ບໍ່? ເພາະນ້ອງຍັງເປັນຄູໃໝ່ ບົດຮຽນນຳພາຈັດຕັ້ງໂຮງຮຽນກໍບໍ່ທັນມີ, ທ່ານ ຄຳກິ່ງ ມັນທະວົງ ໄດ້ຕິດຕາມ ພ້ອມທັງເວົ້າວ່າ ວັນທີ 20/8/1965 ໃຫ້ກຽມຕົວສາ ອະນຸຍາດໃຫ້ເມືອຢາມບ້ານ 5 ວັນ, ວັນທີ 25/8/1965 ນີ້ ອ້າຍພ້ອມຄະນະຈະໄປສົ່ງ ພ້ອມທັງຮ່ວມພິທີເປີດໂຮງຮຽນເປັນທາງການ ຢູ່ບ້ານຊອຍ-ນາຟ້າ ອ້າຍໄດ້ແຕ່ງໃຫ້ຜູ້ໄປກຽມຄົບຖ້ວນກ່ອນແລ້ວ 2 ອາທິດ ອ້າຍເຊື່ອໝັ້ນນ້ອງ ເພາະນ້ອງກໍເປັນຄູສອນປະຊາສຶກສາຢູ່ເຂດຕາແສງຄາຍ ເປັນຕົ້ນສອນປະຈຳເຂດບ້ານຄັງວຽງ 1 ປີ ພໍ່-ແມ່ປະຊາຊົນກໍຍ້ອງຍໍຊົມເຊີຍວ່າສອນໄດ້ດີຫຼາຍ. ພ້ອມນີ້ນ້ອງມາສອນ ປ.3 ທົດລອງ 3 ເດືອນເຫັນວ່າມີຄວາມສາມາດທີ່ດີ (ທັງຮຽນທັງຄຸ້ມຄອງໂຮງຮຽນໄປພ້ອມໆກັບການຊອກຮູ້ຮໍ່າຮຽນນຳປະຊາຊົນ, ປະຊາຊົນຈະເປັນຜູ້ຊ່ວຍເຫຼືອ ເຮັດໃຫ້ເຮົາມີຜົນງານ ແລະເຕີບໃຫຍ່ຂຶ້ນເລື້ອຍໆ).



ວັນທີ 25/8/1965 ຊີວິດໄດ້ມາຮ່ວມພິທີຍິ່ງໃຫຍ່ໂດຍບໍ່ຄາດຝັນ ບັນຍາກາດແຫ່ງການຕ້ອນຮັບຂອງພໍ່-ແມ່, ນ້ອງນັກຮຽນຄັບຄາໜາແໜ້ນ, ປະທັບໃຈ ແລະ ສະຫງົບອົບອຸ່ນເປັນທີ່ສຸດ, ພິເສດ ພິທີທາງການຈະສຳເລັດລົງ ພໍ່ຊຽງຍວງ ພ້ອມແມ່ ຢືນຂຶ້ນ ພ້ອມທັງສະເໜີຕໍ່ຫົວໜ້າໝວດໂຮງຮຽນວ່າ ພໍ່-ແມ່ ຂໍສະເໜີຕໍ່ການຈັດຕັ້ງ ຂໍເອົາລູກນາຍຄູ ສົມວັນດີ ນາຖາວົງ ເປັນລູກ ຄືລູກຄີງ ແລະ ໄປນອນຢູ່ເຮືອນຂອງພໍ່-ແມ່ນີ້ເລີຍ, ພໍ່-ແມ່ທຸກໃຈຫຼາຍ ເພາະລູກຊາຍຜູ້ຈະລ້ຽງພໍ່ແມ່ ມີອາຍຸພຽງ 17 ປີ ຫາກໍ ເສຍຊີວິດໄປຫວ່າງແລ້ວນີ້.

ຕະຫຼອດໄລຍະສິດສອນ ຢູ່ໂຮງຮຽນບ້ານຊອຍ-ນາຟ້າ ສອງສົກຮຽນ ຂ້າພະເຈົ້າມີຄວາມອົບອຸ່ນທາງດ້ານຈິດໃຈ ແລະວັດຖຸ, ມີພໍ່-ແມ່ຊຽງຍວງ ແລະທ່ານຊຽງບົວພັນ ນາຍບ້ານ ບ້ານຊອຍ (ທ່ານຜູ້ນີ້ເປັນຜູ້ທີ່ມີພອນສະຫວັນ ມັກມ່ວນຊື່ນ, ຂັບຊຽງຂວາງກໍເກັ່ງ, ເປົ່າແຄນທຸກແບບກໍມ່ວນ ຄ່ຳໆແມ່ນໄດ້ຍິນສຽງຂັບທົ່ວບ້ານທົ່ວເມືອງ ກ້ອງກັງວານໃນພູຜາປ່າດົງ), ເພິ່ນໄດ້ ໃຫ້ຄວາມສະດວກ, ຄວາມເອື້ອເຟື້ອເຜື່ອແຜ່ຄວາມອີດູສົງສານຄືກັບລູກ ຄືກັບນ້ອງຮ່ວມທ້ອງພໍ່ແມ່ໃນສາຍເລືອດດຽວກັນ, ທັງໝົດທີ່ກ່າວມານີ້ໄດ້ກາຍເປັນພະລັງແຮງກ້າ ເພື່ອໃຫ້ຂ້າພະເຈົ້າສູ້ຊົນປະຕິບັດໜ້າທີ່ສິດສອນ, ຄຸ້ມຄອງນັກຮຽນແຫ່ງນີ້ໄດ້ຮັບຜົນສຳເລັດເປັນຢ່າງດີ. ສິ່ງທີ່ໜ້າພູມໃຈແຫ່ງຊີວິດຄູ ການສອບເສັງພາກຮຽນ ຫຼືເລື່ອນຫ້ອງ ທ່ານ ຄຳກິ່ງ ນັນທະວົງ ຫົວໜ້າໝວດໂຮງຮຽນ ພ້ອມຄະນະຂອງເພິ່ນ ໄດ້ມາຕິດຕາມເປັນປະຈຳ ສະນັ້ນການສອບເສັງນັກຮຽນປີທຳອິດ ໄດ້ບັນລຸຄາດໝາຍລະດັບສູງ ຄື:



ສົກຮຽນ 1965-1966 ມີນັກຮຽນ 48 ຄົນ. ນັກຮຽນຫ້ອງ ປ.1 ມີ 25 ຄົນ, ຫ້ອງ ປ. 2 ມີ 12 ຄົນ ແລະຫ້ອງ ປ.3 ມີ 11 ຄົນ, ນັກຮຽນ ປ.2-ປ.3 ແຕ່ກ່ອນໄປຮຽນຢູ່ບ້ານຄ້າຍ, ບ້ານຫວ້ານ ແລະອື່ນໆ. ພາຍຫຼັງມີໂຮງຮຽນແລ້ວແມ່ນກັບມາໝົດ ຂ້າພະເຈົ້າຕັ້ງໜ້າຄົ້ນຄວ້າເອກະສານ ແຕ່ງບົດສອນທຸກໆບົດ, ແຕ່ງບົດສອນໃຫ້ຖືກຕາມຫຼັກວິຊາ 5 ບາດກ້າວ ບາງບົດຟ້າວຫຼາຍກໍແຕ່ງເລັ່ງໃສ່ຖ່າຍຄວາມຮູ້ ແລະດ້ານແນວຄິດ ກໍໄປສອນ, ຈາກນັ້ນກໍມາແຕ່ງຄືນ ເພາະຢ້ານຫົວໜ້າໝວດໂຮງຮຽນຈະລົງມາກວດກາ.

ຂ້າພະເຈົ້າໄດ້ສັບຊ້ອນການສອນ ຕອນເຊົ້າ ປ.1 ແລະ ປ.2, ຕອນແລງ ແມ່ນສອນຫ້ອງ ປ.3, ກາງຄືນໄດ້ເອົານັກຮຽນ ຫ້ອງ ປ.3 ທີ່ມີພອນສະຫວັນ ຮຽນເກັ່ງແດ່ຄື ທ້າວ ສິດ ບ້ານຊອຍ, ນາງ ສົມດີ ບ້ານແຈ້ງ ແມ່ນຫຼານຂອງພໍ່ຊຽງຍວງ ນີ້ເອງ ແລະນາງຈັນສຸກ ບ້ານນາຟ້າ ມາບຳລຸງສອນເພີ່ມຕື່ມ ພ້ອມທັງມອບໃຫ້ແຕ່ລະຄົນໃນມື້ເຊົ້າໃຫ້ມາສອນວິຊາຫັດອ່ານ ຫຼື ຂຽນທວາຍ ຫ້ອງ ປ.1 ຊ່ວຍ. ເພື່ອໃຫ້ແຕ່ລະຫ້ອງໄດ້ຮຽນຕາມເວລາຕາມຫຼັກສູດໂຄງການ. ລວມຄວາມແລ້ວຂ້າພະເຈົ້າ ສະຫງວນມັກຕໍ່ການຮຽນ, ມັກອ່ານ ຂໍເອົາບົດສອນຂອງ ທ່ານ ຄຳກິ່ງ ມາເບິ່ງມາຄົ້ນຄວ້າ ສັບຊ້ອນເວລາໄປຖອດຖອນເບິ່ງການສອນຂອງ ທ່ານ ພົມມີ ປະຈຳໂຮງຮຽນບ້ານຄ້າຍ ແລະທ່ານ ທັນມີ ຢູ່ໂຮງຮຽນບ້ານຫວ້ານ ຢ່າງເປັນປະຈຳ, ສະນັ້ນ ການສິດສອນຂອງຂ້າພະເຈົ້າແມ່ນມີລະບຽບແບບແຜນທີ່ດີ, ທຸກໆບົດແມ່ນໄດ້ແຕ່ງເປັນບົດສອນລະອຽດ, ຄົ້ນຄວ້າກຳແໜ້ນເນື້ອໃນຂອງບົດສອນແຕ່ລະວິຊາ, ຊອກວິທີເວົ້າເພື່ອໃຫ້ນັກຮຽນຈົດກ່າຍ ແລະເຂົ້າໃຈງ່າຍ.

ນອກຈາກການສິດສອນໃນໂຮງຮຽນແລ້ວ ຂ້າພະເຈົ້າໄດ້ແບ່ງເວລາລົງໄປຢ້ຽມຢາມພໍ່ແມ່ຂອງນັກຮຽນ ສ້າງນັກຮຽນຄືນ້ອງ ຄືຫຼານ. ຈາກການປະສານພົວພັນກໍຮູ້ໄດ້ສະພາບຂອງນັກຮຽນດີ ແລະບໍ່ດີ ຈຶ່ງຊອກວິທີແກ້ໄຂ ເຮັດໃຫ້ນັກຮຽນສອບເສັງໃນສົກຮຽນທີໜຶ່ງ 1965-1966 ໂດຍຄະນະໝວດໂຮງຮຽນມາຮ່ວມສອບເສັງເລື່ອນຫ້ອງ ດັ່ງນີ້:

ຫ້ອງ ປ.1 = 25ຄົນ ເສັງເລື່ອນຂຶ້ນຫ້ອງ ປ.2 ໄດ້ 89%
ຫ້ອງ ປ.2 = 12 ຄົນ ເສັງເລື່ອນຂຶ້ນຫ້ອງ ປ.3 ໄດ້ 98%
ຫ້ອງ ປ.3 = 11 ຄົນ ເສັງເລື່ອນຂຶ້ນຫ້ອງ ປ.4 ໄດ້ 100%

ໃນນັ້ນ ມີນັກຮຽນເກັ່ງ ເສັງໄດ້ຄະແນນດີ ໄດ້ຮັບຂອງຂວັນ ປຶ້ມ ແລະ ປາກກາຈາກຫົວໜ້າໂຮງຮຽນໝວດລາດບອກ 13 ຄົນ ຄື: ຫ້ອງ ປ.1= 5 ຄົນ ຄື: ນາງ ຈັນສີ, ທ້າວ ສົມໄຊ..., ຫ້ອງ ປ.2 = 3 ຄົນ ຄື: ນາງ ນ້ອຍ, ທ້າວພຸດ..., ຫ້ອງ ປ.3 = 5 ຄົນ ຄື: ນາງສົມດີ ບ້ານແຈ້ງ, ທ້າວສົມລິດ ບ້ານຊອຍ, ນາງຈັນສຸກ ບ້ານນາຟ້າ ແລະອື່ນໆ (ສຳລັບສົກຮຽນທີສອງຜົນງານກໍດີ, ນັກຮຽນກໍຮຽນເກັ່ງ).

ຂ້າພະເຈົ້າດຳລົງຊີວິດສິດສອນ ແລະ ເຄື່ອນໄຫວສັງຄົມອື່ນໆຮ່ວມກັບພໍ່ແມ່ປະຊາຊົນ ສາມາດສ້າງໄດ້ຄວາມຮັກແພງ ຄືກັບລູກບ້ານຫຼານເມືອງ, ຄວາມສາມັກຄີຮັກແພງ ນັກຮຽນ-ພໍ່ ແມ່ ນັບຖືແໜ້ນແກ່ນ, ການຮ່ຳຮຽນຂອງນັກຮຽນ ແລະການສິດສອນກໍດູດດື່ມຈັບອົກຈັບໃຈ ໄດ້ຮັບຄວາມເຊື່ອໝັ້ນຈາກຂັ້ນເທິງເປັນຢ່າງດີ ຕອບສະໜອງຕາມຜົນງານທີ່ມີ, ສົກຮຽນປີທີ 3 1967-1968 ຂ້າພະເຈົ້າກະກຽມເບື້ອງຕົ້ນແຕ່ຖືກຄະນະສຶກສາເມືອງແປກ ສັບຊ້ອນໃຫ້ໄປຮ່ຳຮຽນຕໍ່ ທີ່ໂຮງຮຽນມັດທະຍົມ ຄັງໄຊ.

ໃນຊີວິດນີ້ ເຖິງຈະໄປຢູ່ໃສ ເປັນແນວໃດ ກໍຍັງຈົດຈຳໂຮງຮຽນບ້ານຊອຍ-ນາຟ້າ ຫຼັງທຳອິດ ໃນປີ 1965 ແຫ່ງນີ້.
ພິເສດ ຂໍຂອບໃຈນຳ ປ້າຄຳເມີງ ທີ່ໄດ້ມອບຂອງຂວັນອັນລ້ຳຄ່າໃຫ້ແກ່ລູກຫຼານຊາວບ້ານ ໄດ້ມີບ່ອນຮ່ຳຮຽນທີ່ໄດ້ມາດຕະຖານ.
ຂໍອວຍພອນໃຫ້ໂສມໜ້າອັນໃໝ່ຂອງໂຮງຮຽນແຫ່ງນີ້ ຈົ່ງນັບມື້ກ້າວໜ້າ ແລະໄດ້ຮັບການພັດທະນາ ແລະຍືນຍົງຕະຫຼອດໄປ

# ລູກຫຼານຂໍຈົດຈໍາ

ໂດຍ: ກົ່ງເພັດ ດາວເຮືອງ

ຂອງຂວັນ ປ້າ ແລະລຸງມອບໃຫ້ ໃນເປີງໃໝ່ພັດທະນາ
ໄດ້ກາຍເປັນທວນໄຟ ຮຸ່ງແສງແຮງກ້າ
ຊຸມລູກຫຼານເຫຼັ້ນຫຼ້ອນ ພາກັນເຫີດພະກຽດ
ຂໍອວຍພອນລຸງ ແລະປ້າ ສະຖຽນໝັ້ນຢູ່ຍືນ ນັ້ນທ້ອນ

* ກຸສົນ ຜົນບຸນທີ່ ປ້າ + ລຸງ ໄດ້ສ້າງ ຄຸນຄ່າເຫຼືອປະມານ
ລູກຫຼານຈະຂໍເປັນຄົນດີ ເພື່ອສືບແທນມູນເຊື້ອ
ເມື່ອໃດ ເກືອຍັງຮັກສາໄວ້ ຄວາມເຄັມບໍ່ຈາງຈືດ
ລູກຫຼານຈະຍຶດຖື ແລະ ເຊີດຊູໃສ່ເກົ້າ ທຸກໆຄໍາເວົ້າ ທີ່ ລຸງ + ປ້າ
ສັ່ງສອນ ນັ້ນນາ.



## ຄຳຂວັນຂອງ ຫ້ອງ ມ.1

- ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
  ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດຖະນາຖາວອນ.
- ຮຽນແລ້ວ ຮຽນອີກ ຮຽນເລື້ອຍໆ ໄປ.
- ຄົນບໍ່ອອກຈາກບ້ານບໍ່ເຫັນດ່ານແດນໄກ ຄົນບໍ່ໄປຫາຮຽນບໍ່ຫ່ອນມີຄວາມຮູ້.
- ພົບຄົນດີມີສີແກ່ຕົວ ພົບຄົນຊົ່ວພາຕົວໝົ່ນໝອງ.
- ພໍ່ແມ່ສຸກໃຈທີ່ລູກເອົາໃຈໃສ່ຮ່ຳຮຽນ.
- ການສຶກສາຄືແສງສະຫວ່າງເບື້ອງທາງສູ່ຄວາມຈະເລີນ.
- ພົບຄົນດີຫຼືຮ້າຍບໍ່ໄດ້ມີມາແຕ່ເກີດ ແຕ່ມັນກຳເນີດຍ້ອນການສຶກສາ.









## ຄຳຂວັນຂອງ ຫ້ອງ ມ.2/ກ

- ພົບຄົນດີມີສີແກ່ຕົວ ພົບຄົນຊົ່ວພາຕົວໝົ່ນໝອງ.
- ນາດີໃຫ້ເພິ່ນຖາມຫາເຂົ້າປູກ ລູກດີໃຫ້ເພິ່ນຖາມຫາພໍ່ແມ່.
- ຢູ່ໃສໃຫ້ທຳຄວາມດີ ໜີໄປໃຫ້ເພິ່ນຄິດຮອດ.
- ຢູ່ຄົນດຽວໃຫ້ລະວັງຄວາມຄິດ ຢູ່ຮ່ວມມິດໃຫ້ລະວັງວາຈາ.
- ຂອງກິນບໍ່ກິນມັນເໜົ່າ ຂອງເກົ່າບໍ່ເລົ່າມັນລືມ.
- ຫຼິ້ງທາງເສຍເວລາ ຫຼົງຢາເສຍອະນາຄົດ.
- ຮົ້ວຫຼາຍຫຼັກຈິ່ງໝັ້ນ ພີ່ນ້ອງຫຼາຍຊັ້ນຈິ່ງດີ.

## ຄຳຂວັນ ຫ້ອງ ມ.3/ກ

- ຄວາມຮູ້ຄືແສງທຽນ ຄວາມພາກພຽນຄືເຂັມທິດ.
- ຢູ່ໃຫ້ສ້າງຄວາມດີ ໜີໃຫ້ເພິ່ນຄິດຮອດ.
- ເຫຼັກຂົດເອົາເຮັດຂໍ ເຫຼັກງໍເອົາໄວ້ເຮັດກ່ຽວ ຄົນຄົດລ້ຽວເອົາໄວ້ບໍ່ດີ.
- ໃຈຮ້າຍເປັນຜີ ຄົນໃຈດີເປັນພະເຈົ້າ.
- ໂຮມກັນເຮົາຢູ່ ແຍກໝູ່ເຮົາຕາຍ.
- ນ້ຳຂຸ່ນແພ້ນ້ຳໃສ ໃຈດີແພ້ໃຈຮ້າຍ.
- ຄ່າຂອງຄົນຢູ່ທີ່ຜົນຂອງງານ ຄ່າຂອງງານຢູ່ທີ່ການກະທຳ.
- ຮັກຊາດຕ້ອງໝັ່ນສຶກສາ ຮັກສາສະໜາຕ້ອງໝັ່ນທຳຄວາມດີ.
- ເກົ້າອົດສິບເຍື້ອນຫາກຊິໄດ້ທ່ອນຄຳ.
- ຢູ່ໃຫ້ສ້າງຄວາມດີ ໜີໃຫ້ເພິ່ນຄິດຮອດ.
- ພົບຄົນດີມີສີແກ່ຕົວ ພົບຄົນຊົ່ວພາຕົວໝົ່ນໝອງ.
- ຢ່າໄດ້ຫວັງສຸກຍ້ອນບຸນເຂົາຊິມາເຫຼື້ອມ ສຸກກໍ່ສຸກເພິ່ນພຸ້ນ
  ບໍ່ມາກຸ້ມຮອດເຮົາ ດອກນາ.





- ຮຽນແລ້ວຮຽນອີກ ຮຽນເລື້ອຍໆ ໄປ.
- ມີພຽງວັນດຽວ ມີຄ່າຍິ່ງກວ່າມື້ໜ້າສອງວັນ.
- ບາດີເພິ່ນຖາມຫາເຂົ້າປູກ ລູກດີເພິ່ນຖາມຫາພໍ່ແມ່.
- ຍອມຮັບຄວາມຜິດຫວັງ ແຕ່ບໍ່ຍອມສິ້ນຫວັງຢ່າງຖາວອນ.
- ທຳດີໄວ້ ໃຜບໍ່ຍໍກໍຕາມຊ່າງ ອັນວ່າທຳຊົ່ວນັ້ນ ໃຜຊິຍ້ອງກໍຢ່າທຳ.
- ຂອງກິນບໍ່ກິນມັນເໜົ່າ ຂອງເກົ່າບໍ່ເລົ່າມັນລືມ.

## ຄຳຂວັນຂອງ ຫ້ອງ ມ.4

- ຮົ້ວຫຼາຍຫຼັກຈິ່ງໝັ້ນ ພີ່ນ້ອງຫຼາຍຊັ້ນຈິ່ງດີ.
- ຈົ່ງຈະເລີນກ້າວໜ້າ ຄື ວັນນະ ສຸຂະ ພະລະ.
- ຂອງກິນບໍ່ກິນມັນເໜົ່າ ຂອງເກົ່າບໍ່ເລົ່າມັນລືມ.
- ພາສາບອກຊາດ ມາລະຍາດບອກຕະກຸນ.
- ຢາກກິນໝາກຕ້ອງປູກພົບ ຢາກເປັນຄົນຕ້ອງຮ່ຳຮຽນຄວາມຮູ້.
- ເສຍເຫື່ອເພື່ອກິລາ ດີກວ່າເສຍນ້ຳຕາໃຫ້ຢາເສບຕິດ.
- ຢູ່ຄົນດຽວໃຫ້ລະວັງຄວາມຄິດ ຢູ່ຮ່ວມມິດໃຫ້ລະວັງວາຈາ.



## ໜໍ່ກ້າ

ຍາມເມື່ອ ຝົນຈາກຟ້າ ໂຮຍແຜ່ນປະຖະພີ
ຍາມເມື່ອ ແສງສຸລີ ສ່ອງເຍືອງແຍງຍູ້
ຍາມເມື່ອ ຜືນດິນກວ້າງ ພູພຽງລ້ຽງຫຼໍ່
ຝູງສ່ຳ ແນວໜໍ່ເຊື້ອ ຊິຊູຊ້ອນປົ່ງຊອນ ເຈົ້າແລ້ວ

ຂຶ້ນຊີ່ ແນວໜໍ່ກ້າ ມາລາກີບຫອມຫວນ
ຂຶ້ນຊີ່ຊົນຊາວພວນ ຮັ່ງມີມູນເຊື້ອ
ຂຶ້ນຊີ່ເຄືອແຊງຊັ້ນ ຄົນຂະຫຍັນກ້າກັ່ນ
ແພງພົງພັນພີ່ນ້ອງ ບໍ່ໝອງເສົ້າເກົ່າສີ ດອກນາ

.............................................

**ຫົງເຫີນ ຂຸນພິທັກ**

# ການພັດທະນາ ໂຮງຮຽນມັດທະຍົມສົມບູນ ອິນແປງ ໄລຍະ III




ມອບ-ຮັບໂຄງການເມື່ອວັນທີ ໒໔ ພະຈິກ ໒໐໑໑

## ບາງຕອນ ຄຳເຫັນຂອງ

# ປ້າຄຳເມິງ ວໍລະຈິດ ຜູ້ນຳພາເຕົ້າໂຮມທຶນ

## ພັດທະນາໂຮງຮຽນມັດທະຍົມ

## ສຶກສາສົມບູນ ອິນແປງ

ກ່າວໃນໂອກາດມອບ-ຮັບໂຄງການ

ການພັດທະນາ ມ.ສ.ອິນແປງ ໄລຍະ III

ເມື່ອວັນທີ 22/10/2011



.....................................

ດ້ວຍຄວາມກະຕັນຍູ ຮູ້ບຸນຄຸນ ຢ່າງສຸດຊຶ້ງ ຕໍ່ແຜ່ນດິນຖິ່ນກຳເນີດ ດ້ວຍຄວາມເຄົາລົບຮັກຢ່າງສູງສົ່ງລົ້ນເກົ້າເໜືອຫົວ ຕໍ່ຜູ້ບັງເກີດເກົ້າ ດ້ວຍຄວາມຫ່ວງໃຍຕໍ່ອະນາຄົດອັນສົດໃສ ກວ້າງໄກຂອງລູກຫຼານ ແລະຮຸ່ນຄົນ ທີ່ຈະຮັບຜິດຊອບຊະຕາກຳຂອງບ້ານເກີດເມືອງນອນ ແລະປະເທດຊາດ.

ເມື່ອວັນທີ 5 ພະຈິກ (11) ປີກາຍນີ້ ຂະນະທີ່ສາຍລົມຕົ້ນລະດູໜາວ ໄດ້ພັດເອົາກິ່ນຫອມຂອງເຂົ້າໃໝ່ມາໂຮຍເຮົາເຂົ້າໃສ່ດັງ ຂ້າພະເຈົ້າໄດ້ພົບພໍ້ກັບບັນດາທ່ານຄູອາຈານ ລູກຫຼານນັກຮຽນ ແລະພໍ່ແມ່ພີ່ນ້ອງເຂດຄັງວຽງ ທີ່ໂຮງຮຽນອິນແປງ ແຫ່ງນີ້ທ່າມກາງຄວາມປິຕິຍິນດີຂອງທຸກໆຄົນ ໂດຍສະເພາະແມ່ນ ຄູອາຈານ ແລະພໍ່ແມ່ພີ່ນ້ອງ ເພື່ອພ້ອມກັນຮ່ວມທຳພິທີມອບ-ຮັບ ອາຄານຮຽນ ມັດທະຍົມສົມບູນທີ່ພວກເຮົາໄດ້ຮ່ວມແຮງຮ່ວມໃຈສ້າງຂຶ້ນ. ຂ້າພະເຈົ້າເຊື່ອວ່າບັນຍາກາດຂອງມື້ນັ້ນຍັງຄົງຢູ່ໃນຄວາມຈົດຈຳຂອງທຸກໆຄົນ.

ມື້ນີ້ ອີກເທື່ອໜຶ່ງ ຂ້າພະເຈົ້າໄດ້ກັບມາພົບກັບບັນດາທ່ານຄູອາຈານ ລູກຫຼານນັກຮຽນ ແລະພໍ່ແມ່ພີ່ນ້ອງອີກເທື່ອໜຶ່ງ ໃນບັນຍາກາດແຫ່ງຄວາມເບີກບານມ່ວນຊື່ນແບບນັ້ນອີກແລ້ວ ແລະຖ້າຫາກປີໜ້າມີເຫດການທີ່ໜ້າຊື່ນຊົມຄືແນວນີ້ ເກີດຂຶ້ນອີກ ກໍຄົງຈະເປັນເລື່ອງປະເສີດຫຼາຍ.




ເຫດທີ່ພາໃຫ້ໄດ້ພົບກັນເທື່ອນີ້ ກໍແມ່ນຍ້ອນວ່າ ພວກເຮົາ ໄດ້ມີຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າໃນການສ້າງສາພັດທະນາ ໂຮງຮຽນ ອິນແປງ ໄດ້ກ້າວໜ້າຂຶ້ນອີກ ຂັ້ນໜຶ່ງ ການພົບກັນມື້ນີ້ ແມ່ນເກີດມາຈາກຄວາມຮຽກຮ້ອງຕ້ອງການ ເພື່ອພັດທະນາ ການສຶກສາ ຂອງຄູອາຈານ ແລະພໍ່ແມ່ປະຊາຊົນ ທີ່ຢາກໃຫ້ຂ້າພະເຈົ້າມາຊ່ວຍພັດທະ ນາໂຮງຮຽນແຫ່ງນີ້. ຄວາມຮຽກຮ້ອງຕ້ອງການນີ້ ແມ່ນຖືກຕ້ອງສອດຄ່ອງທີ່ສຸດ, ເພາະວ່າທົ່ວພັກ ທົ່ວລັດ ທົ່ວປວງຊົນເຮົາ ກຳລັງເລັ່ງໃສ່ບຸກທະລຸ ດ້ານການສຶກສາ ພັດທະນາຊັບພະຍາກອນມະນຸດ ແລະບຸກທະລຸດ້ານຄວາມທຸກຍາກ ຕາມມະຕິຄັ້ງທີ IX ຂອງສູນກາງພັກ ດ້ວຍເຫດນີ້ ຂ້າພະເຈົ້າພ້ອມດ້ວຍຄອບຄົວ ລູກຫຼານຈຶ່ງຕັດ ສິນໃຈ ເປັນເອກະພາບ ຍິນດີຫາທາງຊ່ວຍເຫຼືອ ດຳເນີນການຂໍທຶນຈາກລູກຫຼານຍາດ ພີ່ນ້ອງ ແລະຜູ້ມີນ້ຳໃຈອັນປະເສີດທັງຫຼາຍ ໂດຍອາໄສກຳລັງແຮງ ກຳລັງຊັບ ກຳລັງ ສະຕິປັນຍາ ຂອງຫຼາຍຄົນມາສົມທົບໃສ່ຄວາມອາດສາມາດ ຂອງພໍ່ແມ່ພີ່ນ້ອງ ແລະ ການຈັດຕັ້ງທຸກພາກສ່ວນໃນທ້ອງຖິ່ນ.

ໃນການລະດົມທຶນນັ້ນ ຂ້າພະເຈົ້າໄດ້ຮັບຄວາມຮ່ວມມືເປັນຢ່າງດີ ຈາກທຸກ ພາກສ່ວນ ທຸກໆຄົນຕ່າງກໍເຫັນດີເຫັນພ້ອມ ຍິນດີສະໝັກໃຈ ແລະຈິງໃຈສະໜັບ ສະໜູນການສຶກສາ. ທຸກຄົນສະເໜີໃຫ້ຂ້າພະເຈົ້າເປັນຫຼັກແຫຼ່ງໃນການທ້ອນໂຮມທຶນ ຮອນ ເພື່ອໃຫ້ໄດ້ຕາມຄວາມປະສົງທີ່ຄາດໝາຍໄວ້.



ການເຕົ້າໂຮມທຶນ ພັດທະນາໂຮງຮຽນແຫ່ງນີ້ ໄດ້ຮັບຜົນສຳເລັດເປັນແຕ່ລະບາດກ້າວຄື ໃນ 20/9/2001 ຂ້າພະເຈົ້າພ້ອມຄອບຄົວ ຈຶ່ງໄດ້ຊ່ວຍສ້າງອາຄານຮຽນຊັ້ນມັດທະຍົມຕົ້ນ 1 ຫຼັງມູນຄ່າກວ່າ 424.409.300 ກີບ (ສີ່ຮ້ອຍຊາວສີ່ລ້ານ ສີ່ແສນເກົ້າພັນສາມຮ້ອຍກີບ) ແລະຕໍ່ມາອຳນາດການປົກຄອງທ້ອງຖິ່ນ ພໍ່ແມ່ພີ່ນ້ອງ ແລະລູກຫຼານ ກໍສະເໜີຄວາມຮຽກຮ້ອງຕ້ອງການມາຍັງຂ້າພະເຈົ້າອີກວ່າ ຢາກມີອາຄານຮຽນຫຼັງໃໝ່ຕື່ມອີກ ເພື່ອໃຊ້ສຳລັບການສຶກສາຂັ້ນສູງຂຶ້ນ.

ຕອບສະໜອງຄວາມຮຽກຮ້ອງນັ້ນ ຂ້າພະເຈົ້າກໍໄດ້ ຂໍທຶນນຳລູກຫຼານ ແລະຜູ້ມີນ້ຳໃຈພັດທະນາ ແລະກໍໄດ້ມອບໝາຍໃຫ້ ທ້າວສີສົມພູ ຜູ້ເປັນຫຼານຊາຍ ຄົ້ນຄວ້າພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງລົງມືຈັດຕັ້ງປະຕິບັດໂຄງການກໍ່ສ້າງ ໂດຍເລີ່ມແຕ່ວັນທີ 08/02/2010 ອາຄານຮຽນຫຼັງໃໝ່ ເດີ່ນກິລາ ແລະຮົ້ວໂຮງຮຽນ ລວມທັງການສ້ອມແປງອາຄານຮຽນ ຫຼັງເກົ່າ ນອກຈາກນັ້ນຍັງມີ ຕັ່ງທີ່ນ ປະຕູໂຂງ ຫໍຂ່າວກອງດຸລິຍາງເຍົາວະຊົນ ເຄື່ອງສຽງ ຄອມພິວເຕີ ລວມຍອດມູນຄ່າ ການກໍ່ສ້າງທັງໝົດ 1.957.930.000 (ໜຶ່ງຕື້ເກົ້າຮ້ອຍຫ້າສິບເຈັດລ້ານ ເກົ້າແສນສາມໝື່ນກີບ) ຊຶ່ງພວກເຮົາໄດ້ທຳການມອບ-ຮັບໄປແລ້ວ ໃນວັນທີ 5 ພະຈິກ (11) 2010 ປີກາຍນີ້ .



ມາເຖິງປີນີ້ (2011) ໂດຍຕອບສະໜອງຕາມຄຳສະເໜີຂອງຄະນະອຳນວຍການໂຮງໝໍ 101 ວິລະຊົນ (ບໍລິເວນ) ທີ່ຢາກພັດທະນາໂຮງໝໍ ຊຶ່ງມີບົດບາດປະກອບສ່ວນໃນປະຫວັດສາດສະໄໝສົງຄາມ, ເປັນໂຮງໝໍທີ່ມີຄວາມໝາຍສຳຄັນທີ່ສຸດແຫ່ງໜຶ່ງສຳລັບຊີວິດຂອງຂ້າພະເຈົ້າ ເພາະເປັນບ່ອນເລີ່ມຕົ້ນເຮັດວຽກນັບແຕ່ປີ 1965 ເປັນຕົ້ນມາ ທັງເປັນບ່ອນຊຸບຫູ້ຂ້າພະເຈົ້າໃຫ້ກາຍເປັນນັກຮົບແພດປະຕິວັດ ທີ່ມີອຸດົມການ ຄຸນສົມບັດສິນທຳອັນສູງສົ່ງ ຈົນເທົ້າເຖິງທຸກວັນນີ້.

ໃນການພັດທະນາໂຮງໝໍ 101 ວິລະຊົນນັ້ນ ຂ້າພະເຈົ້າກໍໄດ້ຂໍທຶນຈາກລູກຫຼານ ແລະຜູ້ມີໃຈພັດທະນາທັງຫຼາຍ ຜ່ານການຂໍທຶນນັ້ນ ເຫັນວ່າໄດ້ຫຼາຍເກີນກວ່າທີ່ຄາດໄວ້ ຂະນະດຽວກັນນັ້ນ ທາງຄູອາຈານ ອຳນາດການປົກຄອງ ແລະພໍ່ແມ່ພີ່ນ້ອງເຂດຄັງວຽງກໍໄດ້ຮ້ອງຂໍໄປຍັງຂ້າພະເຈົ້າໃຫ້ຊ່ວຍພັດທະນາໂຮງຮຽນນີ້ຕື່ມອີກ ດັ່ງນັ້ນພາຍຫຼັງທີ່ທຸກຝ່າຍທີ່ກ່ຽວຂ້ອງ ມີຄວາມເຫັນດີເຫັນພ້ອມນຳ ຂ້າພະເຈົ້າ ຈຶ່ງຂໍທຶນຈຳນວນໜຶ່ງອີກນຳມາພັດທະນາໂຮງຮຽນອິນແປງນີ້ຕື່ມອີກ ຊຶ່ງໃນນີ້ກໍໄດ້ສ້າງວັດຖຸພື້ນຖານບາງຢ່າງ ຊຶ່ງພວກເຮົາຈະໄດ້ທຳການມອບ-ຮັບໃນມື້ນີ້ລວມມີ:

| | | | |
|---|---|---|---|
| 1. ສະໂມສອນ | 12 x 30 ແມັດ 1 ຫຼັງ | ມູນຄ່າ | 665,759,703 ກີບ |
| 2. ຫໍພັກຄູ | 7 x 24 ແມັດ 1 ຫຼັງ | ມູນຄ່າ | 470,000,000 ກີບ |
| 3. ຫໍສະໝຸດ | 6 x 9 ແມັດ 1 ຫຼັງ | ມູນຄ່າ | 162,000,000 ກີບ |




ການສະໜັບສະໜູນໃນການສ້າງເທື່ອນີ້ ແມ່ນມາຈາກບັນດາທ່ານຜູ້ໃຈບຸນທີ່ມີຊື່ລຸ່ມນີ້

| | | |
|---|---|---|
| 1. ທ່ານ ເຟືອງ ກາສີ 50,000 US$ x 8,000 | = | 400,000,000 ກີບ |
| 2. ທ່ານ ແສງລາຕີ ແລະ ນາງລັດດາວອນ | = | 200,000,000 ກີບ |
| 3. ທ່ານ ບຸນມາ ແລະ ນາງປະທຸມພອນ | = | 200,000,000 ກີບ |
| 4. ທ່ານ ຫຽມ ພົມມະຈັນ ພ້ອມຄອບຄົວ | = | 100,000,000 ກີບ |
| 5. ທ່ານ ອະນຸພາບ ເທບສອນ ພ້ອມຄອບຄົວ | = | 100,000,000 ກີບ |
| 6. ບໍລິສັດ ກ່ອບ-ລອງແທ່ງ | = | 100,000,000 ກີບ |
| 7. ນາງ ດາລີວັນ ສິດພະໄຊ ພ້ອມຄອບຄົວ | = | 40,000,000 ກີບ |
| 8. ທ່ານ ເທາະ ຮຸ່ງເຮືອງ ພ້ອມຄອບຄົວ | = | 40,000,000 ກີບ |
| 9. ບໍລິສັດ ອຸດົມຊັບ | = | 39,000,000 ກີບ |
| 10 ທ່ານ ບົວສອນ ດາລາວົງ ພ້ອມຄອບຄົວ | = | 25,000,000 ກີບ |
| 11. ທ່ານ ນາງ ອາລີ ພົນເສນາ ພ້ອມຄອບຄົວ | = | 20,000,000 ກີບ |
| 12. ທ່ານ ບຸນເພັງ ທຳມະວົງ ພ້ອມຄອບຄົວ | = | 20,000,000 ກີບ |
| 13. ທ່ານ ບຸນທອນ ສິດທິວົງ | = | 20,000,000 ກີບ |
| 14. ນາງສົມວິໄລວົງ ສຸຂະວົງ ພ້ອມຄອບຄົວ | = | 15,000,000 ກີບ |
| 15. ທ່ານ ນາງບົວໄຫຼ ຈິດມະນີ ພ້ອມຄອບຄົວ | = | 10,000,000 ກີບ |
| 17. ຮ້ານຂາຍເຄື່ອງກໍ່ສ້າງ ນາງຄາມ | = | 5,000,000 ກີບ |
| 18. ໂຮງແຮມ ອະນຸລັກແດນລາວ | = | 5,000,000 ກີບ |
| 19. ທ່ານ ນາງນົງໂສດາ ດາລາເພັດ | = | 2,000.000 ກີບ |
| 17. ທ່ານ ນາງພອນໄຊ ຈິດນາລີ ພ້ອມຄອບຄົວ | = | 2,000.000 ກີບ |
| **ລວມ** | **=** | **1,351,000,000 ກີບ** |




ພິເສດ ອີກເທື່ອນຶ່ງ ໃນນາມຄອບຄົວ ວໍລະຈິດ ຂ້າພະເຈົ້າຍັງໄດ້ປະກອບສ່ວນ ເພີ່ມຕື່ມອີກໃນໂອກາດນີ້ ດັ່ງນີ້:

- ຊ່ວຍສ້າງອາຄານສຳນັກງານ ຫ້ອງການເຂດຄັງວຽງ 50,000.000 ກີບ
- ມອບໂຕະຕັ່ງ ໃສ່ສະໂມສອນ ມ.ສ.ອິນແປງ 60,000.000 ກີບ
- ມອບທຶນໃຫ້ຄູອາຈານ ໄປທັດສະນະສຶກສາ 20,000,000 ກີບ

ອັນນຶ່ງ ໃນໂຄງການ ມອບ-ຮັບເມື່ອປີທີ່ແລ້ວ (ວັນທີ 5 ພະຈິກ 2010)

ຍັງມີ ນາງຈັນທອນ ໄຊຍະສິນ ພ້ອມຄອບຄົວ 5,000,000 ກີບ

ຂ້າພະເຈົ້າ ແລະທ່ານຜູ້ໃຈບຸນທັງຫຼາຍ ບໍ່ໄດ້ຊ່ວຍສ້າງສາພັດທະນາແຕ່ສະເພາະແຕ່ໂຮງຮຽນອິນແປງ ແຫ່ງດຽວທີ່ນີ້ ແຕ່ຍັງມີອີກຫຼາຍໆແຫ່ງທີ່ຂ້າພະເຈົ້າໄດ້ນຳພາເຕົ້າໂຮມທຶນໄປຊ່ວຍພັດທະນາ ຈຶ່ງຂໍແຈ້ງໃຫ້ທ່ານຊາບດັ່ງນີ້:

- ສ້າງໂຮງຮຽນມັດທະຍົມຕົ້ນ ບ້ານຊອຍນາຟ້າ = 740,000,000 ກີບ
- ສ້າງໂຮງໝໍ 101 ວິລະຊົນ (ບໍລິເວນ) ລວມມູນຄ່າ = 1.607,000,000 ກີບ
- ສ້າງໂຮງຮຽນປະຖົມ ບ້ານສີຄູນ (ປີ 2009)
  ດ້ວຍທຶນຊ່ວຍເຫຼືອຂອງ ທ່ານ ຊອບ ສີຊົມພູ ມູນຄ່າ 100,000,000 ກີບ
- ຊ່ວຍໂຮງຮຽນ ມັດທະຍົມສຶກສາສົມບູນ ໜອງເປັດ ຍອດງື່ມ
  ປັບປຸງສະໜາມກິລາ ໂຕະຕັ່ງຫີນ ມູນຄ່າ = 150.000.000 ກີບ
- ຊ່ວຍສ້າງສາລາໂຮງທຳ ວັດບ້ານຄັງວຽງ
- ຊ່ວຍສ້າງ ໂຮງຮຽນ ແຂວງຫົວພັນ ມູນຄ່າ = 480,000,000 ກີບ




- ຊ່ວຍສ້າງໂຮງຮຽນປະຖົມ ອະນຸບານ ບ້ານຫ້ວຍໝື້ນ ເມືອງ ທ່າປາງທອງ ແຂວງສະຫວັນນະເຂດ 2 ແຫ່ງ
- ຊ່ວຍບູລະນະວັດໜອງບອນ, ວັດ ແລະສິມທີ່ວັດປ່າຖ້ຳພະລືສີ, ວັດໂນນຂີ້ເຫຼັກ ຢູ່ນະຄອນຫຼວງວຽງຈັນ ແລະແຫ່ງອື່ນໆ ອີກ

ໃຜໆ ກໍຮູ້ດີວ່າ ໃນປາງສົງຄາມ ຜືນແຜ່ນດິນພູພຽງຊຽງຂວາງແຫ່ງນີ້ ຖືກທຳລາຍຢ່າງໜັກໜ່ວງ ດ້ວຍນ້ຳມືອັນໂຫດຫ້ຽມຂອງຜູ້ຮຸກຮານ ໂດຍສະເພາະແມ່ນຈາກໂຈນອາກາດ ຊຸມລະເບີດ ຊຸມຫຼຸບໄພ ລຽງລາຍຢັ້ງຢາຍກັນໄປປານສັບຕາຜ້າ ຫຼືວ່າສັກລຸ້ງເຂົ້າໄຮ່ ຜູ້ຄົນລົ້ມຫາຍຕາຍຈາກບໍ່ຈັກວ່າເທົ່າໃດ ບັນດາຜູ້ລອດຊີວິດກໍ ລ້ວນຈຳໃຈພັດພາກຈາກບ້ານເກີດເມືອງນອນ.

ໃນປາງສົງຄາມນັ້ນ ຜູ້ທີ່ຖືກກະທົບທີ່ສຸດ ກໍແມ່ນເດັກນ້ອຍໃນໄວຮຽນ ສົງຄາມເຮັດໃຫ້ເດັກນ້ອຍຈຳນວນຫຼວງຫຼາຍເປັນເດັກກຳພ້າ ຂາດຄວາມອົບອຸ່ນ ບໍ່ມີໂອກາດໄດ້ສຶກສາຮ່ຳຮຽນ ຄິດມາແລ້ວກໍເປັນໜ້າສັງເວດ ເພາະສົງຄາມມີຢູ່ບ່ອນໃດເດັກນ້ອຍຢູ່ບ່ອນນັ້ນ ກໍໄດ້ຮັບຜົນກະທົບກ່ອນຜູ້ອື່ນໂລດ ທັງໆ ທີ່ເດັກນ້ອຍບໍ່ຮູ້ເລື່ອງຫຍັງເລີຍ. ຫາກວ່າຍາມຍັງນ້ອຍບໍ່ໄດ້ຮຽນຢ່າງເຕັມທີ່, ເມື່ອໃຫຍ່ຂຶ້ນມາກໍບໍ່ມີວິຊາຄວາມຮູ້ ການເຮັດວຽກງານ ທຳມາຫາກິນ ການສ້າງລູກສ້າງຫຼານ ການສ້າງຖານະຄອບຄົວຂອງຄົນເຫຼົ່ານັ້ນ ກໍຄືການພັດທະນາເສດຖະກິດ-ສັງຄົມທ້ອງຖິ່ນ ແລະຂອງປະເທດຊາດ ກໍຍາກທີ່ຈະປະສົບຜົນສຳເລັດ ດັ່ງທີ່ເຮົາເຫັນກັນຢູ່ທຸກມື້ນີ້



ບັດນີ້ ບ້ານເມືອງມີສັນຕິພາບ ແລະກໍາລັງໄດ້ຮັບການພັດທະນາຮອບດ້ານ ໃນຖານະຂອງຜູ້ທີ່ເຄີຍຖືກກະທົບໂດຍກົງຈາກສົງຄາມ ແລະໃນຖານະຂອງຜູ້ເປັນແມ່ຍາມໃດ ຂ້າພະເຈົ້າກໍຫວັງດີຕໍ່ລູກໆຫຼານໆ ດັ່ງນັ້ນຈຶ່ງຢາກໃຫ້ສິ່ງທີ່ດີທີ່ສຸດ ເທົ່າທີ່ຕົນຈະໃຫ້ໄດ້ແກ່ລູກໆຫຼານໆກໍຄືເດັກນ້ອຍທຸກໆຄົນ.

ທຶນຮອນທີ່ນໍາມາພັດທະນາໂຮງຮຽນອິນແປງແຫ່ງນີ້ ຖ້າເບິ່ງທີ່ໂຕເລກ ເຮົາຈະເຫັນວ່າຫຼວງຫຼາຍພໍສົມຄວນແລ້ວ ແຕ່ກໍຍັງບໍ່ເທົ່າທຽມກັບຈິດໃຈຂອງຂ້າພະເຈົ້າທີ່ຢາກຈະໃຫ້ຫຼາຍສິ່ງຫຼາຍຢ່າງແກ່ຄູ ອາຈານ ແລະລູກຫຼານນັກຮຽນ ເພາະຂ້າພະເຈົ້າເຊື່ອຢ່າງຕາຍໃຈວ່າການສຶກສາເປັນກະແຈສໍາຄັນສໍາລັບຊີວິດໃນອະນາຄົດຂອງຄົນທຸກຄົນ. ໃນທັດສະນະຂອງຂ້າພະເຈົ້າ ກໍເຫັນດີເປັນເອກະພາບ ກັບແນວທາງນະໂຍບາຍຂອງພັກ-ລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ສະພາບການປັດຈຸບັນຢູ່ປະເທດເຮົາ ໄດ້ຖືເອົາພາລະກິດສ້າງຊັບພະຍາກອນມະນຸດ ເປັນວຽກໃຫຍ່ສໍາຄັນອັນນຶ່ງ ເພື່ອສ້າງຄົນໃຫ້ມີຄວາມຮູ້ ຄວາມສາມາດ ເພາະຖ້າລູກຫຼານ ຂອງພວກເຮົາຮູ້ຮັກຊາດ ມີຄວາມຮູ້ ມີຄວາມສາມາດແລ້ວ ພວກເຂົາກໍຈະຮູ້ປົກປັກຮັກສາ ແລະສ້າງສາພັດທະນາບ້ານເມືອງ ສືບທອດເຈດຕະນາລົມຂອງບັນພະບຸລຸດ ໃຫ້ຈະເລີນຮຸ່ງເຮືອງຕະຫຼອດໄປ.



ການພັດທະນາໂຮງຮຽນອິນແປງ ບໍ່ແມ່ນພຽງເພື່ອລູກຫຼານຂອງຊາວເຂດ ຄັງວຽງທີ່ນັ້ນ ແຕ່ມັນເປັນການປະກອບສ່ວນສຳຄັນ ແລະເປັນພື້ນຖານອັນໜຶ່ງໃນ ການພັດທະນາ ການສຶກສາຂອງເມືອງແປກ ກໍຄືແຂວງຊຽງຂວາງວິຣະຊົນ ກໍຄືຂອງ ປະເທດຊາດອັນແສນຮັກຂອງພວກເຮົາ ແລະໂຮງຮຽນແຫ່ງນີ້ ຈະເປັນແບບຢ່າງ ເປັນ ສັນຍາລັກທີ່ດີ ໃນຫຼາຍດ້ານເຊັ່ນ:

1. ເປັນປະຈັກພະຍານ ປາກົດຜົນເປັນຈິງ ໃຫ້ແກ່ຜູ້ບໍລິຈາກທັງຫຼາຍໄດ້ຮູ້ ເຫັນວ່າເງິນທຸກກີບ ທຸກອັດທີ່ພວກເພິ່ນໄດ້ບໍລິຈາກມານັ້ນ ແມ່ນໄດ້ນຳໃຊ້ຕາມຈຸດ ປະສົງເປົ້າໝາຍທຸກປະການ

2. ສະແດງໃຫ້ພວກເຮົາເຫັນວ່າ ບຸກຄົນ ການຈັດຕັ້ງ ທັງພາກລັດ ເອກະຊົນ ແລະພໍ່ແມ່ປະຊາຊົນໃຜໆກໍເປັນຫ່ວງເປັນໃຍ ແລະເຊື່ອໝັ້ນຕໍ່ລູກຫຼານ ກໍຄືຖືການ ສຶກສາວ່າເປັນສິ່ງສຳຄັນ ຊຶ່ງໃຜໆກໍຍິນດີທີ່ຈະປະກອບສ່ວນສະໜັບສະໜູນ ຕາມກຳ ລັງຊັບ ກຳລັງກາຍ ແລະກຳລັງສະຕິປັນຍາ.

3.ເປັນແບບຢ່າງໃຫ້ແກ່ທ້ອງຖິ່ນແຫ່ງອື່ນໆ ໃຫ້ຮູ້ວ່າໃນການຮັບທຶນສະໜັບ ສະໜູນນັ້ນ ຕ້ອງມີຈຸດປະສົງເປົ້າໝາຍ ແລະມີແຜນບໍລິຫານຈັດການທີ່ສາມາດສຳລິດ ຜົນໄດ້.




ໂຮງຮຽນອິນແປງແຫ່ງນີ້ ໃນອະດີດເຖິງວ່າ ເປັນຫຼັງນ້ອຍໆ ມຸງດ້ວຍຫຍ້າຄາ. ແຕ່ກໍໄດ້ສ້າງລູກຫຼານໃຫ້ເປັນຄົນດີ ມີຄວາມຮູ້ມາຫຼາຍຮຸ່ນ ຫຼາຍສຳ ບັດນີ້ ພວກເຮົາມີອາຄານຮຽນຫຼັງໃໝ່ທີ່ແໜ້ນໜາຖາວອນ ແລະຈົບງາມ ມີສິ່ງອຳນວຍຄວາມສະດວກຄົບຊຸດພໍສົມຄວນ ພ້ອມທັງມີລະດັບການສຶກສາສູງຂຶ້ນກວ່າເກົ່າອີກ

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ພໍ່ແມ່ພີ່ນ້ອງ ຄູອາຈານ ແລະການຈັດຕັ້ງທຸກພາກສ່ວນຈະພ້ອມກັນປົກປັກຮັກສາເປັນຢ່າງດີ, ນຳໃຊ້ຢ່າງຮູ້ຄຸນຄ່າ ເຂົ້າໃນການສຶກສາອົບຮົມກໍ່ສ້າງລູກຫຼານ ໃຫ້ມີຄວາມຮູ້ຄວາມຫຼັກ ມີສະຕິປັນຍາ ເສີມຂະຫຍາຍມູນເຊື້ອໂຮງຮຽນອິນແປງ ແລະມູນເຊື້ອເມືອງແປກວິລະຊົນ ແຂວງຊຽງຂວາງວິລະຊົນ ຂອງພວກເຮົາ, ມູນເຊື້ອວັດທະນະທຳອັນດີງາມຂອງຊາດລາວເຮົາ ສ້າງຄົນຮຸ່ນໃໝ່ໃຫ້ເປັນຄົນດີຂອງພໍ່ແມ່ຂອງສັງຄົມ ແລະເປັນຜູ້ສືບທອດທີ່ດີ ຂອງແຜ່ນດິນຖິ່ນຄັງຄາຍ ກໍຄືປະເທດຊາດບ້ານເມືອງ ໃນອະນາຄົດຕໍ່ໆ ໄປ.



*ທ່ານບຸນຍັງ ວໍລະຈິດ, ທ່ານ ວິໄລວັນ ພົມເຂ, ທ່ານ ສົມກົດ ມັງໜໍ່ເມກ,
ປ້າຄຳເມີງ ວໍລະຈິດ ແລະບັນດາແຂກ ເຂົ້າຮ່ວມພິທີໄຂນຳໃຊ້ຫ້ອງສະໝຸດໂຮງຮຽນ*





# ບົດກ່າວຂອບໃຈ

**ອາຈານ ບຸນຕາ**
**ຮອງຜູ້ອຳນວຍການໂຮງຮຽນ**

ຮຽນ ທ່ານ ບຸນຍັງ ວໍລະຈິດ ກຳມະການ ກົມການເມືອງສູນກາງພັກ

ຮຽນ ທ່ານ ວິໄລວັນ ພົມເຂ ກຳມະການສູນກາງພັກ ລັດຖະມົນຕີກະຊວງ ກະສິກຳ - ປ່າໄມ້

ຮຽນ ທ່ານ ສົມກົດ ມັງໜໍ່ເມກ ກຳມະການສູນກາງພັກ, ເລຂາຄະນະພັກແຂວງ ເຈົ້າແຂວງ ແຂວງຊຽງຂວາງ

- ຮຽນ ບັນດາການນຳຂັ້ນສູງ ຂອງພັກ ຂອງລັດ ຂັ້ນສູນກາງ ຂັ້ນແຂວງ ຂັ້ນເມືອງ ຂັ້ນກຸ່ມ ທີ່ນັບຖື. ພໍ່ແມ່ພີ່ນ້ອງການຈັດຕັ້ງ ຄູອາຈານ ນັກຮຽນ ທີ່ຮັກແພງ.

ຂ້າພະເຈົ້າໃນນາມຕາງໜ້າເລຂາພັກ, ອຳນວຍການໂຮງຮຽນມັດທະຍົມສົມບູນອິນແປງ ຂໍຕາງໜ້າໃຫ້ແກ່ຄູ ອາຈານ ຕະຫຼອດຮອດນັກຮຽນທຸກທົ່ວໜ້າ ຂໍສະແດງຄວາມຂອບອົກຂອບໃຈ, ຄວາມພາກພູມໃຈ, ຄວາມກະຕັນຍູຮູ້ບຸນຄຸນຢ່າງລົ້ນເຫຼືອ ເປັນຢ່າງຍິ່ງຫາອັນປຽບປານບໍ່ໄດ້ ມາຍັງ ປ້າຄຳເມິງ ວໍລະຈິດ ທີ່ເປັນຜູ້ລະດົມທຶນ ພ້ອມທັງເປັນຜູ້ໃຫ້ທຶນອັນມະຫາສານແກ່ການສ້າງ ແລະພັດທະນາໂຮງຮຽນອິນແປງ

24/7VII
ຫ້າມຈຳໜ່າຍ

ນ້ຳໃຈອັນປະເສີດເຫຼົ່ານີ້ ແມ່ນລົ້ນເຫຼືອມາຈາກແມ່ປ້າ ຄຳເມິງ ພ້ອມດ້ວຍຄອບຄົວ, ຍາດຕິພີ່ນ້ອງ ທີ່ໄດ້ມີຄວາມເຫຼື້ອມໃສ ໂອບເອື້ອ ເຜື່ອແຜ່, ມີຈິດໃຈອັນສູງສົ່ງຍອດຍິ່ງທີ່ໄດ້ບິແບ່ງເວລາຕະຫຼອດຮອດວັດຖຸສິ່ງຂອງມາພັດທະນາໂຮງຮຽນອິນແປງ ຊຶ່ງເປັນບ່ອນແມ່ປ້າໄດ້ມາສຶກສາຮ່ຳຮຽນໃນໄວເດັກ. ເຖິງວ່າປ້າເອງໄດ້ໄປທາງໜ້າແລ້ວ ຍັງໄດ້ຕ່າວຫວນຄືນມາເຫັນລູກຫຼານບ້ານເມືອງທີ່ຍັງດອ້ຍໂອກາດຈຶ່ງໄດ້ຫວນຄືນມາພັດທະນາວຽກງານສຶກສາຢູ່ບ້ານຂອງຕົນເອງ ເປັນຕົ້ນແມ່ນ: ສ້າງໂຮງຮຽນ, ສະໂມສອນ, ຫໍພັກຄູ, ຫ້ອງສະໝຸດ ແລະ ອຸປະກອນອື່ນໆ ເກືອບຄົບຊຸດ ຄິດເປັນມູນຄ່າຫຼາຍຮ້ອຍລ້ານກີບ ເຊິ່ງປ້າໄດ້ກາຍເປັນຕົວແທນ ບັນພະບູລຸດຜູ້ຊົງຄຸນຄ່າ ພ້ອມທັງເປັນແບບຢ່າງອັນຍອດຍິ່ງ ຊຶ່ງຍາມໃດກໍເປັນຫ່ວງເປັນໃຍ ເຖິງວຽກງານການສຶກສາຢູ່ຕະຫຼອດເວລາ.



ຄວາມເສຍສະຫຼະ ແລະນ້ຳໃຈອັນປະເສີດຍອດຍິ່ງຂອງປ້າ ທີ່ມອບໃຫ້ລູກຫຼານ ຊາວເຂດຄັງວຽງ ໃນ 9 ບ້ານນັ້ນ ປຽບເໝືອນສາຍຝົນ ທີ່ໂຮຍຮໍາລົງໃສ່ເຂົ້າໃນນາທີ່ກໍາລັງຕັ້ງຕົ້ນຖອກຮວງ ບັນດາເມັດເຂົ້າ ທີ່ຖືກຝົນຕົກໂຮຍຮໍ່າ ກໍຈະມີເມັດຕຶ່ງເຕັມດີ, ແລະສຸກເຫຼືອງໃນທົ່ວທົ່ງນາຄືກັບພວກລູກຫຼານນັກຮຽນທີ່ມີສະຖານທີ່ສຶກສາທີ່ດີ, ມີໂຮງຮຽນງາມ, ມີຫ້ອງສະໝຸດ, ມີບ່ອນຫຼິ້ນກິລາ, ມີເຄື່ອງດົນຕີ ແລະ ເຄື່ອງອໍານວຍຄວາມສະດວກຫຼາຍປະການທີ່ຮັບໃຊ້ເຂົ້າໃນວຽກງານ ການສຶກສາ ເຮັດໃຫ້ວຽກງານການສຶກສາຢູ່ໂຮງຮຽນອິນແປງພວກເຮົາມີປະສິດທິຜົນທາງດ້ານປະລິມານແລະຄຸນນະພາບ ພຽບພ້ອມໄປດ້ວຍສະຕິປັນຍາ ແລະທຽບທັນກັບບ່ອນອື່ນໆ.

ໃນໂອກາດອັນສະຫງ່າລາສີ, ເລີກງານຍາມດີ ທີ່ມີຄວາມໝາຍຄວາມສໍາຄັນ ພວກຂ້າພະເຈົ້າ ຂໍຂອບໃຈ ແລະ ຮູ້ບຸນຄຸນມາຍັງບັນດາທ່ານ ທີ່ໄດ້ບີແບ່ງກ້ອນທຶນນ້ຳໃຈ ເພື່ອມາພັດທະນາໃນໂຮງຮຽນແຫ່ງນີ້. ຂໍສະແດງຄວາມຮູ້ບຸນຄຸນມາຍັງບໍລິສັດທີ່ໄດ້ຮັບເໝົາກໍ່ສ້າງຈົບສໍາເລັດໂດຍໝາກຜົນອັນຈົບງາມ ຜົນງານອັນປະເສີດເລີດລ້ຳດັ່ງກ່າວ ພວກເຮົາຂໍຈົດຈໍາ ພ້ອມທັງບັນທຶກໄວ້ ໃນປຶ້ມປະຫວັດສາດຂອງໂຮງຮຽນຕະຫຼອດໄປ ແລະ ພວກເຮົາຈະຂໍຮັກສາ ແລະ ຊົມໃຊ້ໃຫ້ເກີດປະໂຫຍດອັນສູງສົ່ງແກ່ປະເທດຊາດ ແລະ ສັງຄົມຈົນກຸ້ມຄ່າຕະຫຼອດໄປ



# ບາດກ້າວໃໝ່ ມສ. ອິນແປງ

ວັນດີ ສີຖູນເມືອງ ຜູ້ອຳນວຍການ
ໂຮງຮຽນມັດທະຍົມ ສົມບູນອິນແປງ

ມາເຖິງມື້ນີ້ ພື້ນຖານເພື່ອພັດທະນາການສຶກສາ ຂອງໂຮງຮຽນ ມັດທະຍົມ ສົມບູນ ອິນແປງ ຄັງວຽງ ທຽບກັບໄລຍະກ່ອນ ເຫັນວ່າມີຫຼາຍຢ່າງ ກ້າວກະໂດດຂັ້ນ ທັງດ້ານປະລິມານ ແລະຄຸນນະພາບ ໂດຍສະເພາະທາງດ້ານອາຄານ ສະຖານທີ່ບ່ອນຮ່ຳຮຽນ ເຫັນວ່າກ້າວໄກກວ່າໄລຍະເກົ່າເປັນຫຼາຍໆເທົ່າ.

ນັບແຕ່ປີ 2001 ເປັນຕົ້ນມາ ມສ. ອິນແປງ ໄດ້ມີອາຄານຮຽນຖາວອນ 1 ຫຼັງ ມີ 6 ຫ້ອງຮຽນ ແລະຫ້ອງການຄູພ້ອມ, ຮອດປີ 2009-2010 ພວກເຮົາກໍມີ ໂຮງຮຽນອີກ 2 ຫຼັງ ມີຂະໜາດ 8x64 ແມັດ ແລະອີກຫຼັງໜຶ່ງມີຂະໜາດ 6x48 ແມັດ ພ້ອມທັງໄດ້ຫໍຂ່າວ, ຫ້ອງສະໝຸດ, ເດີ່ນເຕະບານ, ບານສົ່ງ, ກະຕໍ້ຫວາຍ, ເດີ່ນບູນ ຮົ້ວອ້ອມໂຮງຮຽນ, ເຄື່ອງຂະຫຍາຍສຽງ, ຄອມພິວເຕີ, ປຶ້ມແບບຮຽນ, ວາລະສານອື່ນໆ ພ້ອມທັງເຄື່ອງຮັບໃຊ້ໃຫ້ແກ່ນັກຮຽນ, ຊາວໜຸ່ມ, ເຍົາວະຊົນເຊິ່ງລວມເປັນມູນຄ່າຢ່າງຫຼວງຫຼາຍ ເວົ້າແລ້ວພວກເຮົາມີເກືອບພ້ອມທຸກສິ່ງຢ່າງ.

ແຕ່ວ່າເນື່ອງຈາກວຽກງານການສຶກສາຂອງລູກຫຼານ ເດັກເຍົາວະຊົນບັນດາເຜົ່າໃນເຂດຄັງວຽງ ກໍຄືພໍ່ແມ່ປະຊາຊົນຜູ້ຂຶ້ນກັບເຂດບໍລິການຂອງພວກເຮົາໄດ້ເພີ່ມຂຶ້ນ ແລະຄູອາຈານກໍເພີ່ມຂຶ້ນເປັນລຳດັບ, ຄູອາຈານຈຳນວນໜຶ່ງ ທີ່ມີຄວາມຮູ້ຄວາມສາມາດແຕ່ຢູ່ຫ່າງໄກ ໂດຍສະເພາະແມ່ນຄູໂສດ, ຈຶ່ງຍັງບໍ່ທັນມີຫໍພັກພາອາໄສ ພ້ອມນັ້ນກໍມີຄວາມຫຍຸ້ງຍາກ ໃນການນຳໃຊ້ຫໍສະໝຸດເປີດກວ້າງຮັບໃຊ້ ໃຫ້ແກ່ຄູອາຈານ, ນັກຮຽນຮູ້ນັກສຶກສາ ແລະແກ່ສັງຄົມຊຸມຊົນ ແລະອີກອັນໜຶ່ງໂຮງຮຽນ ຂອງພວກເຮົາກໍຍັງຂາດສະຖານທີ່ໃຊ້ເປັນບ່ອນຊຸມນຸມ ລວມກອງແຕ່ລະອາທິດ ຫຼືເປີດຊຸມນຸມຕ່າງໆ



ຂອງອຳນາດການປົກຄອງທຸກຂັ້ນເຊັ່ນ: ສະເຫຼີມສະຫຼອງບຸນປະຫວັດສາດຕ່າງໆ ຂອງຊາດລາວ. ຜ່ານມາເຮັດຢູ່ກາງເດີ່ນ ບາງຄັ້ງຟ້າລົມຝົນຕົກ, ບາງຄັ້ງແດດຮ້ອນ ຫຼື ໜາວ ເຮັດໃຫ້ລູກຫຼານທັງໝົດພົບຄວາມຫຍຸ້ງຍາກຫຼາຍ.

ສະນັ້ນ ພວກລູກຫຼານ ຜູ້ບໍລິຫານໂຮງຮຽນ ຄູອາຈານນັກຮຽນຮູ້ ນັກສຶກສາ ຈຶ່ງໄດ້ປະສານສົມທົບອຳນາດການປົກຄອງແຕ່ລະຂັ້ນ ຮ້ອງຂໍຄວາມຊ່ວຍເຫຼືອຈາກ ປ້າຄຳເມີງ ວໍລະຈິດ ພ້ອມດ້ວຍຄອບຄົວ ແລະຍາດຕິພີ່ນ້ອງ, ທີ່ເປັນຮົ່ມໂພຮົ່ມໄຊໃຫ້ ແກ່ລູກຫຼານຄືດັ່ງຜ່ານມາ ຕອບສະໜອງຕາມຄວາມຮ້ອງຂໍນັ້ນ ໃນປີນີ້ 2011 ປ້າຈຶ່ງ ໄດ້ໃຫ້ຄວາມເມດຕາກະລຸນາຕື່ມອີກມີຄື:

| | | |
|---|---|---|
| 1. ຫ້ອງສະໝຸດ | 6 x 9 ແມັດ | 1 ຫຼັງ |
| 2. ຫໍພັກຄູ | 7 x 24 ແມັດ | 1 ຫຼັງ |
| 3. ສະໂມສອນ | 12 x 30 ແມັດ | 1 ຫຼັງ |

ສິ່ງທັງໝົດນັ້ນ ໄດ້ເປັນກຳລັງໃຈອັນໃຫຍ່ຫຼວງໃຫ້ແກ່ຄູອາຈານ ມີຄວາມຫ້າວຫັນ, ມີຄວາມພູມໃຈ, ຄວາມບຸກບືນຕໍ່ວຽກງານການຮຽນການສອນ, ມີຄວາມຂະຫຍັນຂັນແຂງ ແລະມີຄວາມອົດທົນ.



ນັກຮຽນກໍມີຄວາມກະຕືລືລົ້ນ, ມີຄວາມພູມໃຈໄດ້ຕັ້ງໜ້າສຶກສາຮ່ຳຮຽນເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີຄວາມຮູ້ ຄວາມສາມາດ ມີຄຸນສົມບັດ ສິນທຳປະຈຳໃຈ, ຮູ້ຮັກມູນເຊື້ອວັດທະນະທຳອັນດີງາມຂອງຊາດໄວ້. ພ້ອມທັງໄດ້ສຶກສາ ມີໂອກາດພັດທະນາຄຸນນະພາບຊີວິດໃຫ້ດີຂຶ້ນ.

ສຳລັບປະຊາຊົນ ໃນກຸ່ມພັດທະນາຄັງວຽງ ກໍໄດ້ຫຼຸດຜ່ອນໃນການອອກເຫື່ອເຫແຮງ ແລະວັດຖຸສິ່ງຂອງ ຈິດໃຈອື່ນໆ ເພື່ອສ້າງອາຄານຮຽນໃຫ້ລູກຫຼານໄດ້ສຶກສາຄົ້ນຄວ້າຮ່ຳຮຽນໃຫ້ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດຄຽງຄູ່ກັນໄປ.

ດັ່ງນັ້ນ ພວກລູກຫຼານ ຄູອາຈານ, ນັກຮຽນຮູ້, ນັກສຶກສາ ກໍຄືອຳນາດການປົກຄອງທຸກຂັ້ນ ພ້ອມດ້ວຍພໍ່ແມ່ເຖົ້າແກ່ຊາວເຂດຄັງວຽງ ທັງໝົດ ມີຄວາມພາກພູມໃຈຫາອັນປຽບບໍ່ໄດ້ ແລະຮູ້ບຸນຄຸນຢ່າງລົ້ນເຫຼືອມາຍັງພັກ-ລັດ ຂັ້ນເທິງທີ່ມີຄວາມເອົາໃຈໃສ່ຊອກຫາ ແຫຼ່ງທຶນມາພັດທະນາການສຶກສາຢູ່ທ້ອງຖິ່ນຂອງພວກເຮົາ ເຮັດໃຫ້ລູກຫຼານນັກຮຽນບັນດາເຜົ່າຢູ່ໃນເຂດຄັງວຽງ ເມືອງແປກ ແຂວງຊຽງຂວາງ ໄດ້ມີສະຖານທີ່ຮ່ຳຮຽນໝົດທຸກຄົນ ແລະໄດ້ນຳໃຊ້ຫ້ອງສະໝຸດ.



ໃນນາມຜູ້ອຳນວຍການໂຮງຮຽນ ມ.ສ. ອິນແປງ ຂໍສະແດງຄວາມຮູ້ບຸນຄຸນ ຂອບອົກຂອບໃຈເປັນຢ່າງສູງມາຍັງ ພັກ-ລັດ ຂັ້ນເທິງ ທີ່ໄດ້ອຳນວຍຄວາມສະດວກ. ພິເສດມາຍັງປ້າຄຳເມີງ ວໍລະຈິດ ພ້ອມດ້ວຍຄອບຄົວ ເຊິ່ງເປັນຄອບຄົວການນຳຂັ້ນສູງ ພ້ອມດ້ວຍຍາດຕິພີ່ນ້ອງ ທີ່ໄດ້ທຸ່ມເທແນວຄິດຈິດໃຈ ໄດ້ບີແບ່ງເວລາອັນປະເສີດ, ມີຈິດໃຈເອື້ອເຟື້ອເຜື່ອແຜ່ ເປັນຫ່ວງເປັນໃຍນຳປະເທດຊາດ ໂດຍສະເພາະກໍຄືບ້ານເກີດເມືອງນອນຂອງຕົນເອງ ເຫັນໄດ້ຄວາມທຸກຍາກ ລຳບາກຂອງປະຊາຊົນ ກໍຄືນັກຮຽນຢູ່ພື້ນຖານທ້ອງຖິ່ນດົນນາໄດ້ມີແນວຄິດອັນຍອດຍິ່ງໄດ້ປຸກລະດົມທຶນຮອນພາກສ່ວນຕ່າງໆ ຈາກບໍລິສັດ, ຄອບຄົວ, ບຸກຄົນ ມາປະກອບສ່ວນທາງດ້ານຈິດໃຈວັດຖຸ ເງິນຄຳ ທຶນຮອນອັນມະຫາສານມາປຸກສ້າງອາຄານຕ່າງໆ ເຮັດໃຫ້ ມ.ສ. ອິນແປງມີບາດກ້າວ, ມີໃບໜ້າອັນໃໝ່ເກີດຂຶ້ນ ແນໃສ່ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້ຄວາມສາມາດຕາມທິດທາງ 4 ບຸກທະລຸ, 4 ອົບຮົມມູນເຊື້ອຈາກບັນພະບູລຸດ ແລະ 5 ການສຶກສາໃນໂຮງຮຽນ ເພື່ອສືບທອດພາລະກິດຂອງຊາດໃຫ້ຍືນຍົງ.



## ວັນສີ ທິຖາວອນ

**ຫົວໜ້າກຸ່ມພັດທະນາຄັງວຽງ**

..................................

ຂ້າພະເຈົ້າ ມີຄວາມຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ມາຮອດເວລານີ້ ເຂດຄັງວຽງຂອງພວກເຮົາ ໄດ້ມີສິ່ງອຳນວຍຄວາສະດວກໃນການພັດທະນາການສຶກສາ ເຊັ່ນ: ມີໂຮງຮຽນດີໆຄືແນວນີ້ໃຫ້ລູກຫຼານໄດ້ເຂົ້າຮ່ຳຮຽນ, ມີຫ້ອງການໃຫ້ຄູອາຈານ ໄດ້ເຮັດວຽກ, ມີຫໍພັກໃຫ້ຄູທີ່ມາແຕ່ເຂດຫ່າງໄກໄດ້ພັກເຊົາ, ມີຫ້ອງສະໝຸດ ໃຫ້ຄູອາຈານ ລູກຫຼານນັກຮຽນ ແລະພໍ່ແມ່ປະຊາຊົນໄດ້ນຳໃຊ້ ເພື່ອສຶກສາຮຽນຮູ້ຂໍ້ມູນຕ່າງໆ, ມີສະໂມສອນເປັນບ່ອນເຕົ້າໂຮມເພື່ອປະກອບກິດຈະກຳຕ່າງໆ, ມີເດີ່ນຫຼິ້ນກິລາ ຫັດແອບກາຍະກຳ ລວມທັງມີສຳນັກງານ ຫ້ອງການກຸ່ມ ແລະອື່ນໆ

ທັງໝົດເຫຼົ່ານີ້ ແມ່ນກຳເນີດມາຈາກຮົ່ມປາລະມີຂອງປ້າຄຳເມີງ ອໍລະຈິດ ພ້ອມດ້ວຍຄອບຄົວ ຕະຫຼອດຮອດຜູ້ປະກອບທຶນທັງຫຼາຍ ພ້ອມທັງການຈັດຕັ້ງອຳນາດການປົກຄອງທ້ອງຖິ່ນ ແລະພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ໄດ້ສຸມສະຕິປັນຍາເສຍ ສະຫຼະວັດຖຸເງິນຄຳ ພ້ອມກັນສ້າງສາພັດທະນາໂຮງຮຽນ ອິນແປງ ແຫ່ງນີ້ໃຫ້ກາຍເປັນໂຮງຮຽນມັດທະຍົມຢ່າງສົມບູນ ຊຶ່ງຖ້າທຽບປັດຈຸບັນໃສ່ເມື່ອກ່ອນໄກກັນປານຟ້າ ກັບດິນ ຄິດໆ ໄປແລ້ວກໍຄືກັບວ່າມີຟ້າແຖນ ອິນພົມ ໂປດປະທານດົນບັນດານໃຫ້ຄວາມເມດຕາ ສົງສານຈັ່ງຊັ້ນລະ ເພາະຂ້າພະເຈົ້າບໍ່ນຶກບໍ່ ຝັນວ່າຊິໄດ້ມາຄືແນວນີ້.

ປັດຈຸບັນນີ້ ວຽກງານການສຶກສາຢູ່ກຸ່ມບ້ານພັດທະນາຄັງວຽງ ຂອງພວກເຮົາ ພວມພຸ່ງເດັ່ນຂຶ້ນສູ່ສາຍຕາຂອງສັງຄົມ ເພາະມັນໄດ້ເກີດມີສີສັນອັນໃໝ່ ຊຶ່ງປະດັບເອ້ໄປດ້ວຍຄວາມສວຍສົດງົດງາມ ທັງເປັນສະເໜປະທັບໃຈຂອງທຸກໆຄົນ. ພໍ່ແມ່ປະຊາຊົນບໍ່ໄດ້ກັງວົນແລ່ນຂາຍເປັດ ຂາຍໄກ່ ສຳລັບເປັນຄ່າລົດ ທຽວໂຮງຮຽນແກ່ລູກຫຼານຄືຕອນທີ່ຮຽນຢູ່ບ່ອນຫ່າງໄກອີກແລ້ວ, ລູກຫຼານນັກຮຽນໄດ້ຮ່ຳຮຽນຢູ່ໃກ້ສາຍ

ຕາຂອງພໍ່ແມ່ ແລະຜູ້ປົກຄອງ, ຫ່າງໄກຈາກຢາເສບຕິດ, ຫ່າງໄກຈາກແຫຼ່ງມົ້ວສຸມ ຫຼືການເສລີເຮຣາຕ່າງໆ. ພໍ່ແມ່ປະຊາຊົນກໍບໍ່ໄດ້ແບກຂວານ ແບກເລື່ອຍເຂົ້າປ່າ ເພື່ອຊອກຫາໄມ້ມາປຸກສ້າງໂຮງຮຽນ ໂຕະຕັ່ງ ກະດານດຳ ອີກແລ້ວ, ຕົ້ນແປກ ຕົ້ນຮັງ ກໍຈະມີໂອກາດປົ່ງຊໍ່ ຈໍ່ໃບ ເຕີບໃຫຍ່ຢູ່ຄູ່ໂຮງຮຽນຂອງພວກເຮົາຕະຫຼອດໄປ.

ທັງໝົດນີ້ ແມ່ນເກີດມາຈາກ ຄວາມຈິງຮັກພັກດີຕໍ່ປະເທດຊາດ, ຮັກບ້ານເກີດເມືອງນອນຂອງຕົນຢ່າງດູດດື່ມ, ຄວາມເປັນຫ່ວງເປັນໃຍໃນອະນາຄົດຂອງອະນຸຊົນຮຸ່ນຫຼັງ ທີ່ຈະເປັນຜູ້ສືບທອດ ໃນການສ້າງສາພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າ ຄວາມເມດຕາປານີ ແລະການເສຍສະຫຼະອັນສູງສົ່ງຂອງປ້າຄຳເມີງ ວໍລະຈິດ ພ້ອມດ້ວຍທ່ານຜູ້ໃຈບຸນທັງຫຼາຍ.

ນະໂອກາດນີ້ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍ ແລະຮູ້ບຸນຄຸນເປັນຢ່າງສູງຕໍ່ປ້າຄຳເມີງ ວໍລະຈິດ ພ້ອມຄອບຄົວ ແລະທ່ານຜູ້ໃຈປະເສີດທັງຫຼາຍທີ່ໄດ້ປະກອບສ່ວນທັງສະຕິປັນຍາ ວັດຖຸເງິນຄຳ ອັນມະຫາສານນຳມາສ້າງສາ ພັດທະນາໂຮງຮຽນແຫ່ງນີ້ຈົນກາຍເປັນໂຮງຮຽນແບບຄົບວົງຈອນ ແລະຖາວອນອີກດ້ວຍ.





## ສົມລິດ ພົນອາສາ

ຂ້າພະເຈົ້າ ເປັນຄູສອນ ວິຊາເຄມີສາດ. ຮັບຜິດຊອບຫ້ອງສະໝຸດຂອງໂຮງຮຽນອິນແປງມາເປັນເວລາສອງສົກຮຽນກວ່າ.

ຂ້າພະເຈົ້າ ເປັນຄູສອນ ຜ່ານມາຫຼາຍປີ  ຫຼາຍໂຮງຮຽນແລ້ວ ເຫັນສະພາບການຮຽນ ການສອນ ມາມາກມາຍ ມີຄວາມປະທັບໃຈຕໍ່ ຫຼາຍສິ່ງຫຼາຍຢ່າງໃນຊີວິດ ແຕ່ກໍຍັງບໍ່ມີຄວາມປື້ມປິຕິດີໃຈຫາອັນປຽບບໍ່ໄດ້  ແລະຊາບຊຶ້ງໃຈໃຫຍ່ຫຼວງເໝືອນຄັ້ງນີ້.ເພາະວ່າ ພວກເຮົາໄດ້ຮັບນ້ຳໃຈອັນປະເສີດ  ຄວາມເມດຕາປານີຂອງ ລຸງ-ປ້າ ພ້ອມດ້ວຍຍາດພີ່ນ້ອງຜູ້ ໃຈບຸນທັງຫຼາຍ  ຜູ້ຊຶ່ງໄດ້ມອງເຫັນອະນາຄົດອັນຍາວໄກຂອງລູກຫຼານ   ຈຶ່ງໄດ້ໃຫ້ທຸກ  ສິ່ງທຸກຢ່າງສຳລັບການສຶກສາໃນໂຮງຮຽນແຫ່ງນີ້:  ອາຄານຮຽນ, ຫ້ອງສະໝຸດ, ຫໍພັກຄູ, ສະໂມສອນ ສະໜາມກິລາ... ສິ່ງດັ່ງກ່າວນັ້ນແມ່ນ ເປັນແສງສະຫວ່າງ, ໃຫ້ຄວາມຈະເລີນຮຸ່ງເຮືອງ ແລະ ໄດ້ສ້າງໃບໜ້າໃໝ່ບໍ່ພຽງແຕ່ ໂຮງຮຽນອິນແປງ ທີ່ນັ້ນແຕ່ຍັງລວມທັງເຂດຄັ້ງວຽງອີກດ້ວຍ.

ພິເສດແມ່ນຫ້ອງສະໝຸດ  ຊຶ່ງຖືເປັນການໄຂໜ້າປະຫວັດສາດ ຂອງໂຮງຮຽນທັງນີ້ກໍຍ້ອນວ່າ   ຫ້ອງສະໝຸດແມ່ນທະນາຄານ   ແຫ່ງຄວາມຮູ້ແກ່ຜູ້ສະແຫວງຫາ, ຂ້າພະເຈົ້າ  ຄິດວ່າບໍ່ມີໂຮງຮຽນໃດຈະສາມາດສອນໄດ້ທຸກວິຊາ  ຄວາມຮູ້ໃຫ້ແກ່ຜູ້ທີ່ເຂົ້າຮຽນ. ມີແຕ່ຫໍສະໝຸດເທົ່ານັ້ນ  ທີ່ສາມາດໃຫ້ຄວາມຮູ້ທຸກສິ່ງຢ່າງ  ແກ່ຜູ້ຮຽນໄດ້, ເມື່ອມີຫ້ອງສະໝຸດແລ້ວ  ຂ້າພະເຈົ້າຄິດວ່າຈະໃຫ້ບໍລິການແກ່ຄູ,  ນັກຮຽນ  ແລະຜູ້ສົນໃຈໃນສັງຄົມ ເພື່ອຮຽນຮູ້ຄົ້ນຄວ້າເຮັດໃຫ້ຕົນເອງມີຄວາມຮູ້ ສະຕິປັນຍາ, ເຕັກນິກວິທະຍາສາດ  ແລ້ວນຳໃຊ້ເຂົ້າໃນຊີວິດຕົວຈິງເພື່ອພັດທະນາຕົນເອງ,  ພັດທະນາບ້ານເມືອງ  ແລະແນ່ນອນວ່າຫ້ອງສະໝຸດນີ້  ຈະປະກອບສ່ວນສ້າງໃຫ້ລູກຫຼານກາຍເປັນນັກຮຽນ ທີ່ຮຽນດີ-ຮຽນເກັ່ງ  ມີຄຸນນະພາບທາງດ້ານການສຶກສາ ສົມດັ່ງຄວາມຫວັງຕັ້ງໃຈຂອງພວກເຮົາທັງຫຼາຍ.



## ນາງ ສອນເພັດ ດາລາວົງ

ຂ້າພະເຈົ້າ ໃນນາມອາຈານ ແລະນັກ ສຶກສາ ໃນຫ້ອງສະໝຸດ ມີຄວາມຮູ້ສຶກພາກພູມ ໃຈເປັນຢ່າງລົ້ນເຫຼືອຫາສິ່ງໃດປຽບບໍ່ໄດ້ທີ່ທ່ານຜູ້ມີນ້ຳໃຈ ເມດຕາ ກະລຸນາ ເອື້ອເຟື້ອເຜື່ອ ແຜ່ອັນສູງສົ່ງ ໃຫ້ທັງ ວັດຖຸ ແລະ ຈິດໃຈ ພ້ອມທັງເສຍສະ ຫຼະເວລາອັນມີຄຸນຄ່າ ຂອງບັນດາທ່ານມາຈັດຝຶກອົບຮົມ ໃຫ້ຄວາມຮູ້ກ່ຽວກັບການນຳໃຊ້ຫ້ອງສະໝຸດ.

ພວກເຮົາທີ່ໄດ້ເຂົ້າອົບຮົມໃນທີ່ຜ່ານມາ ມີຄວາມຊາບຊຶ້ງໃນຄວາມກະລຸນາ ຂອງທ່ານເປັນຢ່າງສູງທີ່ໄດ້ໃຫ້ຄວາມຮູ້ກະຈ່າງແຈ້ງ ອັນເປັນຫຼັກວິຊາການ ໃນການ ຊົມໃຊ້ຫ້ອງສະໝຸດ ຫຼືຫ້ອງອ່ານ. ການອົບຮົມນັ້ນ ເຮັດໃຫ້ສະມາຊິກຫ້ອງສະໝຸດ ແລະຜູ້ທີ່ມາຈາກໂຮງຮຽນອ້ອມຂ້າງທັງຫຼາຍໄດ້ຮູ້ເຫັນຄຸນຄ່າ ແລະຄຸນປະໂຫຍດຫ້ອງ ສະໝຸດ ແລະຮູ້ຈັກນຳໃຊ້ປຶ້ມປະກອບເຂົ້າໃນການຮຽນ-ການສອນ, ຮູ້ຈັກການຈັດ ໝວດໝູ່ຂອງປຶ້ມແຕ່ລະຊະນິດ, ການລົງທະບຽນປຶ້ມແຕ່ລະປະເພດ,ການຕິດສັນ, ຕິດ ຊອງ, ການຂຽນລະຫັດປຶ້ມແຕ່ລະໝວດ ແຕ່ລະຫົວ ແລະປຶ້ມແຕ່ລະຊະນິດໃຫ້ດີຂຶ້ນ.

ນອກຈາກນັ້ນ ທ່ານຍັງໄດ້ນຳເອົາປຶ້ມຫຼາຍຊະນິດ ມາໃຫ້ຫ້ອງສະໝຸດຂອງ ໂຮງຮຽນພວກເຮົາ ເພື່ອໃຫ້ນັກຮຽນ ແລະຜູ້ສົນໃຈໄດ້ອ່ານຄົ້ນຄວ້າຊອກຫາຄວາມຮູ້ ອັນໃໝ່ໆຈາກສິ່ງທີ່ບໍ່ເຄີຍຮູ້ບໍ່ເຄີຍເຫັນມາກ່ອນເຊັ່ນ: ປຶ້ມສາສະໜາ, ປຶ້ມປະຫວັດ ທ່ານຜູ້ນຳ, ປຶ້ມເພງປະຕິວັດ, ປຶ້ມມູນເຊື້ອໂຮງຮຽນ ມ.ສ. ອິນແປງ, ໂຮງຮຽນ ມ.ສ. ໜອງເປັດເປັນຕົ້ນ. ຂ້າພະເຈົ້າຮູ້ສຶກຊາບຊຶ້ງໃນຄວາມກະລຸນາຂອງທ່ານ ທີ່ໄດ້ເສຍສະ ຫຼະເວລາມາໃຫ້ຄວາມຮູ້ແກ່ພວກເຮົາ. ຄວາມຮູ້ທີ່ພວກເຮົາໄດ້ຮັບໃນຜ່ານມານັບວ່າມີ ຄຸນຄ່າອັນປະເສີດ.

ທ້າຍນີ້ຂໍອວຍພອນໄຊອັນປະເສີດ ໃຫ້ແກ່ບັນດາທ່ານຈົ່ງມີແຕ່ຄວາມສຸກ ຄວາມເຈັບຢ່າໄດ້ ຄວາມໄຂ້ຢ່າໃຫ້ມີ ນອນຫຼັບໄດ້ເງິນໝື່ນ ນອນຕື່ນໃຫ້ໄດ້ເງິນແສນ ຂໍໃຫ້ທ່ານປະສົບຜົນສຳເລັດ ໃນໜ້າທີ່ວຽກງານ ແລະຄອບຄົວຂອງທ່ານຈົ່ງມີຄວາມຜາສຸກຕະຫຼອດໄປ

*ຂໍຊົມເຊີຍຝາກຕ້ອນ ບັນດາທ່ານທັງຫຼາຍ*
*ຜູ້ບັນຍາຍອົບຮົມ ສົ່ງຊູຄວາມຮູ້*
*ເປັນທວນໄຟເຍືອງໃຫ້ ຫວນເຫັນຮູ້ຮ່ອມ*
*ເປີດປ່ອງທາງ ສ້າງຊີ້ຫ້ອງສະໝຸດບ່ອນຄົ້ນ*
*ຄວາມຮູ້ໃຫ້ໝູ່ຊົນ*

*ທັງປະດິດຄິດສ້າງ ເສຍສະຫຼະສິດຜົນ*
*ປະໂຫຍດຕົນຕັດເສຍ ບໍ່ຫ່ວງໃຍຄາຂ້ອງ*
*ເພື່ອສະໜອງໝູນຍູ້ ຊູແຮງຜົນປະໂຫຍດ*
*ຂອງສ່ວນລວມຮ່ວມເຂົ້າ ເປັນເຈົ້າຮ່ວມກັນ ແທ້ນາ*



## ນາງ ຫຼ້າອານົງ

ຂ້ານ້ອຍໃນນາມນັກຮຽນຫ້ອງ ມ.5 ຂອງ ໂຮງຮຽນ ມ.ສ. ອິນແປງ ມີຄວາມພາກພູມໃຈ ຢ່າງລົ້ນເຫຼືອທີ່ເຫັນວ່າໃນສົກຮຽນນີ້ ມສ.ອິນແປງໄດ້ມີໃບໜ້າໃໝ່

ເພື່ອສະແດງຄວາມຮູ້ບຸນຄຸນ ຄວາມເປັນເຍົາວະຊົນ ແລະນັກຮຽນທີ່ດີ ຂ້ານ້ອຍ ຈະຕັ້ງໜ້າເອົາໃຈໃສ່ຮ່ຳຮຽນໃຫ້ເກັ່ງ, ເຝິກຝົນ ຫຼໍ່ຫຼອມຕົນເອງໃຫ້ເປັນນັກຮຽນທີ່ດີຂອງຄູອາຈານເປັນພົນລະເມືອງດີຂອງ ປະເທດຊາດ ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນ ເຫຼືອມາຍັງປ້າຄຳເມິງ ວໍລະຈິດ ແລະຄອບຄົວ ລູກຫຼານ ພ້ອມດ້ວຍ ບັນດາທ່ານ ຜູ້ໃຈບຸນທັງຫຼາຍ ແລະພໍ່ແມ່ພີ່ນ້ອງຄູອາຈານ ການຈັດຕັ້ງທຸກພາກສ່ວນທີ່ໄດ້ ພ້ອມກັນປະກອບສ່ວນພັດທະນາໂຮງຮຽນ ມ.ສ. ອິນແປງ ແຫ່ງນີ້ໃຫ້ຈົບງາມ



## ນາງ ຄຳສີ ຈັນທະດາວົງ

ຂ້າພະເຈົ້າ ເປັນຄູສອນຮຸ່ນ ອາວຸໂສ ຜູ້ໜຶ່ງ, ຈົບການສຶກສາປະລິນຍາຕີ ທີ່ມະຫາວິທະຍາໄລຄູ ດົງໂດກ ວຽງຈັນ ປີ 1980 ສາຍ ວິທະຍາສາດ ສັງຄົມ, ຫຼັງຈາກຮຽນຈົບແລ້ວ ໄດ້ມາສອນຢູ່ຫຼາຍໂຮງຮຽນ ຈົນມາຮອດ 1996 ຂ້າພະເຈົ້າ ໄດ້ມາສອນທີ່ໂຮງຮຽນອິນແປງ ຈົນ ເຖິງປັດຈຸບັນສອນ ວິຊາວິທະຍາສາດ ສັງຄົມ ຕະຫຼອດມາ.

ຂ້າພະເຈົ້າເປັນຄູສອນຈົນເກືອບຈະກ້າວເຂົ້າບຳນານແລ້ວ ແຕ່ກໍບໍ່ມີຄວາມພາກພູມໃຈອັນໃດມາກ່ອນ ແຕ່ມາບັດນີ້ມີນ້ຳໃຈອັນປະເສີດຂອງ ລຸງ-ປ້າ ພ້ອມດ້ວຍຍາດພີ່ນ້ອງທີ່ມອງເຫັນວ່າອະນາຄົດອັນຍາວໄກຂອງລູກຫຼານນັ້ນຈະມີຄວາມຮູ້, ຄວາມສາມາດກໍຕ້ອງແມ່ນການສຶກສາເປັນບ່ອນຊຸບຫຼໍ່, ປ້າລຸງໄດ້ໃຫ້ທຸກສິ່ງຢ່າງສຳລັບການສຶກສາແຫ່ງນີ້ ມີທັງໂຮງຮຽນ ຫ້ອງສະໝຸດ ຫໍພັກຄູ ສະໂມສອນ ເດີ່ນບານງາມ... ສິ່ງດັ່ງກ່າວມານັ້ນ ເປັນສິ່ງທີ່ບໍ່ເຄີຍມີມາກ່ອນໃນເຂດນີ້, ໄດ້ໃຫ້ແສງສະຫວ່າງ, ໃຫ້ຄວາມຈະເລີນ ຮຸ່ງເຮືອງ ໃນເຂດຄັງວຽງ ເວົ້າສະເພາະແມ່ນໂຮງຮຽນ ມ.ສ. ອິນແປງແຫ່ງນີ້, ລູກຫຼານຂອງພໍ່ແມ່ປະຊາຊົນຈະໄດ້ຊົມໃຊ້ໃຫ້ມີປະໂຫຍດ,ໃນອະນາຄົດຄົງມີລູກຫຼານທີ່ມີຄຸນນະພາບດີຂຶ້ນກວ່າເກົ່າ.

ໃນນາມຂ້າພະເຈົ້າເປັນຄູສອນຢູ່ໂຮງຮຽນແຫ່ງນີ້ ກໍປາບປື້ມໃຈຫາສິ່ງປຽບບໍ່ໄດ້ ແລະ ກໍບໍ່ຊ່າງຈະລະບາຍອັນໃດອອກມາໃຫ້ສົມກັບຄວາມດີໃຈຂອງຕົນເອງ ທີ່ເຫັນລຸງ-ປ້າ ພ້ອມດ້ວຍຍາດພີ່ນ້ອງໄດ້ທຸ່ມເທຊັບສິນຢ່າງມະຫາສານໃຫ້ ແກ່ລູກຫຼານໃຫ້ແກ່ປະຊາຊົນ ແລະຄູອາຈານ, ຂ້າພະເຈົ້າພ້ອມແລ້ວ ທີ່ຈະອຸທິດວຽກງານ, ສະຕິປັນຍາ ເພື່ອກໍ່ສ້າງລູກຫຼານໃຫ້ກາຍເປັນນັກຮຽນດີ-ຮຽນເກັ່ງດັ່ງຄວາມຫວັງ ຕັ້ງໃຈຂອງທຸກໆ ທ່ານທີ່ມີໄວ້ໃນອະນາຄົດ.

# ອິນແປງ "ປ້າ"ບັນດານ



ໂດຍ: ຫົງເຫີນ ຂຸນພິທັກ

...........................................

ມື້ກ່ອນ ໂຮງຮຽນອິນແປງຫຼັງນ້ອຍໆ ງອຍຢູ່ກາງດົງ
ສ້າງກໍ່ຄົນດົງວຽງ ໃຫ້ໃຫຍ່ສູງຮຽນຮູ້
ບາດວ່າ ໄຟສົງຄາມເຜົາໄໝ້ ສູນເສຍບໍ່ເຫຼືອຮ່ອມ ອັນໃດແລ້ວ
ຊາວດົງວຽງ ແສນລະທົມທຸກໄຮ້ ເມືອງບ້ານກໍເປົ່າແປນ

ຄັນເມື່ອ ສັນຕິພາບຕ່າວຕັ້ງ ຊາວດົງຄ່ອຍຄືນຂວັນ
ສ້າງກໍ່ເຮືອນໂຮງຮຽນ ໄຮ່ນາເມືອງບ້ານ
ອິນແປງ ກໍໄດ້ຟູຜຸດຂຶ້ນ ກາງດົງອີກເທື່ອໃໝ່
ດ້ວຍນ້ຳໃຈ ຈິດໄຝ່ຝັນສືບສ້າງ ມູນເຊື້ອພໍ່ແມ່ມີ

ບັດນີ້ ອິນແປງຖືກແຕ່ງປັ້ນ ເພື່ອກ້າວດຸ່ງເດີນໄກ
ທຸກສິ່ງມີມາຄົບ ຊູ່ອັນມວນພ້ອມ
ຝັນໄດ້ກາຍເປັນຈິງແລ້ວ ເຍົາວະຊົນຊ້ອຍຊິ່ນ
ຮື່ນໆ ເສີມສົ່ງສ້າງ ໃຫ້ຄົນກ້າວກວ່າເກົ່າຫຼັງ

ລູງບຸນຍັງ ປ້າຄຳເມິງ ເປັນຜູ້ຍໍຍື່ນໃຫ້ ບຸນປູກປັນຍາ
ທ່ານທັງຫຼາຍຮວມໂຮມ ຮ່ວມເສີມຊູຊວ້ານ
ດຸດດັ່ງ "ອິນແປງປັ້ນ" ບັນດານແດນມິ່ງ ເຮືອງແລ້ວ
ຖິ່ນດົງຄາຍ ເມືອງແປກວິລະຊົນ ນັບມື້ຟູພຸ່ງພົ້ນ
ຄົນທັງຫຼາຍພາກັນຊົມຊື່ນຊ້ອງ ປະກາຍເຫຼື້ອມສ່ອງທະວີ ເຈົ້າເຮີຍ




## ຂອບໃຈ

ສິ່ງທີ່ຕັ້ງຕໍ່ໜ້າ　　ແມ່ນສັນຍາລັກສາມັກຄີ
ມີຊື່ສຽງກູ່ໆ, ອີກໆ　　ຮຽກຂວັນຄືນບ້ານ
ອາຈານບຸນຕາ ພ້ອມ　　ກັບທັງອາຈານປ່ຽມ
ຕາງໜ້າຄູທຸກຊັ້ນ　　ຜູກແຂນໃຫ້ຢູ່ດີ　ຂອບໃຈເນີ!.

## ຂຸມລະເບີດ

ຫຼາຍຊົ່ວດິນຊົ່ວຟ້າ　　ຫຼາຍຝົນຫ່າເຫລົງ　　ກໍຕາມທ້ອນ
ບໍ່ໄດ້ເບົາບາງບົກ　　ເພືອດຟາຍຄວາມແຄ້ນ
ບໍ່ມີພົມແດນກັ້ນ　　ກັນພວນໃຫ້ລືມງ່າຍ
ຂຸມລະເບີດນັບມື້ຕື້ນ　　ແຕ່ຄວາມແຄ້ນບໍ່ເຫືອດຫາຍ





# ເພື່ອຫ້ອງສະໝຸດ ໂຮງຮຽນມັດທະຍົມສຶກສາສົມບູນອິນແປງ

ບົວໄຂ ເພັງພະຈັນ

ນັບວ່າເປັນຄັ້ງໜຶ່ງແລະເປັນຄັ້ງທຳອິດທີ່ຂ້າພະເຈົ້າໄດ້ມີໂອກາດໄປສຳຜັດກັບຜືນແຜ່ນດິນ ຖິ່ນຊຽງຂວາງທີ່ອຸດົມສົມບູນ ແລະ ສວຍສົດງົດງາມໄປດ້ວຍທຳມະຊາດແມ່ນ້ຳລຳເຊ ພູຜາປ່າໄມ້ ( ໂດຍສະເພາະຕົ້ນແປກ ) ແລະອາກາດດີ ( ສຳລັບຜູ້ມັກອາກາດໜາວ ) ໃນໄລຍະເດືອນທັນວາ ເຖິງເດືອນກຸມພາ ຊຶ່ງໄລຍະນີ້ຖືວ່າຊຽງຂວາງເປັນເຂດທີ່ໜາວເຢັນແຫ່ງໜຶ່ງຂອງປະເທດລາວ ແລະເປັນເຂດທີ່ມີພູມີນິເວດທີ່ເປັນລັກສະນະສະເພາະ ຊຶ່ງແຂວງອື່ນບໍ່ມີ ອັນໄດ້ເຮັດໃຫ້ຂ້າພະເຈົ້າຈ້ອງມອງເບິ່ງທຳມະຊາດຕາມສອງຟາກຂ້າງຂອງຖະໜົນດ້ວຍຄວາມອອນຊອນ ພ້ອມທັງເກັບພາບໄວ້ເປັນທີ່ລະລຶກທັງມູມໃກ້ ແລະມູມໄກອອກໄປ ຢ່າງວາງກ້ອງຖ່າຍຮູບຫ່າງມືບໍ່ໄດ້ ເມື່ອກ້າວເຂົ້າສູ່ເຂດແຂວງຊຽງຂວາງ.



ເມື່ອເດີນທາງມາເຖິງບ້ານຄັງວຽງ (ໂດຍສະເພາະໂຮງຮຽນອິນແປງ) ເມືອງແປກ ແຂວງຊຽງຂວາງ ຂ້າພະເຈົ້າພ້ອມດ້ວຍຄະນະວິທະຍາກອນ ມີຄວາມຮູ້ສຶກດີໃຈ ແລະອົບອຸ່ນເປັນຢ່າງຍິ່ງ ທີ່ໄດ້ພົບ ຄູອາຈານ ນັກຮຽນ ພ້ອມດ້ວຍອຳນາດການປົກຄອງທ້ອງຖິ່ນເຂດຄັງວຽງ ໂດຍສະເພາະທ່ານວັນສີ ທີຖາວອນ ຊຶ່ງເປັນຫົວໜ້າເຂດທັງເປັນເລຂາພັກເຂດ, ທ່ານອາຈານວັນດີ ສີຄູນເມືອງ ຜູ້ອຳນວຍການ ໂຮງຮຽນມັດທະຍົມສົມບູນອິນແປງ ແລະຄູອາຈານທ່ານອື່ນໆ ຊຶ່ງໄດ້ຕ້ອນຮັບແລະພົບປະໂອ້ລົມກັບພວກຂ້າພະເຈົ້າຢ່າງເປັນກັນເອງແລະຈິງໃຈ ເຖິງການໄດ້ມາຊຶ່ງໂຮງຮຽນອິນແປງຫຼັງໃໝ່ ພ້ອມດ້ວຍຫ້ອງສະໝຸດ ແລະເດີ່ນກິລາຂອງໂຮງຮຽນ.

ຄູ ອາຈານ ພ້ອມດ້ວຍອຳນາດການປົກຄອງເຂດຄັງວຽງ ກ່າວເປັນສຽງດຽວກັນວ່າ ໂຮງຮຽນອິນແປງຫຼັງໃໝ່ ພ້ອມດ້ວຍຫ້ອງສະໝຸດແລະເດີ່ນກິລານີ້ ໄດ້ຮັບການອຸປະຖຳຂອງປ້າຄຳເມີງ ວໍລະຈິດ ຄອບຄົວການນຳພັກ-ລັດຂອງພວກເຮົາ ຊຶ່ງຍາມໃດເພິ່ນກໍເປັນຫ່ວງເປັນໃຍນຳອະນາຄົດຂອງລູກຫຼານ, ອະນຸຊົນຄົນຮຸ່ນຫຼັງ ແລະມີຄວາມຕັ້ງໃຈຈິງຕໍ່ການພັດທະນາຊັບພະຍາກອນມະນຸດອັນເປັນໜໍ່ແໜງຂອງປະເທດຊາດກໍ່ຄືການສົ່ງເສີມການສຶກສາ ແລະການອ່ານຢູ່ໃນປະເທດເຮົາ ເວົ້າສະເພາະແມ່ນໃນແຂວງຊຽງຂວາງ ເພື່ອໃຫ້ລູກຫຼານມີຄວາມຮູ້ ຄວາມສາມາດ, ມີປັນຍາສະຫຼາດ ແລະມີນິໄສຮັກການອ່ານ ໂດຍສະເພາະລູກຫຼານໃນເຂດດິນຖິ່ນຖານບ້ານ



ເກີດເມືອງນອນຂອງປ້າ ເຂດຄັງວຽງນີ້ ປ້າຈຶ່ງໄດ້ລະດົມທຶນ ຈາກສ່ວນບຸກຄົນ ແລະ ນິຕິບຸກຄົນ ສົມທົບກັບທຶນໃນຄອບຄົວຂອງປ້າເອງ ສ້າງໂຮງຮຽນຫຼັງໃໝ່ພ້ອມດ້ວຍ ຫ້ອງສະໝຸດ ແລະເດີ່ນກິລາ ດັ່ງທີ່ພວກເຮົາເຫັນ ເປັນປະຈັກຕານະທີ່ນີ້, ຊຶ່ງ 16 ປີກ່ອນ ນີ້ ໂຮງຮຽນແຫ່ງນີ້ເປັນພຽງໂຮງຮຽນມູລະປະຖົມ ຕໍ່ມາຈຶ່ງເປັນໂຮງຮຽນປະຖົມ ສົມບູນ, ມັດທະຍົມຕອນຕົ້ນ, ແລະຕໍ່ມາຈຶ່ງເປັນໂຮງຮຽນປະຖົມສົມບູນ ແລະມັດທະ ຍົມສົມບູນ ຕາມລຳດັບ ໃນສະຖານທີ່ແຫ່ງດຽວກັນນີ້.

ໃນມື້ເປີດຫ້ອງສະໝຸດ ຂອງໂຮງຮຽນຢ່າງເປັນທາງການ ໃນວັນທີ 22 ພະຈິກ 2010 ພວກຂ້າພະເຈົ້າ (ຊຶ່ງມີທ່ານອາຈານກົງເດືອນ ເນດຕະວົງ ປະທານສະມາຄົມ ຫ້ອງສະໝຸດລາວ ອະດີດຜູ້ອຳນວຍການຫໍສະໝຸດແຫ່ງຊາດ), ຂ້າພະເຈົ້າ ດຣ. ບົວໄຂ ເພັງພະຈັນ ຮອງຜູ້ອຳນວຍການຫໍສະໝຸດແຫ່ງຊາດ ແລະທ່ານນາງແສງ ຜາເມືອງ (ວິຊາການຫໍສະໝຸດແຫ່ງຊາດ) ທີ່ເປັນວິທະຍາກອນ ໃນການຝຶກອົບວິຊາການຫ້ອງ ສະໝຸດໃຫ້ແກ່ຄູ ອາຈານ ໂຮງຮຽນມັດທະຍົມ ສົມບູນອິນແປງ, ໂຮງຮຽນມັດທະຍົມສຶກ ສາຕອນຕົ້ນລາດບອກ, ໂຮງຮຽນມັດທະຍົມສຶກສາຕອນຕົ້ນນາຟ້າ ແລະນັກຮຽນໂຮງ ຮຽນມັດທະຍົມອິນແປງຈຳນວນໜຶ່ງ (ຮວມສຳມະນາກອນທີ່ເຂົ້າຮ່ວມການຝຶກອົບຮົມ ທັງໝົດ 22 ຄົນ) ໃນມື້ວັນທີ 21-23/11/2010) ມີຄວາມດີໃຈ ແລະພາກພູມໃຈ ໄປພ້ອມໆ ກັບຄູອາຈານ, ນັກຮຽນ ແລະອຳນາດການປົກຄອງເຂດຄັງວຽງ ເມື່ອໄດ້ຟັງ



ຄຳເຫັນກໍ່ຄືຄວາມຮູ້ສຶກຂອງປ້າຄຳເນິງ ວໍລະຈິດ ທີ່ປະກອບຄຳເຫັນໃນພິທີເປີດຫ້ອງສະໝຸດໂຮງຮຽນແຫ່ງນີ້ ຊຶ່ງປ້າໄດ້ກ່າວວ່າ "...ມື້ນີ້ເປັນມື້ເປີດການຝຶກອົບຮົມແລະເປັນມື້ເປີດຫ້ອງສະໝຸດຂອງໂຮງຮຽນຢ່າງເປັນທາງການ, ຂ້າພະເຈົ້າມີຄວາມດີໃຈຫຼາຍ ເພາະເຂດຄັງວຽງຂອງພວກເຮົາບໍ່ທັນມີແນວນີ້ຈັກເທື່ອມື້ນີ້ຖືວ່າເປັນມື້ປະຫວັດສາດ... ຄະນະຂອງພວກເຮົາຈະດີໃຈນຳພວກເອື້ອຍ (ທ່ານນາງ ຄຳອອນ ເພັດດາວເຮືອງ, ພະນັກງານບຳນານ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ), ພວກນ້ອງ (ທ່ານນາງກົງເດືອນ ເນດຕະວົງ, ດຣ. ບົວໄຂ ເພັງພະຈັນ, ທ່ານນາງ ແສງ ຜາເມືອງ) ທີ່ໄດ້ມາຝຶກອົບຮົມວິຊາການຫ້ອງສະໝຸດໃຫ້ແກ່ຄູ, ອາຈານ ອັນເຮັດໃຫ້ລູກຫຼານຢູ່ທີ່ນີ້ມີໃບໜ້າໃໝ່ ແລະເພື່ອຕອບສະໜອງການມີໂຮງຮຽນມັດທະຍົມສົມບູນແລະມີເດີ່ນກິລາທີ່ກວ້າງຂວາງ... ການໄດ້ມາຊຶ່ງອາຄານ ໂຮງຮຽນ, ຫ້ອງສະໝຸດ ແລະເດີ່ນກິລານີ້ ໃຊ້ທຶນເປັນຈຳນວນຫຼວງຫຼາຍ, ຜູ້ສະຫຼະເງິນທຶນກໍ່ແມ່ນຜູ້ມີນ້ຳໃຈອັນປະເສີດ ມີຄວາມກະຕັນຍູຮູ້ບຸນຄຸນຕໍ່ປະເທດຊາດ, ຕໍ່ບ້ານເກີດເມືອງນອນ ຈຶ່ງໄດ້ພາກັນປະກອບສ່ວນທຶນຮອນຈຳນວນນີ້ ເພື່ອໃຫ້ພໍ່ແມ່, ຜູ້ປົກຄອງຜູ້ທີ່ມີລູກ 2, 3 ຄົນເຂົ້າຮຽນທີ່ໂຮງຮຽນຫຼັງນີ້ມີຄວາມພູມໃຈ ທີ່ບໍ່ໄດ້ສົ່ງລູກຂອງຕົນໄປຮຽນໃນໂຮງຮຽນ ທີ່ຢູ່ຫ່າງໄກ... ຄູອາຈານຜູ້ເປັນເບົ້າຊຸບຫຼໍ່ ຈະເປັນແບບຢ່າງທີ່ດີໃນການຖ່າຍທອດຄວາມຮູ້ບົດຮຽນ ແລະປະສົບການໃຫ້ແກ່ລູກຫຼານເພື່ອກ້າວໄປສູ່ສັງຄົມນິຍົມ... ຄິດວ່າບັນດານັກຮຽນຈະເປັນລູກທີ່ດີຂອງພໍ່ແມ່, ເປັນນັກຮຽນທີ່ດີຂອງຄູອາຈານ...



ສຳຄັນແມ່ນ ເນັ້ນຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມມີວິໄນ, ຄວາມດຸໝັ່ນ, ມີຄວາມສາມັກຄີ, ຮູ້ເຄົາລົບນັບຖືຜູ້ໃຫຍ່, ຜູ້ອາວຸໂສ ແລະຮູ້ຜູ້ນຳສູງສຸດຂອງ ປະເທດເຮົາ, ນອກຈາກນີ້ຕ້ອງມີວັດທະນະທຳ, ມີວັນນະຄະດີ, ມີການເຄື່ອນໄຫວສິລະປະ ແລະກິລາເປັນປະຈຳ...”

ຫ້ອງສະໝຸດທີ່ສ້າງຕັ້ງຂຶ້ນນີ້ ເຖິງຈະເປັນຫ້ອງນ້ອຍມີຂະໜາດ 4 X 4 ແມັດ, ລວມທັງຍັງບໍ່ທັນມີຄວາມຮູ້ຄົບໝົດທຸກຂະແໜງວິຊາ ແຕ່ກໍ່ເປັນຄັງຄວາມຮູ້ ພູມປັນຍາທີ່ເປີດປະຕູສູ່ປະຊາຊົນ(ນອກຈາກຄູ ອາຈານ ນັກຮຽນໃນໂຮງຮຽນ) ທຸກເພດທຸກໄວໂດຍບໍ່ຈຳແນກຊົນຊັ້ນ ວັນນະ ເຊື້ອຊາດ ແລະສາສະໜາ ເພື່ອສຶກສາ ຫາຄວາມຮູ້ເພີ່ມເຕີມ ນອກຈາກຄູ ອາຈານສິດສອນໃຫ້ ຢູ່ໃນຫ້ອງຮຽນນັ້ນ ຊຶ່ງນັບວ່າເປັນສົມບັດທີ່ມີຄຸນຄ່າທີ່ບໍ່ສາມາດປະເມີນເປັນມູນຄ່າ ແລະລາຄາໄດ້ ຂໍໃຫ້ຜູ້ຊົມໃຊ້ໄດ້ຄຶດຄຳນຶງ ພິງປະສົງເຖິງອະນຸຊົນຄົນຮຸ່ນຫຼັງໃຫ້ໄດ້ຮຽນຮູ້ສຶກສາສືບຕໍ່ໄປຊົ່ວກາລະນານເທີ້ນ.

ນະໂອກາດນີ້ ຂ້າພະເຈົ້າຂໍອະນຸຍາດຕາງໜ້າໃຫ້ແກ່ວິທະຍາກອນທຸກທ່ານຂໍສະແດງຄວາມຂອບໃຈ ແລະຮູ້ບຸນຄຸນຢ່າງສູງ ແດ່ທ່ານປ້າຄຳເມີງ ວໍລະຈິດ ທີ່ໄດ້ອຸປະຖຳໃນການຈັດການຝຶກອົບຮົມວິຊາການຫ້ອງສະໝຸດໃນຄັ້ງນີ້. ພິເສດ ພວກຂ້າພະເຈົ້າຮູ້ສຶກຊາບຊຶ້ງເປັນຢ່າງຍິ່ງຕໍ່ແນວຄິດ ແລະການກະທຳຂອງປ້າຊຶ່ງພວກຂ້າພະເຈົ້າ ແລະອີກຫຼາຍໆຄົນໃນສັງຄົມລາວຂອງພວກເຮົາຄວນເອົາເປັນແບບຢ່າງນັ້ນກໍ່ຄື ຄວາມຫ່ວງໃຍຕໍ່ເດັກນ້ອຍລາວ, ການພັດທະນາຊັບພະຍາກອນມະນຸດ, ການສຶກສາ ແລະການອ່ານ ກໍ່ຄືຕໍ່ສັງຄົມລາວ; ປ້າມີຄວາມເສຍສະຫຼະສູງ ທັງເຫື່ອແຮງສະຕິປັນຍາ, ເວລາ, ທຶນຊັບສ່ວນຕົນເພື່ອອຸທິດໃຫ້ແກ່ຈຸດປະສົງທີ່ມຸ່ງໝັ້ນຂອງປ້າ.







ນອກຈາກນີ້ ສິ່ງທີ່ຄວນເອົາເປັນແບບຢ່າງຂອງປ້າ ກໍແມ່ນຄວາມເປັນກັນເອງ ຮວມທັງການມີກິລິຍາມາລະຍາດອ່ອນນ້ອມຖ່ອມຕົນ, ການມີທັດສະນະມະຫາຊົນ ໜັກແໜ້ນ ,ການດຳລົງຊີວິດທີ່ລຽບງ່າຍແລະການບໍ່ຖືຕົນຂອງປ້າ ຊຶ່ງສະແດງອອກ ໃນການເວົ້າຈາປາໄສຂອງປ້າຕໍ່ຄູ, ອາຈານ, ນັກຮຽນ, ພໍ່ແມ່ປະຊາຊົນທົ່ວໄປ ຮວມທັງການ ກິນເຂົ້າຮ່ວມ ພາກິນປາຮ່ວມປີ້ງ ຈ້ຳແຈ່ວຮ່ວມຖ້ວຍ ຟ້ອນລຳວົງຮ່ວມຮອບ ແລະຮ້ອງເພງຮ່ວມກັນ.

ຂໍສະແດງຄວາມຂອບໃຈປ້າຄຳອອນ ເພັດດາວເຮືອງ ຜູ້ນຳທາງໄປ-ກັບ (ນະຄອນຫຼວງວຽງຈັນ-ຊຽງຂວາງ) ທັງເປັນຜູ້ຕິດຕໍ່ປະສານງານທຸກຢ່າງ ເພື່ອໃຫ້ການ ຝຶກອົບຮົມວິຊາການ ຫ້ອງສະໝຸດ ແລະພິທີເປີດຫ້ອງສະໝຸດຂອງໂຮງຮຽນເກີດຂຶ້ນແລະປະສົບຜົນສຳເລັດຕາມວັດຖຸປະສົງ; ຂໍຂອບໃຈພໍ່ຕູ້ບ້ານໝ້ຽງ (ທ່ານຊຽງວັນນາ) ທີ່ເອື້ອເຟື້ອທີ່ພັກອາໄສອັນແສນອົບອຸ່ນໃຫ້ລູກຫຼານໄດ້ພັກພິງຍິ່ງກວ່າໂຮງແຮມຫ້າດາວ ເປັນເວລາສາມຄືນ ; ຂໍຂອບໃຈເອື້ອຍຄຳສີ ທີ່ຄອຍເອົາໃຈໃສ່ເລື່ອງອາຫານການກິນທີ່ອຸດົມສົມບູນທັງຄາບເຊົ້າແລະຄາບແລງ; ຂໍຂອບໃຈ ທ່ານວັນສີທິຖາວອນ ພ້ອມດ້ວຍຄະນະ ຮວມທັງຄູ ອາຈານ ນັກຮຽນ ແລະຜູ້ອື່ນໆ ທີ່ບໍ່ສາມາດກ່າວນາມ ນະທີ່ນີ້ໄດ້ທັງໝົດ ທີ່ຕ້ອນຮັບພວກຂ້າພະເຈົ້າດ້ວຍຄວາມອົບອຸ່ນ ແລະກ່າວອຳລາກັນພ້ອມທັງມີຂອງຝາກຈາກຊຽງຂວາງທີ່ມີຄຸນທ່າທາງວັດທະນະທຳ ນັ້ນຄືເຂົ້າຂຽບ ແລະຖົງພາຍສີແດງ, ທ່າມກາງສຽງເພັງທີ່ຮ້ອງປະສານດົນຕີຍັງບໍ່ທັນສິ້ນສຸດແລະຮອບລຳວົງກຳລັງດຳເນີນຢູ່ ແຕ່ກໍ່ຕ້ອງອຳລາຈາກກັນ ເພາະວຽກງານຫຼາຍຢ່າງຍັງລໍຢູ່.



# ອິນແປງ ດິນແດນແຫ່ງຄວາມຊົງຈຳ

ໂດຍ: ກົງເດືອນ ເນດຕະວົງ

ຈາກວັນນັ້ນ ເຖິງວັນນີ້...

ວັນເວລາຊ່າງຜ່ານໄປໄວເຫຼືອເກີນ ແຕ່ຫ້ວງຈິດສຳນຶກຂອງຂ້າພະເຈົ້າ ຍັງສະສົມຮູບພາບປະທັບໃຈຫຼາຍສິ່ງຫຼາຍຢ່າງໄວ້ ຊຶ່ງມີທັງຄວາມຮູ້ສຶກທີ່ດີງາມ ຕໍ່ບັນດາເຫຼົ່າຍາດຕິພີ່ນ້ອງ, ເພື່ອນມິດສະຫາຍ ແລະສາຍສຳພັນທີ່ຫາກໍ່ເກີດຂຶ້ນເມື່ອແຮກພົບ ກັບຄົນທ້ອງຖິ່ນດຽວກັນອັນມີນາມວ່າເຮົາໄທພວນ.

ຕະຫຼອດ 3-4 ວັນທີ່ຂ້ອຍໄດ້ມີໂອກາດອັນເປັນສິລິມຸງຄຸນ ໄດ້ໃກ້ຊິດກັບປ້າຄຳເມີງ ວໍລະຈິດ ເມື່ອປາຍປີ 2010 ເພື່ອປະຕິບັດພາລະກິດກະກຽມສ້າງຫ້ອງສະໝຸດໃຫ້ແກ່ໂຮງຮຽນມັດທະຍົມສົມບູນອິນແປງ ມ. ແປກ, ຂ. ຊຽງຂວາງ ຊຶ່ງເປັນໂຮງຮຽນທີ່ປ້າໄດ້ທຸ້ມເທຈິດໃຈ ເຕົ້າໂຮມທຶນຮອນສ່ວນຕົວ ແລະຍາດພີ່ນ້ອງມາຊ່ວຍສ້າງສາພັດທະນາໃຫ້ມີໃບໜ້າໃໝ່.

ປ້າມີແນວຄິດຫວນຄືນໄປເຖິງຄວາມຫຍຸ້ງຍາກທີ່ຕົນເຄີຍປະສົບພົບພໍ້ທີ່ຕ້ອງອອກເຫື່ອເທແຮງເດີນໄປຮຽນຢູ່ບ້ານອື່ນທີ່ຢູ່ຫ່າງອອກໄປ, ຫວນຄິດໄປເຫັນຄວາມເປັນຫ່ວງເປັນໃຍຂອງຜູ້ປົກຄອງທີ່ຕ້ອງໄດ້ຄິດຫາງຳນຳລູກໂດຍ ສະເພາະຜູ້ຍ່າຜູ້ຍິງ, ຫຼາຍເຫດຜົນກະຕຸກໃຈໃຫ້ປ້າສະຫຼະຊັບສ່ວນຕົວທຸ້ມເທສ້າງອາຄານຮຽນຫຼັງໃໝ່, ຫຼັງໃຫຍ່ໄດ້ມາດຕະຖານແລ້ວ ການສ້າງບໍ່ໄດ້ຢຸດຢູ່ທີ່ນັ້ນ ແຕ່ຍັງແຜ່ລາມຕໍ່ໄປຫາອາຄານຮຽນຫຼັງນ້ອຍເກົ່າແກ່ ທີ່ຕັ້ງຢູ່ດ້ານຫຼັງ ແລະບ່ອນຢູ່ນີ້ແຫຼະທີ່ຜູ້ໄດ້ຮ່ວມຂະບວນໄປເລາະເບິ່ງສະພາບຂອງໂຮງຮຽນນຳເພິ່ນໃນມື້ນັ້ນຕ່າງກໍ່ຮູ້ສຶກປື້ມໃຈຫຼາຍ ເພາະໃນເບື້ອງຕົ້ນພາກັນຄິດໄວ້ວ່າ ຈະທຳການສ້ອມແຊມເອົາອາຄານເກົ່າ ແຕ່ເມື່ອຂ້າພະເຈົ້າຜູ້ມັກໄດ້ ໄດ້ສະເໜີຄຳເຫັນວ່າ ຄັນແມ່ນວ່າມີເຈົ້າສັດທາທຸ້ມເທໃຫ້ການສຶກສາ ແລະຫໍສະໝຸດ ຄືແນວນີ້ ກໍສົມຄວນສ້າງເອົາຫຼັງໃໝ່, ປ້າຊ່າງເປັນຄົນທີ່ເຂົ້າໃຈງ່າຍ ແລະມີຈິດໃຈເອື້ອອາລີແທ້ ປ້າກໍສັ່ງຜູ້ຮັບເໝົາກໍ່ສ້າງທັນທີ ໃຫ້ດຳເນີນການ ກໍ່ສ້າງອາຄານ



ໃໝ່, ນອກຈາກອາຄານໃຊ້ເປັນຫ້ອງຮຽນ ຍັງສ້າງອາຄານສະເພາະໃຊ້ເປັນຫ້ອງສະໝຸດ, ຫໍຂ່າວ ແລະສິ່ງທີ່ຈຳເປັນອື່ນໆ ທີ່ຄວນແກ່ການເຄື່ອນໄຫວໃນການສິດສອນຂອງຄູອາຈານ ແລະຂອງເດັກນັກຮຽນຢ່າງຄົບຊຸດຕາມເງື່ອນໄຂແລະພາລະບົດບາດຂອງໂຮງຮຽນ.

ທຸກເທື່ອເມື່ອຫວນຄືນຫຼັງ ເຖິງຕອນໄປຢ້ຽມ ແລະເຮັດວຽກທີ່ໂຮງຮຽນອິນແປງນັ້ນ ຂ້າພະເຈົ້າຍັງມີຄວາມອົບອຸ່ນໃຈທີ່ໄດ້ລົ້ງແກວ່ນກັບປ້າສົດ ຜູ້ເປັນເອື້ອຍຂອງປ້າຄຳເມີງ ຊຶ່ງມີຮອຍຍິ້ມທີ່ສື່ເຖິງຄວາມເປັນກັນເອງ ແລະຍັງຈື່ຈຳຂອງຂວັນ ສັນຍະລັກຖົງແດງນ້ອຍ ອັນເປັນເອກະລັກອັນໜຶ່ງຂອງວັດທະນະທຳພວນ ທີ່ປ້າໄດ້ມອບໃຫ້ແຕ່ລະມື້ທີ່ຫຼຽວເຫັນຖົງແດງ ກໍເທົ່າກັບວ່າໄດ້ເຫັນໜ້າເພິ່ນຍິ້ມໃຫ້, ຄິດເຫັນບັນດາຄູອານຈານ ທີ່ໄດ້ພົບປະຊຶ່ງພວກເພິ່ນລ້ວນແຕ່ມີຄວາມປາບປື້ມປິຕິຕໍ່ການຊ່ວຍເຫຼືອຂອງປ້າທີ່ຊຸບຊີວິດໃໝ່ໃຫ້ແກ່ໂຮງຮຽນແຫ່ງນີ້ກາຍເປັນໂຮງຮຽນມາດຕະຖານ ແລະທັນສະໄໝທີ່ຕັ້ງຢູ່ເທິງເຈີ້ຍພູອັນມີປ່າຂຽວສົດ ງົດງາມ ໂດຍມີເນີນພູຢູ່ດ້ານຫຼັງ ເມື່ອເຮົາເບິ່ງກວມເອົາບໍລິເວນກວ້າງຈະເຫັນທັດສະນີຍະພາບ ທີ່ສວຍງາມຍິ່ງໜັກ ສົມກັບວ່າພະອິນໄດ້ປັ້ນແຕ່ງໃຫ້ເປັນຖິ່ນຖານພູມລຳເນົາແຫ່ງທີ່ສວຍງາມ ສົມແລ້ວວ່າແມ່ນໂຮງຮຽນອິນແປງ



# ອິນແປງ ແດນຂຽວກະຈິ ສີສັນແຫ່ງທຳມະຊາດ

ໂດຍ: ແສງຜາເມືອງ

ເມື່ອໄດ້ໄປເຖິງອິນແປງແດນທີ່ມີດິນດຳນ້ຳຊຸ່ມ ເຈົ້າຈະມີຄວາມຮູ້ສຶກແບບດຽວກັນກັບຂ້າພະເຈົ້າບໍ່ນໍ ວ່າອິນແປງ ເປັນບ້ານທີ່ໜ້າຢູ່, ສະຫງົບອາກາດເຢັນສະບາຍຈົນເຮັດໃຫ້ເຮົາຮູ້ສຶກເໝືອນກັບວ່າໂຕລອຍຢູ່ເທິງກ້ອນເຝື້ອ, ຄັນເວົ້າເຖິງທຳມະຊາດມີທັງຄວາມສວຍງາມ ແລະສີສັນທີ່ມັນສ້າງຂຶ້ນໃຫ້ແກ່ຊາວຄັງວຽງ ນັ້ນກໍຄືທົ່ງນາທີ່ມີຕົ້ນເຂົ້າຂຽວຕາມລະດູການ, ມີກະຕໍເຝືອງປະໃຫ້ງົວ ຄວາຍເລາະເລັມກິນສະບາຍທີ່ຊາວຄັງວຽງຫວງແຫນ ແລະທະນຸບຳລຸງໃຫ້ເປັນອູ່ເຂົ້າອູ່ນ້ຳ, ມີທົ່ງຄັງທີ່ປົກຄຸມໄປດ້ວຍຕົ້ນຫຍ້າຂຽວກະຈິເດຍລະດາດ ທີ່ນັບຫົວໜ່ວຍບໍ່ລ້ອນ, ຖ້າຫຼຽວກາຍເຈັ້ຍພູຕ່ຳຄ້ອຍໄປໄກ ເຮົາກໍເຫັນພູເຂົາປ່າແປກທີ່ມີສີຂຽວອຸ່ມທຸ່ມສະດຸດຕາ ຖ້າຫາກຫຍັບລົງມາລຽບເລາະຕາມທາງຖະໜົນນ້ອຍ ກໍມີໝູ່ບ້ານຫຼາຍຫຼັງຄາເຮືອນທີ່ປຸກຮຽງກັນຢູ່ເປັນກຸ່ມໃນຮູບແບບລາວພວນ ຄື ເປັນເຮືອນຮ້ານ ມີທັງຫ່ອງ ທັງຫ້ອງ ຊານຄົວຄົບຊຸດຫາໃສເບິ່ງບໍ່ໄດ້ອີກແລ້ວ ຄັນບໍ່ໄປຖິ່ນພວນທ່ານເອີຍ.

ຄືດັ່ງທີ່ເຮົາໄປເຫັນຮູ້ຢ້ຽມຖິ່ນອິນແປງມາ ປະຊາຊົນຊາວຄັງຕ້ອນຮັບດີເອົາແທ້, ໃຫ້ໄປຢາມເຖິງບ້ານສະຖານຖິ່ນເຮືອນເນົາ ທັງຈັດຫາເຂົ້າປາສູ່ກິນເຕັມທ້ອງມີທັງຂອງຝາກຕ້ອນຕິດມືກັບຕ່າວ ແຖມຍັງຕາມສົ່ງພ້ອມອວຍໄຊ ໃຫ້ປອດໄພ ໃຜເດນໍຊິລືມໄດ້ລົງຄໍ, ເຮັດແນວໃດຈະບໍ່ໃຫ້ແຂກຖິ່ນດິນໄກຫວນຄະນຶງນຳຫຼັງເມື່ອຈາກກັນໄປໜ້າ, ຄວາມດີມີມາລະຍາດບວກກັບນ້ຳໃຈອັນໃສຜ່ອງຂອງພໍ່ແມ່ພີ່ນ້ອງຊາວຄັງມີໃຫ້ແກ່ຜູ້ມາຢາມ ຄົງຕິດຕຶງໄປຕາບນານເທົ່ານານ ໂດຍສະເພາະຄອບຄົວຂອງປ້າສົດ, ຄອບຄົວຂອງພໍ່ເຖົ້ານາດອນ ຊຽງວັນນາ ພິເສດລູກສາວຫຼ້າເພິ່ນນາງຄຳສີ ວັນນະຈັກຫົວໜ້າສະຫະພັນແມ່ຍິງເຂດພັດທະນາຄັງວຽງ, ທຸກສິ່ງທຸກຢ່າງທີ່ໄດ້ສຳຜັດ ບໍ່ວ່າຈະເປັນກາຍ ວາຈາ ຄວາມຮູ້ສຶກ, ແສງຜາເມືອງ ຄົງຈຳໄວ້ເປັນອຸທາຫອນເຕືອນໃຈບໍ່ໃຫ້ໄລລືມຖິ່ນອິນແປງ ແດນຖົງແດງທີ່ຄັ້ງໜຶ່ງເຄີຍມາ, ຂໍໃຫ້ອິນແປງເຈົ້າເອີຍ ກາຍເປັນຖິ່ນທີ່ມີຄວາມສະຫງົບສຸກ ແລະຈະເລີນກ້າວໜ້າ ສົມກັບຄວາມມຸ່ງມາດປາຖະໜາ ຂອງເພິ່ນຜູ້ມາສ້າງສາພັດທະນາດ້ວຍເທີ້ນ.





## *ພໍແຕ່ໝາຍຕາ*

*ໃນພິທີ ອັນຄຶກຄື້ນ ຂະບວນແຫ່ຄົນໂຮມ*
*ສະຫຼອງໄຊ 450 ປີ ແຫ່ງນະຄອນວຽງຈັນພຸ້ນ*
*ເສຍດາຍເດ ເສຍດາຍເດຖິ່ງແດງໜ້ອຍ ຊາວພວນບໍ່ທັນຕໍາ*
*ລູກຫຼານເຮົາຈຶ່ງບໍ່ໄດ້ ພາຍຫ້ອຍໄຂວ່ຄົນ*
*ເທື່ອໜ້າກ່ອນເນີ*



## *ວິໄສທັດທີ່ກວ້າງໄກ*

*ໂດຍ: ຂັນທະມາລີ ຍັງນຸວົງ (ມາລີຂວັນ)*

| | | | |
|---|---|---|---|
| * | *ມະນຸດໃນໂລກກວ້າງ* | *ອາໄສຮ່ວມພູມປັນຍາ* | |
| | *ພັດທະນາສັງຄົມ* | *ສື່ສານໄກກວ້າງ* | |
| | *ແລກປ່ຽນບົດຮຽນດ້ວຍ* | *ເຟດບຸກ-ອິນເຕີເນັດ (Face book+Internet...)* | |
| | *ຫຼືເລືອກຊົມ-ເລືອກໃຊ້* | *ກັນໄດ້ຢູ່ຫໍສະໝຸດເນີ* | |
| * | *ຫຍັບມາເວົ້າຈົ້ງ* | *ຈົດຈໍ່ພູມປັນຍາ* | |
| | *ຮຽກຮ້ອງປວງຊົນເຮົາ* | *ເຫຼົ່າສຶກສາ-ລັດຖະການພ້ອມ* | |
| | *ຈົ່ງຈັດຫາເວລາໄວ້* | *ເສີມປັນຍາດ້ວຍການອ່ານ* | *ແດ່ເນີ* |
| | *ອາຫານສະໝອງຈະໄດ້* | *ບຳລຸງໃຫ້ເຕີບໂຕ* | *ແທ້ນາ* |
| * | *ຂໍຕາງໜ້າໃຫ້* | *ແກ່ຄະນະອຳນວຍການ* | |
| | *ຫໍສະໝຸດສູນກາງ* | *ທົ່ວລາວເໜືອໃຕ້* | |
| | *ມີຄວາມພູມໃຈລົ້ນ* | *ຈະມີຜົນຜະລິດປົ້ມໃໝ່* | |
| | *ດ້ວຍນ້ຳໃຈແມ່ປ້າ* | *ເປັນຂອງຕ້ອນລູກຫຼານ* | |
| * | *ຂໍຂອບໃຈແມ່ປ້າ* | *ທີ່ໄດ້ແຜ່ເມດຕາຈິດ* | |
| | *ໄດ້ຜະລິດຂອງດີໆ* | *ເລື່ອງຈິງຄົນແທ້* | |
| | *ຂໍອວຍພອນໄຊພ້ອມ* | *ໂພໄຊຮົ່ມດົກໃຫຍ່* | |
| | *ຈົ່ງສຸກຂີຢູ່ໝັ້ນ* | *ນິຣັນເທົ້າຕະຫຼອດການ* | *ນີ້ທ້ອນ.* |

*"ເມົາອ່ານເປັນຄົນຫຼັກ ເມົາຮັກເປັນຄົນໂງ່*
*ເມົາໂທເປັນຄົນບ້າ ເມົາສຸລາເສຍບົດບາດ..."*
*ທຸກສິ່ງ ທຸກຢ່າງ ກໍໃຫ້ພໍດີ ພໍງາມນໍ !.*

# ຖົງແດງ

## ຄຳຟອງ ພູມວົງໄຊ

*ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 1*



ຖົງແດງ ສີແສງກ້າ ຊົງສະຫງ່າອາດຫານ
ຖົງແດງ ມີມານານ ຕັ້ງແຕ່ປາງປະຖົມກີ້
ຖົງແດງ ມີກັບໄວ້ ໃນເຮືອນບໍ່ໄດ້ຂາດ
ຖົງແດງ ມີທຸກບ້ານ ນານແລ້ວຄູ່ຊຽງ (ຂວາງ)

ຖົງແດງ ຄຸນຄ່າລົ້ນ ມີມາກເຫຼືອຫຼາຍ
ຖົງແດງ ມີຄວາມໝາຍ ຄູ່ຄວນຮັກສາໄວ້
ຖົງແດງ ເຮົານຳໃຊ້ ພາຍໄປໄດ້ທຸກແຫ່ງ
ຖົງແດງ ເປັນຕາແພງພົກໄວ້ ເປັນຂອງຕ້ອນແຂກຄົນ

ພາຍຖົງແດງ ແມ່ນອະນຸລັກ ຈຸດພິເສດຊາວພວນ
ພາຍຖົງແດງ ແມ່ນສົ່ງເສີມຄົນຊຽງ ໃຫ້ຮັ່ງມີລາຍໄດ້
ພາຍຖົງແດງ ປະຢັດເງິນເຮົາໄວ້ ບໍ່ຫຼົ່ງໄຫຼຖົ່ງເມືອງນອກ
ພາຍຖົງແດງ ເປັນຕາຮັກ ເປັນຕາແພງ ເປັນຕາແຍງແທ້ໆ
ຫຼານຫຼ້າຄູ່ຊູ່ຄົນ ງາມເດ ຊົມເຊີຍ ! ຊົມເຊີຍ !





ທ່ານ ຊົມພູ ດວງສະຫວັນ ສສຊ.
ຮອງກຳມາທິການວັດທະນະທຳ-ສັງຄົມ
ມອບຖົງແດງໃຫ້ ສສ. ເມືອງໂຕກຽວ ປະເທດຍີປຸ່ນ

# ຮູ້ບຸນຄຸນ

**ຄຳຟອງ ພູມວົງໄຊ**

ຊຽງຂວາງຕັ້ງແຕ່ກີ້
ທຸກສິ່ງມັນເຜົາຜານ
ພູຜາພົງໄພກ້ວາງ
ປະຫວັດສາດບັນທຶກໄວ້

ບັດນີ້ເຖິງບ່ອນບັ້ນ
ອະດີດເປັນພະລັງ
ໂຮງຮຽນຫຼານກໍເລີຍໄດ້
ເພາະມີພັກນຳພາ

ຫຼານຜູ້ມີໂຊກໄດ້
ຢ່າໄດ້ລືມບຸນຄຸນ
ຫຼານໃຫ້ຄອຍຮັກສາໄວ້
ປູກພຶກສາຊາດດອກໄມ້

ສະອາດ ແມ່ນຊິໄດ້
ຂຽວ ແມ່ນໂຮມແຮງໃຈ
ງາມ ແມ່ນຈັດແຈງໃຫ້
ເປັນລະບຽບຮຽບຮ້ອຍ

ສຽງລະເບີດເປືອງບັນ
ວອດວາຍທະລາຍມ້າງ
ສັດສານໍລະບາດ
ຫຼານໃສ່ໃຈຈື່ໝັ້ນ
ຈຳໄວ້ຊົ່ວນິລັນ !
ຊາວຊຽງຢູ່ເປັນສຸກ
ຮ່ວມສ້າງສາເມືອງບ້ານ
ງາມວິໄລສູງສົ່ງ
ເພາະວ່າມີແມ່ປ້າພາສ້າງກໍ່ແປງ
ແຍງແລ້ວຈັ່ງແມ່ນຊົມ ແທ້ເດ !
ເກີດໃໝ່ພາຍລຸນ
ຜູ້ໃຫຍ່ແພງຫຼານນ້ອຍ
ໂຮງຮຽນໃສສະອາດ
ປະດັບໃຫ້ຂຽວງາມ ເຂັ້ມຮົ່ມເຢັນ
ແດ່ເນີ
ປັດກວາດອະນາໄມ
ປູກປຸນມາລາໄມ້
ສີສັນສົດຊື່ນ
ຊົມແລ້ວຊື່ນໃຈ
ສົມແທ້ແມ່ນບ່ອນຮຽນ ຫຼານເອີຍ !





ໂຮງຮຽນມັດທະຍົມ ສົມບູນ ອິນແປງ

# ຄວາມສຳຄັນຂອງການອ່ານໜັງສື

**(ຈາກສ່ວນໜຶ່ງຂອງປຶ້ມແບບຮຽນ ພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 1)**

ການອ່ານ ມີຄວາມສຳຄັນເທົ່າກັບການຟັງ ເພາະໃນການອ່ານເພື່ອຫາຂໍ້ມູນ ແລະ ຂ່າວສານຕ່າງໆ ເຮົາຈະໃຊ້ການອ່ານຫຼາຍກວ່າການຟັງ. ການອ່ານມີຄວາມສຳຄັນແລະມີຄວາມຈຳເປັນຫຼາຍໃນຊີວິດ ປະຈຳວັນເພື່ອຈະໄດ້ຮູ້ທັນເຫດການ ທີ່ປ່ຽນແປງໄປໂດຍສະເພາະໃນປັດຈຸບັນ ເປັນຍຸກຂອງການສື່ສານໄຮ້ພົມແດນ(ຍຸກໂລກາພິວັດ) ເຮັດໃຫ້ທັນຕໍ່ຄວາມກ້າວໜ້າ ທາງດ້ານວິທະຍາສາດ ແລະເຕັກໂນໂລຊີໃໝ່ໆ, ເຮັດໃຫ້ເຮົາໄດ້ຮັບຄວາມຮູ້ ຄວາມເຂົ້າໃຈເພື່ອນຳມາຊ່ວຍໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນ.

- ການອ່ານ ເປັນເຄື່ອງມືສຳຄັນໃນການສະແຫວງຫາຄວາມຮູ້ ເພາະວິຊາຄວາມຮູ້ຕ່າງໆຢູ່ໃນໂລກນີ້ມີຢ່າງຫຼວງຫຼາຍ, ເຫດການຕ່າງໆ ແລະການເຄື່ອນໄຫວຈາກທຸກມູມໂລກ ເຮົາຈະໄດ້ຮູ້ຈາກການອ່ານ. ການອ່ານຈຶ່ງຈຳເປັນສຳລັບທຸກເພດທຸກໄວ.

- ຊ່ວຍໃຫ້ມີນິດໄສຮັກການອ່ານ ການອ່ານເປັນພື້ນຖານໃນການຮຽນວິຊາຕ່າງໆຄື: ເຮັດໃຫ້ຜູ້ອ່ານສາມາດເຝິກການອ່ານໃຫ້ຄ່ອງແຄ້ວ ປະຢັດເວລາໃນການອ່ານ ແລະສາມາດຈັບໃຈຄວາມສຳຄັນຂອງເນື້ອໃນໄດ້.

-ການອ່ານຊ່ວຍໃຫ້ເປັນຜູ້ທີ່ມີຄວາມຮູ້ກວ້າງໄກ ຜູ້ອ່ານມີທັດສະນະຄະຕິທີ່ດີ ສາມາດນຳຄວາມຮູ້ທີ່ໄດ້ຮັບຈາກການອ່ານໄປໃຊ້ປະໂຫຍດຕ່າງໆ ໄດ້ ເຊັ່ນ: ນຳໄປພັດທະນາການປະກອບອາຊີບຕ່າງໆ ເປັນຕົ້ນ................





# ການອະນຸລັກປ່າ

**(ຈາກສ່ວນໜຶ່ງຂອງປຶ້ມແບບຮຽນ ວິທະຍາສາດ ທຳມະຊາດ ຊັ້ນມັດທະຍົມສຶກສາ ປີທີ 1)**

ປ່າໄມ້ ເປັນຊັບພະຍາກອນທຳມະຊາດທີ່ມີຄຸນຄ່າຫຼວງຫຼາຍທາງດ້ານເສດຖະກິດ ແລະການຮັກສາຄຸນນະພາບຂອງສິ່ງແວດລ້ອມ.

ປ່າໄມ້ໃຫ້ອາກາດປອດໂປ່ງ, ຮັກສານ້ຳ ແລະຄວາມຊຸ່ມຢູ່ໜ້າດິນໄດ້ດີ. ນ້ຳທີ່ຖືກຄາຍອອກຈາກໃບໄມ້ ກາຍເປັນອາຍ ເຮັດໃຫ້ອາກາດຊຸ່ມເຢັນ ພ້ອມກັນນັ້ນປ່າໄມ້ຍັງດູດເອົາກາສ໌ກາກໂບນິກ ແລະຄາຍອົກຊີແຊນອອກ ເຮັດໃຫ້ອາກາດເພີ່ມຄວາມປອດໂປ່ງ ເປັນຜົນດີໃຫ້ແກ່ການຫາຍໃຈຂອງຄົນ ແລະສັດ. ນອກນັ້ນ ປ່າໄມ້ຍັງສະໜອງໄມ້ສຳລັບກໍ່ສ້າງອາຄານ ບ້ານເຮືອນຕ່າງໆ ແລະເປັນສິນຄ້າອັນມີຄຸນຄ່າສູງທັງເປັນແຫຼ່ງອາຫານຂອງຄົນແລະສັດ, ໃຊ້ເປັນຢາປົວພະຍາດຫຼືເຄື່ອງນຸ່ງຫົ່ມອີກຫຼາຍຢ່າງ, ໃຫ້ພະລັງງານ, ອາກາດ ລວມທັງເປັນແຫຼ່ງກຳເນີດປັດໄຈໃນການດຳລົງຊີວິດຂອງມະນຸດ. ເວົ້າລວມແລ້ວ ຕົ້ນໄມ້ກໍຄືພືດທົ່ວໄປ ມີຄວາມສຳຄັນ ແລະໃຫ້ປະໂຫຍດຫຼາຍຢ່າງຕໍ່ສິ່ງທີ່ມີຊີວິດ. ດັ່ງນັ້ນ ຖ້າປ່າໄມ້ຖືກທຳລາຍຈະສົ່ງຜົນສະທ້ອນໃຫ້ແກ່ຄົນສັດ ແລະສິ່ງແວດລ້ອມອື່ນໆ ເຊັ່ນ: ແມ່ນ້ຳ, ດິນ, ອາກາດ ມີການປ່ຽນແປງ, ສັດປ່າຂາດທີ່ຢູ່ອາໄສ ອົບພະຍົບ ຫຼືອາດຕາຍໄປ ພາໃຫ້ສິ່ງແວດລ້ອມຖືກທຳລາຍ.

ເພື່ອຮັກສາ ແລະປ້ອງກັນສະພາບແວດລ້ອມໃຫ້ມີສະພາບດີຕະຫຼອດໄປ ນັກຮຽນຄວນມີວິທີແນວໃດ ?....................



# ພູສູງ ໃນລາວ

| | | |
|---|---|---|
| 1. ພູເບ້ຍ | ແຂວງວຽງຈັນ | 2,820 ແມັດ |
| 2. ພູຊາວ | ແຂວງຊຽງຂວາງ | 2,690 ແມັດ. |
| 3. ພູສາມສຸມ | ແຂວງຊຽງຂວາງ | 2,620 ແມັດ. |
| 4. ພູໝັ້ນຮຽງວັງວຽງ | ແຂວງວຽງຈັນ | 2,570 ແມັດ. |
| 5. ພູເລີຍ | ແຂວງຫົວພັນ | 2,458 ແມັດ. |
| 6. ພູຫວດ | ແຂວງຫົວພັນ | 2,452 ແມັດ. |
| 7. ພູຊ້າງ | ແຂວງໄຊຍະບູລີ | 2,330 ແມັດ. |
| 8. ພູຣາວກໍ | ແຂວງຄໍາມ່ວນ | 2,286 ແມັດ. |
| 9. ພູງອກໄນ | ແຂວງອັດຕະປື | 2,259 ແມັດ. |
| 10. ພູສອຍ | ແຂວງຫຼວງພະບາງ | 2,257 ແມັດ. |
| 11. ພູງອກປານ | ແຂວງອັດຕະປື | 2,251 ແມັດ. |
| 12. ພູຜາວີທົ່ງໄຫຫີນ | ແຂວງຊຽງຂວາງ | 2,221 ແມັດ. |
| 13. ພູສັນ | ແຂວງຊຽງຂວາງ | 2,218 ແມັດ. |
| 14. ພູແສນທົ່ງໄຫຫີນ | ແຂວງຊຽງຂວາງ | 2,209 ແມັດ. |
| 15. ພູສາມສາດ | ແຂວງວຽງຈັນ | 2,128 ແມັດ. |
| 16. ພູໄດ້ເຈຍກຸງ | ແຂວງຫຼວງນໍ້າທາ | 2,099 ແມັດ |
| 17. ພູປານ | ແຂວງຫົວພັນ | 2,079 ແມັດ |
| 18. ພູຫອມຈັນ | ແຂວງຊຽງຂວາງ | 2,038 ແມັດ |
| 19. ພູເຂົາໝັ້ນຮຽງ | ແຂວງໄຊຍະບູລີ | 2,007 ແມັດ. |
| 20. ພູສັນຈັນຕາ | ແຂວງຫຼວງພະບາງ | 1,972 ແມັດ. |
| 21. ພູນາແມວ | ແຂວງອຸດົມໄຊ | 1,937 ແມັດ. |
| 22. ພູຜາເຂົ້າ | ແຂວງຫຼວງພະບາງ | 1,870 ແມັດ. |
| 23. ພູດອຍຈີ່ | ແຂວງຜົ້ງສາລີ | 1,842 ແມັດ. |
| 24. ພູເລັບ | ແຂວງຊຽງຂວາງ | 1,761 ແມັດ. |
| 25. ພູສັງ | ແຂວງວຽງຈັນ | 1,666 ແມັດ. |
| 26. ພູຈາປູເຕົາ | ແຂວງຫຼວງນໍ້າທາ | 1,588 ແມັດ. |
| 27. ພູຈໍາປາສັກ | ແຂວງຈໍາປາສັກ | 1,416 ແມັດ. |
| 28. ພູພຽງບໍລະເວນ | ແຂວງຈໍາປາສັກ | 1,284 ແມັດ |
| 29. ພູເຂົາຄວາຍ | ແຂວງວຽງຈັນ | 1,026 ແມັດ. |

# ແມ່ນ້ຳໃຫຍ່ຍາວ ສຳຄັນໃນລາວ

| | | |
|---|---|---|
| 1. ແມ່ນ້ຳຂອງ | ໄຫຼຜ່ານລາວ | 1,865 ກິໂລແມັດ |
| 2. ນ້ຳເນີນ | ແຂວງຫົວພັນ | 500 ກິໂລແມັດ |
| 3. ນ້ຳມ້າ | ແຂວງຫົວພັນ | 470 ກິໂລແມັດ |
| 4. ນ້ຳອູ | ແຂວງຜົ້ງສາລີ-ຫຼວງພະບາງ | 448 ກິໂລແມັດ |
| 5. ນ້ຳງື່ມ | ແຂວງຊຽງຂວາງ-ແຂວງວຽງຈັນ | 354 ກິໂລແມັດ |
| 6. ນ້ຳເຊບັ້ງຫຽງ | ແຂວງສະຫວັນນະເຂດ | 338 ກິໂລແມັດ |
| 7. ນ້ຳທາ | ແຂວງຫຼວງນ້ຳທາ-ບໍ່ແກ້ວ | 325 ກິໂລແມັດ |
| 8. ນ້ຳເຊກອງ | ແຂວງສາລະວັນ-ເຊກອງ-ອັດຕະປື | 320 ກິໂລແມັດ. |
| 9. ນ້ຳຊຳ | ແຂວງຫົວພັນ | 260 ກິໂລແມັດ |
| 10. ນ້ຳເຊບັ້ງໄຟ | ແຂວງຄຳມ່ວນ-ສະຫວັນນະເຂດ | 239 ກິໂລແມັດ |
| 11. ນ້ຳແບງ | ແຂວງອຸດົມໄຊ | 215 ກິໂລແມັດ |
| 12. ນ້ຳເຊໂດນ | ແຂວງສາລະວັນ-ຈຳປາສັກ | 192 ກິໂລແມັດ |
| 13. ນ້ຳເຊລະນອງ | ແຂວງສະຫວັນນະເຂດ | 115 ກິໂລແມັດ |
| 14. ນ້ຳກະດິງ | ແຂວງບໍລິຄຳໄຊ | 103 ກິໂລແມັດ |
| 15. ນ້ຳຄານ | ແຂວງຫົວພັນ-ຫຼວງພະບາງ | 90 ກິໂລແມັດ |



ແມ່ນ້ຳຂອງ ເຂດເມືອງປາກແບ່ງ ແຂວງອຸດົມໄຊ

# ຜົນການສຳຫຼວດພົນລະເມືອງ ປີ 2005

| ລຳດັບ | ຊື່ແຂວງ | ຈຳນວນ ພົນລະເມືອງ | ເນື້ອທີ່ (ກມ²) | ຄວາມໜາແໜ້ນ (ຄົນ/ກມ²) |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 695 473 | 3 920 | 177 |
| 2 | ຜົ້ງສາລີ | 167 181 | 16 270 | 10 |
| 3 | ຫຼວງນ້ຳທາ | 145 231 | 9 325 | 16 |
| 4 | ອຸດົມໄຊ | 264 830 | 15 370 | 17 |
| 5 | ບໍ່ແກ້ວ | 145 919 | 6 196 | 24 |
| 6 | ຫຼວງພະບາງ | 405 949 | 16 875 | 24 |
| 7 | ຫົວພັນ | 280 780 | 16 500 | 17 |
| 8 | ໄຊຍະບູລີ | 338 044 | 16 389 | 21 |
| 9 | ຊຽງຂວາງ | 228 882 | 15 880 | 14 |
| 10 | ວຽງຈັນ | 386 558 | 18 526 | 21 |
| 11 | ບໍລິຄຳໄຊ | 225 167 | 14 863 | 15 |
| 12 | ຄຳມ່ວນ | 336 935 | 16 315 | 21 |
| 13 | ສະຫວັນນະເຂດ | 824 662 | 21 774 | 38 |
| 14 | ສາລະວັນ | 324 470 | 10 691 | 30 |
| 15 | ເຊກອງ | 85 316 | 7 665 | 11 |
| 16 | ຈຳປາສັກ | 603 880 | 15 415 | 39 |
| 17 | ອັດຕະປື | 112 171 | 10 320 | 11 |
| 18 | ເຂດພິເສດໄຊສົມບູນ | 38 549 | 4 506 | 9 |
| | ລວມ | 5 609 997 | 236 800 | 24 |



# ສາສະນາ

ຄຳວ່າ "ສາສະນາ" ເປັນພາສາປາລີ (ອ່ານຕາມສຽງພາສາລາວວ່າ "ສາດສະໜາ" ແປວ່າ ຫົນທາງແນວທາງ ແບບວິທີປະຕິບັດທາງຄວາມເຊື່ອຂອງມະນຸດ.

ໃນໂລກນີ້ມີສາສະນາໃຫຍ່ໆຢູ່ 4 ສາສະນາຄື: 1. ສາສະນາຮິນດູ, 2. ສາສະໜາອິດສະລາມ, 3. ສາສະນາພຸດ, 4. ສາສະນາຄຣິດ. ສາສະນາປະກອບດ້ວຍ 4 ເງື່ອນໄຂສຳຄັນຄື: 1 ມີພະຜູ້ເປັນເຈົ້າເປັນຜູ້ປະກາດ, 2. ມີຄຳສັ່ງສອນ , 3. ມີສາວົກ/ຕົວແທນ , 4 ມີຜູ້ປະພຶດປະຕິບັດຕາມ. (ສ່ວນແນວທາງອື່ນທີ່ບໍ່ຄົບອົງປະກອບດັ່ງວ່ານີ້ ຮຽກວ່າ **"ລັດທິ"** ເຊັ່ນ: ລັດທິພາມ ລັດທິຂົງຈື້ ລັດທິມາກ-ເລນິເປັນຕົ້ນ).

## ພຸດທະສາສະນາ

ສາສະນາພຸດ ຫຼື ພຸດທະສາສະນາ ມີເຈົ້າຊາຍສິດທັດຖະ ເປັນຜູ້ສຶກສາຄົ້ນຄວ້າແນວທາງນີ້ ຈົນຮູ້ໄດ້ຢ່າງແຈ່ມແຈ້ງເລິກເຊິ່ງດ້ວຍຕົນເອງ **"ຕັສສະ"** (ຮູ້) ໃນທັມທັງຫຼາຍ ກາຍເປັນ **"ສັມມາສັມພຸດທະ"** ຄືເປັນຜູ້ທີ່ຮູ້ແຈ້ງ ຜູ້ຕື່ນ ຜູ້ປະເສີດ ແລ້ວປະກາດ ຄຳສັ່ງສອນຂອງຕົນ ອັນຮຽກວ່າ **"ທັມມະ"** ໃຫ້ຊາວໂລກຮູ້ ແລ້ວມີພະສົງສາມະເນນ ເປັນສາວົກ (ຜູ້ຕິດຕາມ) ສືບຕໍ່ເຜີຍແຜ່ຄຳສັ່ງສອນ ແລະມີອຸປະສົກ ອຸປະສິກາ (ພໍ່ອອກ ແມ່ອອກ) ຊຶ່ງຮຽກລວມວ່າ ພຸດທະສາສະນິກະຊົນ ເປັນຜູ້ປະຕິບັດຕາມ. ພຸດທະສາສະນາ **ຈຶ່ງແປວ່າ: ແນວທາງຂອງຜູ້ຮູ້ ຫຼື ແນວທາງຂອງຜູ້ປະເສີດ ຫຼື ແບບວິທີປະຕິບັດຕາມຄວາມເຊື່ອຂອງຊາວພຸດ.**

## ທັມມະ

"ສັມມາສັມພຸດທະ" ໄດ້ຮູ້ແຈ້ງໃນຄວາມຈິງຂອງໂລກ ແລ້ວພະອົງຈຶ່ງໄດ້ເທສະນາສັ່ງສອນສັບພະສັດທັງຫຼາຍໃນສາມໂລກຄື: ເທວະໂລກ ມະນຸດສະໂລກ ພົມມະໂລກ ໂດຍຊີ້ໃຫ້ຮູ້ເຫັນ ສັດຈະທຳ ຫຼື ກົດເກນຄວາມຈິງຂອງທັມມະຊາດໃນໂລກນີ້ ມີລັກສະນະທົ່ວໄປ 3 ປະການຄື:

1. ອະນິດຈັງ = ບໍ່ໝັ້ນທ່ຽງ ຄົງທົນ ຖາວອນ
2. ທຸກຂັງ = ມີຄວາມທຸກ
3. ອະນັດຕາ = ບໍ່ມີຕົວຕົນ

ອະນິດຈັງ ຄືສັບພະສິ່ງໃນໂລກນີ້ ບໍ່ໝັ້ນທ່ຽງ ຍືນຍົງ ມີເກີດ ແກ່ ເຈັບ ແລະ ຕາຍ ຫຼື ເສື່ອມສະຫຼາຍໄປ. **ສັບພະສັດທັງຫຼາຍ ຫາກຍັງມີກິເລດ (ຄວາມຊົ່ວຮ້າຍທີ່ຝັງຢູ່ໃນຈິດໃຈແລະສັນດານ)ຢູ່ ລ້ວນວົນວຽນຢູ່ໃນ"ວັດຕະສົງສານ" ອັນນີ້ບໍ່ມີທີ່ແລ້ວ.**

ຄວາມບໍ່ໝັ້ນທ່ຽງນີ້ ບໍ່ພຽງແຕ່ເກີດຂຶ້ນກັບຮ່າງກາຍທໍ່ນັ້ນ ແຕ່ຍັງລວມທັງແນວຄິດ ຈິດວິນຍານອີກດ້ວຍ. ເສັ້ນທາງ ແລະວິທີທີ່ຈະໄກຈາກຄວາມທຸກ ແລະໄດ້ຮັບຄວາມສຸກນັ້ນ ພຸດທະອົງ ໄດ້ຊີ້ໃຫ້ເຫັນແຈ້ງແລ້ວ ຮຽກວ່າ **"ອະຣິຍະສັດ 4"** ຜູ້ທີ່ຕ້ອງການພົ້ນຈາກທຸກ ແລະສະແຫວງຫາຄວາມສຸກ ຈະຕ້ອງປະຕິບັດຕາມແນວທາງພຸດທະດ້ວຍຕົນເອງ. ສ່ວນຈະໄດ້ຮັບຜົນຫຼາຍ-ໜ້ອຍປານໃດນັ້ນ ແມ່ນຂຶ້ນຢູ່ກັບສັດທາ ຄວາມເຊື່ອ ສະຕິປັນຍາ ຄວາມວິຣິຍະອຸດສາຫະ ມຸມານະ ແລະບຸນກຸສົນທີ່ມີມາແລ້ວ ຂອງແຕ່ລະຄົນ. ການຫຼຸດພົ້ນອອກຈາກກອງທຸກ ດັ່ງກ່າວນັ້ນໄດ້ຢ່າງສິ້ນເຊີງ ຮຽກວ່າ **"ນິບພານ"** ຜູ້ທີ່ປະຕິບັດຕາມທັມມະ ຍ່ອມໄດ້ຮັບຜົນ(ບຸນ)ຕາມກຳລັງແຫ່ງສັດທາ ສະຕິປັນຍາ ຄວາມວິຣິຍະ ອຸດສາຫະ ແລະມຸມານະຂອງເຂົາຜູ້ນັ້ນ.

ທັມມະໄດ້ຮັບການບັນທຶກຮວບຮວມໄວ້ ໂດຍແບ່ງເປັນ 3 ໝວດ ໃຫຍ່ຮຽກວ່າ "ໄຕຣປິດົກ" ຄື: ພະສູດ 21,000 ບົດ, ພະວິໄນ 21,000 ບົດ ແລະພະອະພິທຳ 42,000 ບົດ ລວມເປັນມີ 84,000 ບົດ.

## ຫົວໃຈຂອງທັມມະ

ເຖິງວ່າພະທັມຄຳສອນຂອງພະພຸດທະອົງ ຈະມີຫຼວງຫຼາຍພາຍມາກ ແຕ່ເມື່ອຫຍໍ້ເຂົ້າມາແລ້ວ ມີຢູ່ 3 ປະການສຳຄັນຄື:

1. ສັບພະ ປາປັດສະ ອະກາຣະນັງ
   *ການລະເວັ້ນຈາກການກະທຳຄວາມຊົ່ວທັງປວງ*
2. ກຸສະລັດສູປະສັມປະທາ *ການກະທຳແຕ່ຄວາມດີ*
3. ສະຈິຕຕະ ປະຣິໂຍທະປະນັງ
   *ການຮັກສາຈິດໃຈຂອງຕົນໃຫ້ສະອາດ ບໍລິສຸດ ຜຸດຜ່ອງ.*




ຖ້າສົມທຽບແລ້ວ ສອງຫຼັກການທຳອິດ ກໍຄືກັບຫຼັກຄຳສອນທົ່ວໄປຂອງສາສະນາ ຫຼືລັດທິອື່ນໆ ທີ່ສອນໃຫ້ຄົນ ***ເປັນຄົນດີ ມີສິນທຳ*** ແຕ່ຫຼັກການທີສາມນີ້ ເປັນອັນພິເສດແຕກຕ່າງຈາກສາສະນາອື່ນ ຊຶ່ງເນັ້ນໄປທີ່ເລື່ອງຂອງຈິດໃຈໂດຍສະເພາະ.

## ອະຣິຍະສັຈ 4

ຄືຄວາມຈິງອັນປະເສີດ 4 ປະການ ທີ່ພຸດທະອົງຊົງຄົ້ນພົບ ຮູ້ຄວາມຈິງ ເພື່ອນຳໄປສູ່ການດັບທຸກຄື :

1. ທຸກ = ສັບພະສັດເກີດມາລ້ວນແຕ່ມີທຸກ
2. ສະມຸດທັຍ=ເຫດແຫ່ງຄວາມທຸກຄື: ຕັນຫາ = ຄວາມທະເຍີທະຍານຢາກ ມີ 3 ຢ່າງຄື:
    1. ກາມະຕັນຫາ = ຄວາມທະເຍີທະຍານຢາກໃນກາມ,
    2. ພາວະຕັນຫາ = ຄວາມຢາກໄດ້ ຢາກເປັນ ຢາກມີ,
    3. ວິພາວະຕັນຫາ = ຄວາມບໍ່ຢາກເປັນ ບໍ່ຢາກມີ ບໍ່ຢາກເຈັບ ບໍ່ຢາກຕາຍ
3. ນິໂຣດ: ຄາດໝາຍການແກ້ທຸກ
4. ມັກຄະ: ເສັ້ນທາງໄປສູ່ການແກ້ບັນຫາ

## ສັບພະສັດ

ຄືສັດທັງຫຼາຍໃນໂລກ ຄືສິ່ງທີ່ປະກອບຂຶ້ນຈາກທາດ 4 ຄື: ດິນ ນ້ຳ ລົມ ໄຟ ແລະ ຂັນ 5 ຄື: ຮູບ (ຮ່າງກາຍ) ເວທະນາ (ຄວາມຮູ້ສຶກ) ສັນຍາ (ຄວາມຈື່ຈຳ) ສັງຂານ (ການປ່ຽນແປງເລື້ອຍໆບໍ່ຢຸດນິ້ງ) ວິນຍານ (ຄວາມສຳນຶກຮູ້) ແລ້ວມີຈິດເຂົ້າໄປຍຶດເປັນເຈົ້າຂອງ. ສັບພະສັດ ປະກອບດ້ວຍສອງສ່ວນສຳຄັນ ຄື: ຮູບ (ຮ່າງກາຍທີ່ຈັບຕ້ອງໄດ້ ແລະນາມ(ຈິດວິນຍານ = ສິ່ງທີ່ບໍ່ສາມາດຈັບຕ້ອງໄດ້).

ສັບພະສັດ ທັງຫຼາຍ ເປັນທຸກກໍ ຍ້ອນມີການເກີດ ແກ່ ເຈັບ ຕາຍນີ້ເອງ. ມີແຕ່ຜູ້ທີ່ເຂົ້າໃຈໃນກົດເກນອັນນີ້ຢ່າງເລິກເຊິ່ງເທົ່ານັ້ນ ຈຶ່ງຈະບໍ່ທຸກຮ້ອນເກີນໄປ ຍ້ອນຮູ້ສະພາບມັນແລ້ວ ແລະມີຄວາມສຸກອັນແທ້ຈິງໄດ້.

## ຫຼັກຄຳສອນຂອງພຸດທະສາສະນາ

ເພື່ອໃຫ້ບັນລຸ ຫຼືເຂົ້າເຖິງ ທັມມະຄຳສອນ ຂອງພຸດທະສາສະນານັ້ນ. ພຸດທະອົງຊົງໃຊ້ຫຼັກ 3 ປະການ ເພື່ອໃຫ້ສັບພະສັດ ປະພຶດປະຕິບັດຄື:

1. ສິລ =ໃຫ້ມີລະບຽບ ວິໄນ ຍຶດຖືປະຕິບັດຕາມ
2. ສະມາທິ =ໃຫ້ມີສະຕິຮູ້ສຶກຕົນຕະຫຼອດເວລາ
3. ປັນຍາ = ໃຫ້ມີຄວາມຮູ້ແຈ້ງໃນເຫດຜົນທັງຫຼາຍ

ພຸດທະອົງຊົງເຫັນວ່າ ການທີ່ມະນຸດຕ້ອງຈົມຢູ່ກອງທຸກນັ້ນ ກໍເພາະພວກເຂົາບໍ່ຮູ້ວ່າສິ່ງໃດຄວນ ສິ່ງໃດບໍ່ຄວນ. ຈິດໃຈຂອງພວກເຂົາຫຼົງລະເລີງຢູ່ກັບຄວາມໂລບ (ເຫັນແກ່ຕົນ) ຄວາມໂກດ (ໃຈຮ້າຍ) ແລະຄວາມຫຼົງ (ເຂົ້າໃຈຜິດຕໍ່ທຳມະຊາດ) ແລະພວກເຂົາມືດບອດ ບໍ່ຮູ້ທິດທາງທີ່ຈະອອກຈາກກອງທຸກ. ເພື່ອໃຫ້ສັບພະສັດພົບທາງອອກ ພຸດທະອົງຈຶ່ງສອນໃຫ້ຮູ້ຈັກທານ ສິລ ພາວະນາ ເພື່ອຈະໄດ້ນຳໄປສູ່ແສງສະຫວ່າງ.

### ທານ

ຄືການໃຫ້ ການແບ່ງປັນ ການເສຍສະລະ ແລກປ່ຽນຊັບສິນບັດເງິນຄຳເຫື່ອແຮງ ວິຊາຄວາມຮູ້ ຕະຫຼອດຮອດຄວາມຮັກ ຄວາມເຂົ້າໃຈ ຄວາມຄິດເຫັນ ນ້ຳໃຈໄມຕຣີ ຄວາມປາຖະໜາດີຕໍ່ກັນ.



ທຸກສັບພະສັດ ເກີດມາໃນໂລກນີ້ ລ້ວນຊອກສະແຫວງຫາປັດໄຈຕ່າງໆ ເຊັ່ນ: ອາຫານ ເຄື່ອງນຸ່ງຫົ່ມ ທີ່ຢູ່ອາໄສຢາປົວພະຍາດ...ເພື່ອການດຳລົງຊີບ ແຕ່ວ່າເງື່ອນໄຂ ແລະຄວາມອາດສາມາດຂອງແຕ່ລະສັດ (ຮູບ-ນາມ) ບໍ່ເທົ່າທຽມກັນ. ດັ່ງນັ້ນ ຈຶ່ງຄວນ ໃຫ້ທານແກ່ກັນຕາມເງື່ອນໄຂ ແລະກາລະໂອກາດ ຫຼື ແບ່ງປັນກັນ ແລກປ່ຽນກັນ ໂຍະ ຍານໃຫ້ແກ່ກັນ ເຫັນອົກເຫັນໃຈຊຶ່ງກັນ ແລະກັນ ແລະໃຫ້ອະໄພໃນຄວາມຜິດພາດ... ຜູ້ຮັ່ງມີສົງເຄາະຜູ້ທຸກຍາກ ຜູ້ແຂງແຮງ ຊ່ວຍເຫຼືອຜູ້ອ່ອນແອ, ຜູ້ໃຫຍ່ຊ່ວຍ ເຫຼືອຜູ້ນ້ອຍ ຜູ້ສະຫຼາດມີວິຊາຄວາມຮູ້ ຊ່ວຍເຫຼືອຜູ້ປົກໜາເບົາປັນຍາ...ແບບນີ້ເປັນຕົ້ນ...

ຜົນຂອງການໃຫ້ທານ ຈະຊ່ວຍລົດຄວາມໂລບ ຄວາມເຫັນແກ່ຕົນ ເຫັນແກ່ ໄດ້ ລົດຄວາມຂັດແຍ່ງແຂ່ງຂັນ ລົດການຂົ່ມເຫັງບຽດບຽນ ເຂັ່ນຂ້າ ທຳລາຍກັນ ຊ່ວຍ ໃຫ້ເກີດຄວາມເມດຕາປານີ ຫວັງດີ ເອື້ອເຟື້ອເຜື່ອແຜ່ຕໍ່ກັນ ແລະຊ່ວຍໃຫ້ຢູ່ຮ່ວມກັນ ໄດ້ ມີຄວາມສະຫງົບສຸກ ຜູ້ໃຫ້ທານ ຍ່ອມຈະໄດ້ຮັບຜົນ (ບຸນ) ຕອບແທນເຊັ່ນ: ໄດ້ຮັບ ຄວາມຮັກແພງ ຄວາມເຄົາລົບນັບຖື ຄວາມຍົກຍ້ອງສັນລະເສີນ ແລະໄດ້ຮັບການທານ ຕອບແທນຄືນ.

## ສິລ

ຄືຄວາມໜັກແໜ້ນ ທຸ່ນທ່ຽນ ໃນຈິດໃຈ ຄືຂໍ້ກຳນົດ ກົດເກນ ສຳລັບໃຊ້ປະຕິບັດ ເພື່ອໃຫ້ເກີດຄວາມປົກກະຕິທາງ ກາຍ ວາຈາ ໃຈ. ສິລມີອຳນາດຈຳກັດຄວາມ ປະພຶດທີ່ບໍ່ດີ ໃຫ້ສະອາດ ຮຽບຮ້ອຍ ສວຍງາມທາງກາຍ ວາຈາ ໃຈ ເປັນສິ່ງຍຶດໜ່ຽວຈິດໃຈ ບໍ່ໃຫ້ຕົກເປັນທາດຂອງກິເລດ ຊ່ວຍຄຸ້ມຄອງສັງຄົມ ແລະຄຸ້ມຄອງໂລກ.

ພຽງຮັກສາສິລຫ້າຂໍ້ໄດ້ຢ່າງປົກກະຕິ ຄື: 1. ບໍ່ບຽດບຽນ ເຂັ່ນຂ້າ ທຳລາຍ, 2. ບໍ່ລ່ວງລະເມີດໃນເຂົ້າຂອງ ອັນເປັນກຳມະສິດຂອງຜູ້ອື່ນ, 3. ບໍ່ລ່ວງລະເມີດໃນຂອງຮັກຂອງຫວງແຫນ ລູກເມຍ/ຜົວ ຫຼືສິດທິເສຣີພາບຂອງຜູ້ອື່ນ, 4.ບໍ່ເວົ້າຈາ ຕົວະລ່າຍ ອຳພາງ ເວົ້າໂຍກ ສໍ້ສຽດ ແລະ 5. ບໍ່ດື່ມກິນຂອງມຶນເມົາທີ່ເປັນພິດ ມີລິດຕໍ່ຈິດ ແລະປະສາດ ໄດ້ເທົ່ານີ້ກໍເປັນເງື່ອນໄຂພື້ນຖານໃຫ້ສັບພະສັດໃນໂລກໄດ້ມີຄວາມສຸກແລ້ວ.

ການຮັກສາ ກາຍ ວາຈາ ໃຈ ໃຫ້ຕັ້ງຢູ່ເປັນປົກກະຕິ ສະໝ່ຳສະເໝີ ທຸກເມື່ອ ຕາມຂໍ້ກຳນົດ ກົດກະຕິກາ ແບບນີ້ຮຽກວ່າ "ການຮັກສາສິລ"

## ພາວະນາ

ຄືການພິນິດພິຈາລະນາ ອ່ານຕົວເຮົາເອງ (ຮ່າງກາຍ ແລະ ຈິດໃຈ) ໃຫ້ຮູ້ເຫັນຄວາມເປັນໄປຕາມກົດເກນ ເກີດ ແກ່ ເຈັບ ຕາຍ ຮູ້ການກະທຳຂອງຕົນເອງ (ກາຍ ວາຈາໃຈ) ວ່າຜິດຖືກຊົ່ວດີໄດ້ຢ່າງຖືກຕ້ອງ. ເຈົ້າຊາຍສິດທັດຖະ ກໍໃຊ້ການພາວະນານີ້ແລເປັນວິທີທາງປະຕິບັດຕົນ ຈົນສາມາດຕັດສະ(ຮູ້ແຈ້ງເຫັນຊອບ) ແລະກາຍເປັນພຸດທະ.

ຜູ້ທີ່ພິຈາລະນາຮູ້ຕົນວ່າ ຮ່າງກາຍ ຈິດວິນຍານ ນີ້ບໍ່ທ່ຽງໝັ້ນ ຍ່ອມຮູ້ຈັກລະວັງຕົນ ແລະດຳລົງຊີວິດຢ່າງບໍ່ປະມາດ ດ້ວຍການລົດລະຈາກການກະທຳບາບ ແລະສະແຫວງຫາຄວາມສຸກຢ່າງຖືກຕ້ອງ. ສ່ວນຜູ້ທີ່ບໍ່ຮູ້ຕົນ ບໍ່ເຂົ້າໃຈສະພາບຕົນເອງ ກໍຈະຫຼົງງົມງວາຍຢູ່ກັບມາຍາພາບ ອັນພາໃຫ້ໃຊ້ຊີວິດຢ່າງປະໝາດ ຂາດຄຸນຄ່າ ຫາສາຣະບໍ່ໄດ້ ຊີວິດກໍຈະປະສົບແຕ່ຄວາມມົວໝອງຕົກເປັນທາດຂອງກິເລດ ດີ້ນຣົນໄຂວ່ຄວ້າ ແລະຫາຄວາມສຸກທີ່ແທ້ຈິງບໍ່ໄດ້ ...




# ຮີດຄອງ ປະເພນີ

**"ຮີດ"** ແລະ**"ຄອງ"** ມີຄວາມໝາຍໃກ້ຄຽງກັນ ແຕ່ບໍ່ແມ່ນອັນດຽວກັນ. ຄຳວ່າ **"ຮີດ"** ແມ່ນໝາຍເຖິງສິ່ງທີ່ໄດ້ປະພຶດປະຕິບັດກັນມາເປັນເວລາດົນນານ, ສ່ວນຄຳວ່າ "ຄອງ" ໝາຍເຖິງກົດ ຫຼືແນວທາງທີ່ວາງໄວ້ເພື່ອປະຕິບັດຕາມ. ເມື່ອເຮົາເອົາ"ຮີດ" ແລະ "ຄອງ" ມາລວມເຂົ້າກັນ ຈະກາຍເປັນຄຳວ່າ "ຮີດຄອງ" ທີ່ມີຄວາມໝາຍວ່າ: ແນວທາງການປະພຶດປະຕິບັດທີ່ສືບທອດກັນມາເປັນເວລາດົນນານ.

**"ຮີດສິບສອງຄອງສິບສີ່"** ແມ່ນແນວທາງການປະພຶດປະຕິບັດ ທີ່ເຈົ້າຟ້າງຸ່ມ ມະຫາລາດ ໄດ້ກຳນົດຂຶ້ນ ພາຍຫຼັງທີ່ທ້ອນໂຮມບັນດາຫົວເມືອງລາວເຂົ້າເປັນອານາຈັກລ້ານຊ້າງເອກະພາບ. ຈຸດປະສົງກໍແມ່ນເພື່ອໃຫ້ປະຊາຊົນທີ່ເຊື່ອຖືຜີສາງນາງໄມ້ທີ່ງົມງວາຍ ໃຫ້ມານັບຖືສາສະໜາພຸດ ໂດຍມີແນວທາງປະຕິບັດ ຄື ຮີດສິບສອງຄອງສິບສີ່ແທນ.

## ຮີດສິບສອງ

ໃນແຕ່ລະເດືອນຂອງປີໜຶ່ງ ຈະມີການເຮັດບຸນປະເພນີ ຂອງພຸດທະສາສະນິກະຊົນທີ່ແຕກຕ່າງກັນໄປ ເຊິ່ງສະແດງໃຫ້ເຫັນເຖິງຄວາມຮູ້ບຸນຄຸນຕໍ່ສິ່ງສັກສິດ ທີ່ຊ່ວຍໃຫ້ຕົນເອງມີຊີວິດການເປັນຢູ່ທີ່ດີ. ຮີດສິບສອງປະກອບມີ:

1. ເດືອນຈຽງ (ເດືອນໜຶ່ງ) ບຸນນິມົນພະສົງເຂົ້າກຳ
2. ເດືອນຍີ່ (ເດືອນສອງ) ເຮັດບຸນລານເຂົ້າ ຫຼືບຸນຄຸນເຂົ້າ, ບາງທ້ອງຖິ່ນຍັງເອີ້ນວ່າ ບຸນກອງເຂົ້າກໍມີ.
3. ເດືອນສາມ ເຮັດບຸນເຂົ້າຈີ່
4. ເດືອນສີ່ ເຮັດບຸນພະເວດ
5. ເດືອນຫ້າ ເຮັດບຸນສົງພະ ຫຼືບຸນປີໃໝ່ລາວ
6. ເດືອນຫົກ ເຮັດບຸນບັ້ງໄຟ
7. ເດືອນເຈັດ ເຮັດບຸນບ້ານ ຫຼືບຸນລ້ຽງຜີມະເຫສັກຫຼັກເມືອງ
8. ເດືອນແປດ ບຸນເຂົ້າພັນສາ
9. ເດືອນເກົ້າ ບຸນຫໍ່ເຂົ້າປະດັບດິນ
10. ເດືອນສິບ ບຸນຫໍ່ເຂົ້າສະຫຼາກ
11. ເດືອນສິບເອັດ ບຸນອອກພັນສາ
12. ເດືອນສິບສອງ ບຸນທອດກະຖິນ

## ຄອງສິບສີ່ (ສຳລັບສາມັນຊົນ)

ຄອງສິບສີ່ໝາຍເຖິງຂໍ້ກຳນົດ 14 ຂໍ້ ທີ່ປະຊາຊົນລາວເຮົາຖືເປັນທຳນຽມປະຕິບັດມາຕັ້ງແຕ່ດົນນານ ແລະໃນປັດຈຸບັນກໍຍັງເຊື່ອຖືຢູ່ ແຕ່ອາດຈະບໍ່ເຂັ້ມງວດ ຫຼືບາງຂໍ້ໃນບາງທ້ອງຖິ່ນກໍປ່ອຍວາງໄປແລ້ວ. ຄອງສິບສີ່ມີຄື:

1. ຢ່າຢຽບເງົາຂອງພະສົງ ຫຼື ຜູ້ມີສິນບໍລິສຸດ
2. ຢ່າເອົາອາຫານເຫຼືອ ຫຼືເງື່ອນ ໄປໃຫ້ພະສົງສັນ
3. ຢ່າເສບກາມະຄຸນ (ມີເພດສຳພັນ) ໃນມື້ວັນສິນ, ວັນເຂົ້າພັນສາ, ວັນມາຄະບູຊາ, ວັນວິສາຂະບູຊາ ແລະວັນກຸດສົງການຢ່າງເດັດຂາດ.
4. ເມື່ອພະສົງກາຍມາໃຫ້ນັ່ງລົງ, ນົບມືໄຫວ້ ແລ້ວຈຶ່ງຄ່ອຍຍ່າງກາຍ ຫຼືຈຶ່ງຄ່ອຍລົມນຳເພິ່ນ.
5. ມື້ພະສົງເຂົ້າກຳ ໃຫ້ມີດອກໄມ້ທູບທຽນ ແລະເຄື່ອງບໍລິຂານໄປທານຮ່ວມເພິ່ນ.

6. ກ່ອນຈະເຂົ້ານອນໃຫ້ອາບນ້ຳ ຫຼືລ້າງຕີນເສຍກ່ອນ
7. ເມື່ອເຖິງວັນສິນດັບ-ສິນເພັງ ໃຫ້ເຮັດບຸນໃສ່ບາດ ຫຼືນິມົນພະສົງມາສູດມຸງຄຸນເຮືອນ.
8. ເມື່ອເຖິງວັນສິນເພັງໃຫ້ແຕ່ງຂັນດອກໄມ້ ທູບທຽນ ໄປສົມມາຜົວຂອງຕົນ
9. ເມື່ອພະສົງສາມະເນນມາບິນທະບາດ ຢ່າໃຫ້ເພິ່ນຄອຍຖ້າ, ເວລາປ່ອນບາດຢ່າໃຫ້ມີຊູນບາດ ຫຼືຊູນຖືກພະສົງສາມະເນນ, ຍາມປ່ອນບາດຢ່າໃສ່ໝວກ, ຢ່າເອົາຜ້າປົກຫົວ, ຢ່າໃສ່ເກີບ, ຢ່າອຸ້ມເດັກນ້ອຍ, ຢ່າຖືມີດຖືພ້າ ຫຼືຢ່າຖືອາວຸດໃດໆ.
10. ເມື່ອຮອດວັນສິນ 8 ຄ່ຳ, 14 ຫຼື 15 ຄ່ຳ ໃຫ້ພາກັນ ສົມມາກ້ອນເສົ້າ, ແມ່ຂັ້ນໄດ ແລະປະຕູເຮືອນ.(ປັດຈຸບັນຢູ່ຊົນນະບົດບາງບ່ອນຍັງປະຕິບັດຢູ່).
11. ກ່ອນຈະຂຶ້ນເຮືອນໃຫ້ລ້າງຕີນສາກ່ອນ.
12. ໃຫ້ພາກັນເຮັດຮົ້ວອ້ອມວັດແລະບ້ານເຮືອນຂອງຕົນໃຫ້ດີ.
13. ເມື່ອເຖິງລະດູການເກັບກ່ຽວຜົນລະປູກ ຢ່າຟ້າວກິນກ່ອນ ໃຫ້ເອົາໄປເຮັດບຸນໃຫ້ທານແກ່ຜູ້ມີສິນກ່ອນ ແລ້ວຈິ່ງຄ່ອຍກິນ.(ຕົວຢ່າງ: ຍາມເຂົ້າໃໝ່ກໍເອົາໄປບູຊາ ຫຼືໃສ່ບາດກ່ອນ, ແລ້ວຈິ່ງຄ່ອຍກິນ).
14. ຢ່າພາກັນລັກໂລບຕາຊັ່ງ, ຢ່າພາກັນຈ່າຍເງິນແດງ ແປງເງິນຄວ່າງ, ຢ່າກ່າວຄຳຫຍາບຊ້າ ກ້າແຂງ ຕໍ່ກັນແລະກັນ.

## ເຮືອນສາມ ນ້ຳສີ່

24/VII ຫ້າມຈຳໜ່າຍ

ບູຮານຖືວ່າ ເປັນຄຸນສົມບັດພື້ນຖານ ຂອງແມ່ຍິງລາວ

1. ເຮືອນຄົວ : ຈັດການເຮືອນຄົວໃຫ້ດີງາມເປັນລະບຽບຮຽບຮ້ອຍ ທຳຄວາມສະອາດເບິ່ງງົດງາມ ຂອງໃຊ້ໃນເຮືອນຄົວຈັດໃຫ້ຖືກໜ້ອງ ຮັບຜິດຊອບຍາມຄົວກິນ, ນອກຈາກນັ້ນ ວຽກງານຄົວເຮືອນທຸກປະເພດ ແມ່ນໜ້າທີ່ຂອງຜູ້ຍິງ.
2. ເຮືອນຜົມ: ຄົນລາວບູຮານທຸກເຜົ່າຊົນແມ່ນເກົ້າຜົມໃຫ້ສວຍງາມສະເໝີ, ແຕ່ປັດຈຸບັນນີ້ ມີທັງດັດ, ມີທັງຕັດ, ມີທັງຊອຍ ແຕ່ຈະເຮັດຈັ່ງໃດກໍສຸດແລ້ວແຕ່ຕາມໃຈມັກທັງນີ້ຕ້ອງຮັບປະກັນຄວາມງາມ, ສະອາດແລະຖືກກັບໂຄງໜ້າ
3. ເຮືອນກາຍ : ແຕ່ງກາຍໃຫ້ສະອາດຮຽບຮ້ອຍ ເບິ່ງແລ້ວງາມຕາ ແລະ ຢູ່ໃກ້ກໍບໍ່ເປັນທີ່ໜ້າລັງກຽດ.



## ນ້ຳສີ່

1. ນ້ຳດື່ມ : ນ້ຳໜ້າເຮືອນ ສະໄໝເກົ່າກ່ອນເພິ່ນມີອຸນ້ຳຢູ່ໜ້າເຮືອນ ໃສ່ກະບວຍໄວ້ພ້ອມ, ຫຼືຕັ້ງໄວ້ໜ້າເດີ່ນບ້ານເລີຍ ແຂກໄປໄທມາໄດ້ຕັກກິນສະບາຍ, ນ້ຳໃນເຮືອນ ຄື ນ້ຳໃນເຮືອນຄົວ ຫຼືເຮືອນໃຫຍ່ ອັນນີ້ເປັນນ້ຳສຳລັບໃຊ້ສອຍ ແລະທັງກິນ ຢ່າໃຫ້ຂາດແອ່ງ ຂາດອຸ ຢ້ານນ້ອຍຍາມຫິວກາງຄ່ຳກາງຄືນ ພໍໄດ້ຕັກກິນ ຫຼືເມື່ອເກີດເຫດໄຟຟືນຂຶ້ນມາພໍໄດ້ດັບໄຟໃນເບື້ອງຕົ້ນໄດ້ ຄົນບູຮານຈຶ່ງມີຄຳເວົ້າວ່າ "ນ້ຳໃນໄຟຟືນ".

2. ນ້ຳຄຳ: ນ້ຳຄຳນີ້ ເປັນຄຳເວົ້າ ຄຳຈາ ມ່ວນເພາະເສາະໃສ ບໍ່ກັບ ບໍ່ກອກ ເວົ້າຈາຊື່ກົງ ສະເໝີຕົ້ນ ສະເໝີປາຍ.

3. ນ້ຳໃຈ: ເປັນຄົນມີນ້ຳໃຈໂອບອ້ອມອາຣີນຳຍາດພີ່ນ້ອງ ແລະເພື່ອນຝູງ.

4. ນ້ຳເຕົ້າປູນ: ຄວາມໝາຍໜຶ່ງ ແມ່ນວ່າຄົນລາວບູຮານທຸກເຜົ່າແມ່ນຄ້ຽວໝາກທັງຍິງທັງຊາຍ, ສະນັ້ນຄຳວ່ານ້ຳເຕົ້າປູນ ບໍ່ຄວນໃຫ້ແຫ້ງ ຄັນນ້ຳເຕົ້າປູນແຫ້ງ ເຂົາວ່າຍິງເຮືອນນັ້ນຂີ້ຄ້ານ, ອີກຄວາມໝາຍໜຶ່ງ ຄືນ້ຳເຕົ້າປູນ ຄືພູມຄວາມຮູ້ຂອງຜູ້ຍິງທີ່ເປັນແມ່ເຮືອນຕ້ອງມີຄວາມຮູ້ ສະຫຼາດໃນກິດຈະການງານທັງປວງ.



# ຮູບໃບນີ້
## ພົບທີ່ສາມແຍກໜອງເປັດ

ເພັດເມືອງພວນ

ນັ່ງຖາມຂ່າວເລັກໜ້ອຍ ສາຍຕາເຫຼືອດໄປມາ
ແສງຕາເລີຍໄປຍຸດ ບ່ອນທີ່ ທີວີ (TV) ຕັ້ງ
ແຈຂອງທີວີ (TV) ນັ້ນ ປາກົດເຫັນພາບແຜ່ນໜຶ່ງ
ຫຍັບເຂົ້າໄປໃກ້ໆ ຂອງຈິງແທ້ແນ່ນອນ...

ແລ້ວຈຶ່ງຖາມດອດຂຶ້ນ ແມ່ນໃຜນໍເອົາມາ ?
ສຽງຕອບກັບທັນທີ "ຜູ່ສຳຄັນເອົາມາໃຫ້"
ຈຶ່ງໄດ້ເອົາມາໄວ້ ແຈທີວີ ບ່ອນເບິ່ງງ່າຍ
ຫຼຽວໄປແຕ່ລະຄັ້ງ ອຸທານຍ້ອງຍົກຍໍ ຢູ່ເນີ

ສົມແລ້ວ ສົມນາງເປັນຄົນດີແທ້ ນັກຮຽນເກົ່າຂອງຄູ ນີ້ນໍ !
ສົມວ່າເປັນຄົນດີ ແຕ່ເມື່ອຍາມຍັງນ້ອຍ
ເຖິງຈະຮຽນໄກບ້ານ ທົບທານບໍ່ໄດ້ຂາດ
ບາດວ່າສູງສົ່ງຂຶ້ນ ບໍ່ລືມເຄົ້າເກົ່າຄູ ນີ້ນາ.

# ເມືອງລາວສວຍງາມ

(ຈາກປຶ້ມແບບຮຽນ ພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 1)

ແຕ່ງໂດຍ: ທ່ານ ພູມີ ວົງວິຈິດ

ເມືອງລາວເປັນເຂດບ້ານ
ທາງເໜືອມີພູຜາ
ຍົນສະອອນດົງໄມ້
ເປັນດັ່ງອຸທິຍານໃຫຍ່ກວ້າງ
ເດືອນຍີ່ສາມສີ່ເຕົ້າ
ແສນສຳປານມາລາ
ສີດ່າງແດງດຳແຫ້ມ
ເໝືອນດັ່ງ ດາວສ່ອງຟ້າ
ຍາມເມື່ອລົມປົ່ນເປື້ອງ
ໄປສູ່ຈອມພູສູງ
ຝູງໝູ່ດົງດອນດ້າວ
ຫອມກິ່ນດວງດອກໄມ້
ນັບແຕ່ໃນເຂດແຄວ້ນ
ບໍ່ອາດພັນລະນານັບ
ອະເນກນອງລຳໄມ້
ສາມາດຂາຍແລກຄ້າ
ຈັ່ງແມ່ນມັນມ່ວນແທ້
ເປັນທົ່ງຍາວໄກສຸດ
ຕາມທຳນຽມເມືອງບ້ານ
ເປັນບ່ອນພົງພີ່ນ້ອງ
ເຖິງເມື່ອຍາມແດດຕ້ອງ
ຕາລຳນອງຍັງແຖວ
ຈັ່ງແມ່ນງາມຮວງເຂົ້າ
ຕະຫຼອດໄປທົ່ວແຄວ້ນ
ສະຖານຖິ່ນງາມຕາ
ໜ່ວຍພະນອມລຽນຊ້ອນ
ໄພສົນແສນຍ່ານ
ຂຽວສະອຸ້ມຊູ່ຍາມ
ເອົ້າອຸ່ນລະດູບານ
ເບີກເບີຍບານແຍ້ມ
ເຫຼືອງກະຈາຍເຕັມປ່າ
ປະດາເຫຼື້ອມເຮືອເຮືອງ
ພັດຝຸ່ນລະອອງຫອມ
ກິ່ນກະຈວນຟອງຟົ້ງ
ຕະການຕາກວ້າງໃຫຍ່
ກະຈາຍກົ້ວທົ່ວແດນ
ພະນອມປ່າໄພໜາ
ອ່ານນຸນໄປໄດ້
ແນວດີມີຄ່າ
ຂອງໃຊ້ເຄື່ອງດົງ...
ທ້ອງຖິ່ນດິນລາວ
ຊົ່ວຕາຕົ່ງຢັຽມ
ສະຖານທອງທຽວທ່ອງ
ທຽວຢື້ຢ່ອງຍາມ
ລະດູດ່ານເດືອນສິບສອງ
ທົ່ງນາຕອນເຊົ້າ
ເຫຼືອງລຽນເປັນແຜ່ນ
ສະເໜີປັ້ນປຽງຄຳ.



# ດອກບົວ

**ໂດຍ: ດວງຈຳປາ**

ດອກບົວ ທຳມະຊາດເຊື້ອ    ແກມເກີດກັບຕົມ
ດົມດື່ມ  ກິນດິນເປີ    ແປດຄາວຄືຊິເປື້ອນ
ຍັງເລົ່າ  ສີສັນຫຼ້າງ    ລາງຫອມຊ້ອຍຊື່ນ
ສົມທີ່   ເກັບຍົກໄວ້    ບູຊາໄຫວ້ແທ່ນພະທຳ

ປຸນດັ່ງ  ນ້ອງອ່ອນນ້ອຍ    ລູກຊາວປ່າຂາດອນ  ພີ່ນີ້
ແດດຝົນທົນງານໜັກ    ເຫື່ອໄຫຼໄຄຍ້ອຍ
ມີໃຊ່   ເຄີຍຄອງພໍ້    ຈັບຫອມປະທິນລູບ
ຜິວກໍ   ຍັງຜ່ອງແຜ້ວ    ສະເໝີແກ້ວກັບບົວ  ແທ້ແລ້ວ.



# "ກະຕ່າຍ" ນັກຂຽນນ້ອຍ

ຄຳອອນ ເພັດດາວເຮືອງ

* ປັນຍາກາດຄຶກຄື້ນ  ສະຫຼຸບບັ້ນກວດສອບພັດທະນາຊົນນະບົດ
ແລະລຶບລ້າງຄວາມທຸກຍາກ  ໃນເດືອນເຈັດ ( 11/7/12)
ສຳເລັດຜົນຈົບງານ  ຄາດໝາຍທີ່ວາງໄວ້
ຂັ້ນເທິງສັງລວມໄດ້  ບົດດີ ແລະຄົບເດັ່ນ
ຕັ້ງແຕ່ໄວອ່ອນນ້ອຍ  ເຖິງເທົ້າຜູ້ຊະລາ  ພຸ້ນແລ້ວ

* ອາຍຸຕ່ຳເລືອກໄດ້  ນາງຕ່າຍສິບສອງປີ
ບົດຂອງລາວດີໆ  ເນື້ອໃນໂຄງເຄົ້າ
ວັນນະກຳມີພ້ອມ  ຕົວຈິງກໍສອດຄ່ອງ
ລູກຫຼານຜູ້ໜຸ່ມນ້ອຍ  ລອງຮຽນແຕ້ມ ຂີດຂຽນ  ໄວ້ເນີ

* ຜູ້ອາຍຸສູງກໍໄດ້ ຂຽນບົດສົ່ງເປັນຂະບວນ
ເປັນທວນໄຟນຳພາ ລູກຫຼານພາຍຊ້ອຍ
ມີທັງກະວີພ້ອມ ບົດປະພັນເລື່ອງດີເດັ່ນ
ເປັນຂະບວນຟົດຟື້ນ ແສນສະອື້ນມ່ວນໃຈ ແທ້ເດ

* ພິເສດ ໃນຄັ້ງນີ້ ໄດ້ມີຊື່ຄົນພວນ
ສອງຄົນໃຊ້ນາມປາກກາດຽວ ຕື່ນຕະລຶງພຶງພໍ້
ນີ້ບໍ ຄວາມມຸ່ງຫວັງໃຈຕັ້ງ ເໝືອນກັນບໍ່ມີຕ່າງ
ເພັດເມືອງພວນສອງເມັດໄດ້ ມາພໍ້ຈວບກັນ ດີໃຈເດ

* ຕ່າງແຕ່ເມັດໜຶ່ງນັ້ນ ໄດ້ຮຸ່ງປະກາຍແສງ
ໃຊ້ນາມແຝງມາດົນ ກວ່າ 30 ປີແລ້ວ
ເກີດໃນຖັນແຖວກໍ້າ ເມືອງຄູນ ປະຫວັດສາດ
ບ້ານນາໄຊ ບັ້ງແຫ່ຫ້ອຍ ຄຳອອນ ນັ້ນຊື່ຈິງ ພີ່ນ້ອງເຮີຍ

* ເມັດທີສອງນັ້ນ ໄດ້ຮຸ່ງປະກາຍສີ
ມີຊື່ເດີມຄຳພັນ ຢູ່ໂພນສະຫວັນພຸ້ນ
ລາວມີພອນສະຫວັນດ້ານ ກະວີກອນມາຕັ້ງແຕ່ກ່ອນ
ເຂົາວ່າໃສ່ຊື່ຫຍໍ້ 30 ປີ ແລ້ວຜ່ານມາ ວ່າຊັ້ນ

* ໃຜກັນເກີດລຸນ ແລະກ່ອນນັ້ນ ບໍ່ໄດ້ວ່າຫຍັງກັນ ດອກເນີ
ສິ່ງສຳຄັນໃຜກໍມັກ ກາບກອນກະວີເວົ້າ
ສາວຄຳອອນຜູ້ເປັນເອື້ອຍ ຂໍເຊີຍຊົມສຸດຂະໜາດ
ບົດບາດກອນທີ່ຍາດໄດ້ ຄະແນນລ້ຳຄ່າສູງ ນ້ອງເອີຍ

* ແຕ່ລະຄົນບໍ່ຕ້ອງ ປັບປ່ຽນນາມປາກກາ ດອກນາ
ມີແຕ່ຮັກສາຄອງປາກກາ ເຊີດຊູກະວີກ້າວ
ເປັນລູກສາວ ລູກຊາຍກໍ້າ ຄູນພວນໃຫ້ສົມຊື່
ຜັດສິ ແຕ່ລະເມັດໃຫ້ ປະກາຍເອ້ຢູ່ຖິ່ນພວນ ເຮົານໍ!



ເພັດເມືອງພວນຍິງ
ຄຳອອນ ເພັດດາວເຮືອງ

ເພັດເມືອງພວນຊາຍ
ຄຳພັນ ວໍລະສິງ

# "ເພັດ" ພົບ"ເພັດ"

* ເພັດ ແມ່ນມີຄ່າລ້ານ ເໜືອກວ່າເງິນຄຳ
ໃຜກໍຄຶງຝັນຫາ ຢາກຄອງເປັນເຈົ້າ
ເລີຍເລົ່າແຝງນາມຕັ້ງ ເພັດເມືອງພວນເປັນຊື່
ຫຼາຍໝື່ນມື້ ຈຶ່ງມາພໍ້ພົບກັນ

* ສອງເພັດເມືອງພວນນັ້ນ ພົບທີ່ໂຄສະນາ
ເພັດໜຶ່ງແນວນາມຍິງ ຊື່ ຄຳອອນ ມາດາຕັ້ງ
ເພັດສອງຍັງຊາຍແທ້ ບໍ່ແກມແກທົບແຮ່
ສອງເພັດແມ່ນເພັດແທ້ ທັງກຳຖິ່ນພວນ ພຸ້ນເນີ

* ສອງເພັດໄດ້ພົບພໍ້ ແມ່ນສອງເພັດນາມປາກກາ
ເພັດຊາຍມີນາມຈິງ ຄຳພັນ ວໍລະສິງແທ້
ສອງເພັດແນບທາງໝັ້ນ ປະພັນດີປັ້ນແຕ່ງ
ແຂ່ງກັນບັບມື້ກ້າວ ໃຫ້ສົມແທ້ເພັດຈິງ ເຈົ້າເອີຍ

* ບາດນີ້ ຈັ່ງແມ່ນໄດ້ ສົມແມ້ງມາດປະສົງ
ສອງເພັດລົງລາຍຮວມ ຮ່ວມແຮງກັນກ້າວ
ສອງເພັດເຮົາຢ່າໄດ້ ຊີງຊັງແໜງໜ່າຍ ກັນເນີ
ສອງເພັດຢ່າໄດ້ເສົ້າ ບານແຍ້ມດັ່ງດອກຄາຍ ບັ້ນທ້ອນ.

# ທົ່ງຫຍ້າ ປາແປກ ສາຍລົມ

ເພັດລຸນນະວົງ

ຢືນຢູ່ກາງທົ່ງຫຍ້າ ຂຽວຊື່ນສຸກໃຈ ແທ້ເດ
ຫຼຽວລຳໄປສຸດຕາ ທົ່ວທັງເໜືອໃຕ້
ໄມ້ແປກໂອນເອນຕ້ອງ ລົມໂຊຍພັດແກ່ວງ
ແຍງແລ້ວແຍງຢູ່ເລື້ອຍ ຫົວໃຈຂ້ອຍກໍແກ່ວງໄກວ ແທ້ນາ

ອອນຊອນເດທົ່ງຫຍ້າ ຄືຈັ່ງວ່າພົມປູ ຂຽວເດ
ຫຼຽວສຸດຫູສຸດຕາ ຍິ່ງຊື່ນກາຍ ແລະໃຈພ້ອມ
ຫຼຽວໄປຈອມພູພຸ້ນ ລົມໂຊຍຮ້ອງມາໃສ່
ເໝືອນດັ່ງຕົ້ນແປກເວົ້າ ຢ່າເພົາປ້ຳຢ່າຄັ້ງ ອີກເນີ

ຟັງແລ້ວຟັງຍິ່ງຄ້ອຍ ຫອມຍອດແປກຕາມລົມ
ສົມຫົວໃຈພັນລະນາ ບໍ່ຢາກໜີໄກເຈົ້າ
ຢາກມາຢືນຫັບໃຈເຂົ້າ ບຳລຸງພວງປອດຊື່ນ
ບຳລຸງແສງຕາໃຫ້ຮຸ່ງແຈ້ງ ເພື່ອແຍງເຈົ້າຕໍ່ໄປ ຄັ້ງເອີຍ

ປະຕິຍານຕໍ່ເຈົ້າ ທຳມະຊາດທັງມວນ
ຂໍປ່າວເຕືອນມວນຊົນ ໃຫ້ເບິ່ງແຍງຮັກສາເຈົ້າ
ຂໍເຜີຍແຜ່ເຍົາວະຊົນຮູ້ ຈົ່ງເອັນດູທຳມະຊາດ ແດ່ເນີ
ພວກເຮົາ ມີສຸຂະພາບຢືນຢູ່ໄດ້ ເພາະມີເຈົ້າໂອບຄຽງ ນີ້ແລ້ວ.





# ຮ່ວມສ້າງຮ່ວມສິນ

ໂດຍ: ຄຳຈັນ ສໍລາງກູນ

* ຂໍຕາງໜ້າພີ່ນ້ອງ ຜູ້ກຳເນີດຢູ່ບ້ານນາໄຊ
ຕາແສງຊຽງເມືອງຄູນ ຜູ້ຢູ່ໄກແລະເບົາຍັງ
ໄດ້ຮ່ວມພາກັນຕັ້ງ ສາລາທຳຂຶ້ນມາໃໝ່
ອາໄສທຶນກໍ່ສ້າງ ທາງໃກ້ແລະໄກ

* ທຶນທີ່ໂຮມກໍ່ສ້າງ ກໍມາຈາກຫຼາຍທາງ
ໂຮມປັດໄຈບໍລິສຸດ ກໍ່ແປງຈົບແລ້ວ
ສ້າງເປັນອະນຸສອນໄວ້ ບູຊາທຳພຸດທະບາດ
ຍາດນຳ້ໃຈຂອງພີ່ນ້ອງ ໂຮມໄວ້ເທີດທູນ  ຂອບພະຄຸນແລ້ວ

*　ໜຶ່ງໃນປັດໄຈວ່ານັ້ນ　　ມີທຶນສົມທົບຂອງບ້ານສາວ
ຄຳເມິງ ວໍລະຈິດ　　ແລະລູກຫຼານພຽງພ້ອມ
ຕົນຂໍປະນອມມືໄຫວ້　　ຂອບໃຈນຳທຸກໆທ່ານ
ຂໍໃຫ້ເຈົ້າມູນລະສັດທາຈົ່ງໄດ້　　ສະຖຽນໝັ້ນຕໍ່ໆໄປ

*ເຖິງວ່າ ບ້ານເກີດເອື້ອຍແລະນ້ອງ　　ຫາກຕັ້ງຢູ່ໄກກັນ
ສາຍສຳພັນບໍ່ທັນມີ　　ແຕ່ນ້ອງມອງໄກກວ້າງ
ສົມແລ້ວສົມພານນ້ອງ　　ເປັນຄົນດີທີ່ເຂົາຊ່າ
ອານິສົງທີ່ນ້ອງສ້າງ　　ຊາວບ້ານໄດ້ຊື່ນຊົມ　　ແທ້ແລ້ວ

*　ອັນວ່າຍອດຊໍ່ຟ້າ　　ຊູສະຫງ່າລາສີ
ມີສັນຍານໃຫ້ປວງຊົນເຮົາ　　ຮ່ວມໃຈປົກປ້ອງ
ປົກປັກຮັກສາໄວ້　　ມາຕຸພູມແຜ່ນດິນເກີດ　　ເຮົານີ້
ເທວະບຸດ ເທວະດາສະຖິດຢູ່ເບື້ອງ　　ສະຫວັນພຸ້ນລ່ຳແຍງ　　ແທ້ດາຍ
ຂອບໃຈເນີ



# ຊຽງຂວາງແດນງາມ

ໂດຍ: ດວງມາລາ

*ຊຽງຂວາງ ດິນແດນວິມານ*

*ໜາວໃຈສະທ້ານ ໜາວສັ່ນສະເທືອນ*

ເພງນີ້ ຊື່ຊຽງຂວາງແດນງາມ ແຕ່ງໂດຍ ສ. ບົວລະພັນ, ເນື້ອໃນ ແລະຄວາມໝາຍຂອງເພງນີ້ ມັນໄດ້ບົ່ງບອກເຖິງແຂວງຊຽງຂວາງໄວ້ແຈ່ມແຈ້ງ ແລະຊັກຊວນໃຫ້ຂ້າພະເຈົ້າ ໄດ້ຄົ້ນຫາຄວາມຈິງແທ້ໆ

ຂ້າພະເຈົ້າມີໂອກາດເດີນທາງສູ່ແຂວງຊຽງຂວາງ ຄັ້ງທຳອິດ ວັນທີ 4/11/2010 ເພື່ອໄປເຮັດວຽກໃຫ້ ປ້າຄຳເມີງ ວໍລະຈິດ, ຮ່ວມເດີນທາງໄປນຳປ້າຄຳອອນ ເພັດດາວເຮືອງ, ອ້າຍ ທົງເທີນ, ອ້າຍ ຈັນທະພອນ, ນາງ ບຸນຮອງ ແລະທ້າວ ສິນ ( ໂຊເຟີລົດສີມີດີ). ອາກາດໜາວ *"ໜາວໃຈສະທ້ານ ໜາວສັ່ນສະເທືອນ"* ຈັ່ງແມ່ນຖືກແທ້ໆ.

ທຳມະຊາດແຂວງຊຽງຂວາງ ເໝືອນ "ແດນວິມານ"

ບົນເສັ້ນທາງໄປແຂວງຊຽງຂວາງ ຕົ້ນໄມ້ຂຽວ ສົດ, ພູຜາຫຼືບລັ່ນ ຊັບຊ້ອນ ຂ້າພະເຈົ້າພັນລະນາບໍ່ອອກໄດ້ແຕ່ເຮັດປາກອອມເຂົ້າ ແລ້ວກໍປ່ອຍສຽງອອກມາ "ອູຍ!" (ຂ້າພະເຈົ້າເປັນຄົນ ມ.ສອງຄອນ ຂ.ສະຫວັນນະເຂດ ທາງເມືອບ້ານຂອງຂ້າພະເຈົ້າ ມັນຄົນລະເລື່ອງກັນເລີຍ). ຕາມທົ່ງນາມີເຂົ້າເຫຼືອງ ເຮືອງເຮື່ອ ແລະມີບາງໄຮ່ ເພິ່ນກໍກ່ຽວແລ້ວນຳມາເຮັດເປັນກອງ ທີ່ຂ້າພະເຈົ້າບໍ່ຄຸ້ນຕາອີກນັ້ນແຫຼະ.





ຮອດໂພນສະຫວັນ 8:00 ໂມງແລງ ແວ່ເຮືອນ ເອື້ອຍພູວອນ ດາລາແສນ, ເພິ່ນຕຽມເຝີເປັດໄວ້ເປັນອາຫານແລງ (ຕາມປ້າຄຳອອນ ສັ່ງ) ແຕ່ວ່າກ່ອນ ຈະກິນຂ້າພະເຈົ້າໄດ້ຂໍອະນຸຍາດນຳເອື້ອຍພູວອນ ເພື່ອຂໍຊຳຮະຮ່າງກາຍ ແກ້ງ້ວງແກ້ວິນກ່ອນ (ອາບນ້ຳເຢັນບໍ່ໄດ້ເລີຍ) ແມ່ນແຕ່ລ້າງມືກໍຍັງສະທ້ານຫົວໃຈແລ້ວ ເອື້ອຍພູວອນ ຈຶ່ງເປີດນ້ຳອຸ່ນໃຫ້, ອາບນ້ຳແລ້ວ ຂ້າພະເຈົ້າຮູ້ສຶກດີຂຶ້ນຫຼາຍ ແລ້ວກໍມານັ່ງກິນເຝີເປັດຖ້ວຍບັກໃຫຍ່ທີ່ເພິ່ນຕຽມໄວ້ໃຫ້ ແລະມີຕ່ອນເປັດຊາມນ້ອຍໜຶ່ງ (ໃຫຍ່ກວ່າຖ້ວຍ) ທີ່ສັບໄວ້ໃຫ້ເຕີມເອົາເອງຕາມອັດທະຍາໄສ. (ເອື້ອຍພູວອນ ດາລາແສນ ເພິ່ນຢູ່ກັບຕູ້ຍ່າ ແລະລູກ ສຳລັບສາມີຂອງເພິ່ນ ທ່ານ ຄອນສະໝຸດ ບຸນແພງພັນ ແມ່ນໄປຮັບໜ້າທີ່ເປັນເຈົ້າເມືອງຢູ່ເມືອງໝອກ) ໃນມື້ທີ່ພວກເຮົາມາແວ່ຢາມ ເຮືອນເພິ່ນນີ້ ເພິ່ນກໍມີແຂກຜູ້ໜຶ່ງກ່ອນແລ້ວ ນັ້ນກໍຄືປ້າຄຳຈັນ ສໍລາງກູນ ທີ່ເດີນທາງມາຈາກນະຄອນຫຼວງວຽງຈັນ.

ຫຼັງຈາກຮຽບຮ້ອຍທຸກຢ່າງ ກໍອຳລາ ຕູ້ຍ່າ ເອື້ອຍພູວອນ ແລ້ວເດີນທາງຕໍ່ໄປສູ່ບ້ານໝັຽງນາດອນ, ອອກຈາກໂພນສະຫວັນ ປ້າຄຳຈັນ ກໍໄດ້ໄປນຳຄະນະຂອງພວກເຮົາ. ປ້າຄຳຈັນ ກັບ ປ້າຄຳອອນ ລົມກັນໄປສຸດທາງ ເລີຍກາຍສາມແຍກໜອງເປັດ ເຊິ່ງເປັນທາງແວ່ເຂົ້າບ້ານໝັຽງນາດອນ ກາຍໄປຈົນເຫັນປ້າຍເມືອງຄຳ, ຂ້າພະເຈົ້າ ແລະຜູ້ອື່ນໆ ບໍ່ຮູ້ທາງກໍເລີຍນອນເສີຍ.

ຮອດບ້ານໝັຽງນາດອນ ເກືອບທ່ຽງຄືນ ພຽງແຕ່ທັກທາຍ ເຈົ້າຂອງເຮືອນ ພໍ່ເຖົ້າຊຽງວັນນາ, ອ້າຍບົວພາ ແລະເອື້ອຍຄຳສີ ໜ້ອຍໜຶ່ງ ກໍເຂົ້າຜ້າຫົ່ມຜູ້ລະສອງຜືນ ເຊິ່ງເອື້ອຍຄຳສີ ໄດ້ ຕຽມໄວ້ໃຫ້ແລ້ວ.

**ວັນທີ 5/11/2010 (ອາກາດໜາວເຢັນ ມີແຕ່ໝອກ)**

ເຈົ້າຂອງເຮືອນແລະແຂກ (ນອກຈາກປ້າຄຳອອນ ກັບປ້າຄຳຈັນ) ໄດ້ທຳຄວາມຮູ້ຈັກເຊິ່ງກັນແລະກັນ ແລ້ວກໍໄດ້ຟ້າວນັ່ງລົດກັບອອກມາບ້ານຄັງວຽງ ເຊິ່ງເປັນບ່ອນທີ່ປ້າຄຳເມິງ ວໍລະຈິດ ຈະໄດ້ມອບໂຮງຮຽນທີ່ປ້າເຕົ້າໂຮມທຶນຊ່ວຍສ້າງ, ມອບໃຫ້ແກ່ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອນຳໃຊ້ເຂົ້າໃນການສຶກສາຮ່ຳຮຽນຂອງລູກຫຼານ.







## ວັນທີ 6/11/2010

ຕອນເຊົ້າ ຖືວ່າອ່າວມີເວລາແດ່ ອ້າຍທົງເຫີນ ກໍເລີຍໄດ້ມີໂອກາດນັ່ງລົມ ກັບພໍ່ເຖົ້າຊຽງວັນນາ ແລະກໍຮູ້ສຶກວ່າຖືກ ຊະຕາກັນອີກດ້ວຍ, ພາເຂົ້າເຊົ້າຕັ້ງຢູ່ຂ້າງ ເຕົາໄຟ ທຸກຄົນມານັ່ງອ້ອມພາເຂົ້າ ເຊິ່ງມີ ປີ້ງປາ, ແກງປາ ທີ່ອ້າຍບົວພາ ໄປເອົາຢູ່ນາມາຕັ້ງແຕ່ 4-5 ໂມງເຊົ້າພຸ້ນ, ແກງໜໍ່ສັນ ສົດໆ ທີ່ປ້າຄຳອອນ ຊວນໄປຊື້ເອົາຢູ່ຕະຫຼາດຄັງວຽງ ເປັນຕະຫຼາດອາຫານພື້ນບ້ານ ຂາຍແຕ່ 5-7 ໂມງເຊົ້າທໍ່ນັ້ນ ກາຍເວລານີ້ໄປກໍຈະບໍ່ມີຫຍັງ.

ເວລາ 10:00ໂມງ ອຳລາກັບພໍ່ເຖົ້າຊຽງວັນນາ ເອື້ອຍຄຳສີ ແລະອ້າຍບົວພາ, ໄປຢ້ຽມຢາມ ແລະເຮັດວຽກຢູ່ໂຮງຮຽນ ມັດທະຍົມສົມບູນໜອງເປັດ (ໂດຍຖືກມອບໝາຍຈາກ ປ້າຄຳເມິງ ວໍລະຈິດ, ເພາະວ່າເພິ່ນມີວຽກ ກັບວຽງຈັນດ່ວນ ກໍເລີຍເຫຼືອແຕ່ຄະນະພວກເຮົາ), ທາງໂຮງຮຽນໄດ້ຈັດພິທີຕ້ອນຮັບເປັນຢ່າງດີ, ພົບປະໂອ້ລົມກັບຄູອາຈານຂອງໂຮງຮຽນ ຢ້ຽມຊົມຫ້ອງຮຽນແຕ່ລະຫ້ອງ ແລ້ວທາງຄູອາຈານກໍໄດ້ຈັດພິທີບາສີໃຫ້ແກ່ພວກເຮົານຳອີກ, ຮ່ວມພາເຂົ້າທ່ຽງນຳກັນ ຈົນເລີຍຮອດບ່າຍແກ່ໆຈຶ່ງໄດ້ອຳລາພາຈາກກັນດ້ວຍຄວາມອົບອຸ່ນໃນຈິດໃຈ.









ອອກຈາກໂຮງຮຽນມັດທະຍົມ ສົມບູນ ບ້ານໜອງເປັດ, ປ້າຄຳອອນ ບອກວ່າ *"ມາຊຽງຂວາງ ຖ້າບໍ່ຮອດທົ່ງໄຫຫີນ ກໍຢ່າຖືວ່າມາຊຽງຂວາງເລີຍ ເປັນຕົ້ນແມ່ນ ນາງດວງມາລາ ທີ່ບໍ່ເຄີຍມາຈັກເທື່ອ"*, ດັ່ງນັ້ນ ປ້າຄຳອອນ ກໍເລີຍ ຈັດລາຍການນຳທ່ຽວທົ່ງໄຫຫີນໃຫ້ແກ່ຂ້າພະເຈົ້າເປັນພິເສດ.



ກັບຈາກທົ່ງໄຫຫີນ ພໍດີຄ່ຳ ເຂົ້າໂພນສະຫວັນ ພັກຢູ່ເຮືອນ ເອື້ອຍ ພູອອນ ໜຶ່ງຄືນ ຕື່ນເຊົ້າມາ ທ່ານ ພູມີ ທິບພະວອນ ມາຫາປ້າຄຳອອນ, ເພິ່ນວ່າຈະພາໄປປັ້ນເຂົ້າ ທີ່ຮ້ານເຝີແຊບ ຊຽງຂວາງ ແຕ່ອ້າຍສີສົມພູ ບັນທະພອນ ແລະພັນລະຍາຂອງເພິ່ນຄື ເອື້ອຍຄຳພັນ ໄດ້ຕຽມອາຫານເຊົ້າໄວ້ແລ້ວກໍເລີຍໄປກິນເຂົ້າທີ່ເຮືອນເພິ່ນ ໂດຍມີຍາດຕິພີ່ນ້ອງ ຂອງເພິ່ນມາຮ່ວມນຳ, ໂອ້ລົມກັນດ້ວຍໄມຕີຈິດມິດ ຕະພາບເປັນກັນເອງ ເຮັດໃຫ້ບັນຍາກາດອາຫານເຊົ້າແຊບຊ້ອຍ ແລະ ອົບອຸ່ນເປັນພິເສດ, ແລ້ວພວກເຮົາກໍເດີນທາງກັບນະຄອນຫຼວງວຽງຈັນໃນມື້ນັ້ນ ( 7/11/2010 ).







**ຄັ້ງທີ 2: ອອກເດີນທາງ ວັນທີ 20/10/2011,** ຮ່ວມເດີນທາງກໍມີ ປ້າ ຄໍາອອນ ເພັດດາວເຮືອງ, ອ້າຍຫົງເຫີນ, ຂ້າພະເຈົ້າ ແລະທ້າວ ສິນ ( ໄຊເຟີລົດ).

ຮອດໂພນສະຫວັນ 6:30 ໂມງແລງ ຂ້າພະເຈົ້າກໍເຊັ່ນເຄີຍເມົາທາງຄົດທາງໂຄ້ງອີກ, ແວ່ເຮືອນ ເອື້ອຍຄໍາພັນ ເພິ່ນບອກໃຫ້ອາບນໍ້າດ່ວນ ເພາະຈະໄດ້ໄປງານດອງນໍາກັນ (ພໍດີນ້ອງຊາຍຂອງອ້າຍສີສົມພູແຕ່ງດອງ) ອາກາດໃນມື້ນີ້ບໍ່ຕ່າງຫຍັງກັບຄັ້ງທໍາອິດທີ່ໄປເມື່ອປີທີ່ແລ້ວ ໜາວສະທ້ານຄືເກົ່າ ຕ້ອງອາໄສນໍ້າອຸ່ນ (ເກືອບຮ້ອນ) ຈຶ່ງເຮັດໃຫ້ຂ້າພະເຈົ້າຟື້ນຈາກອາການໜາວ ແລະເມົາທາງໂຄ້ງ ແລ້ວກໍຟ້າວໄປຮ່ວມງານດອງ, ບໍ່ໄດ້ຢູ່ດົນປານໃດກິນເຂົ້າແລ້ວກໍຂຶ້ນລົດໄປບ້ານໜ້ຽງນາດອນ ເພາະວຽກຕົ້ນຕໍແມ່ນຢູ່ບ້ານຄັງວຽງອິນແປງ. ຄັ້ງນີ້ບໍ່ໄດ້ຫຼົງທາງແວ່ ເພາະວ່າໄຊເຟີລົດຈື່ທາງເອງແລ້ວ ບໍ່ຕ້ອງໄດ້ບອກ.



ຄັງວຽງ ກັບ ບ້ານໜ້ຽງນາດອນ ແມ່ນແວ່ເຂົ້າທາງດຽວກັນຄື: ແວ່ຢູ່ສາມແຍກໜອງເປັດ (ກມ ທີ. 27 ທາງເລກ 7) ເຂົ້າໄປປະມານ 10 ກມ. ແລ້ວແວ່ເບື້ອງຂວາມື ທີ່ບ້ານໄຜ່ຫງໍາ ເຂົ້າໄປປະມານ 3 ຫຼັກ ເປັນບ້ານໜ້ຽງນາດອນ,ສໍາລັບຄັງວຽງແມ່ນຕົງໄປເລີຍຈາກທາງແວ່ບ້ານໜ້ຽງນາດອນກໍປະມານ 3ກມ ເຊັ່ນກັນ, ໃນມື້ນີ້ເຮົາຍັງບໍ່ແວ່ໄປບ້ານໜ້ຽງແຕ່ຕົງໄປບ້ານຄັງວຽງກ່ອນ ເພື່ອພົບກັບ ປ້າຄໍາເມົງ ເອົາເອກະສານໄປໃຫ້ເພິ່ນ ພ້ອມທັງເອົາແຜນງານລະອຽດຈາກເພິ່ນຕື່ມ. ຈາກນັ້ນຈຶ່ງກັບຄືນມາພັກແຮມຢູ່ບ້ານໜ້ຽງນາດອນ ເຮືອນພໍ່ເຖົ້າຊຽງວັນນາ(ອ້າຍຂອງ ລຸງຄໍາສິງ ເພັດດາວເຮືອງ ຜູ້ເປັນສາມີຂອງປ້າຄໍາອອນ.)



**ວັນທີ 21/10/2011**

ຕື່ນແຕ່ເຊົ້າໄປຕະຫຼາດຄັງວຽງ ຍ່າງຊົມຈັບຈ່າຍສະບາຍໃຈ "ລາຄາບໍ່ແພງ" ສໍາລັບ

ຂ້າພະເຈົ້າແລ້ວແມ່ນເລາະເບິ່ງ ແລະຂໍຊີມອາຫານທ້ອງຖິ່ນ ເພາະມີຫຼາຍອັນແຕກຕ່າງຈາກທ້ອງຖິ່ນຂອງຂ້າພະເຈົ້າ.

**ວັນທີ 22/10/2011**

8:00ໂມງເຊົ້າ ເປີດພິທີມອບ-ຮັບ ໂຄງການກໍ່ສ້າງ-ປັບປຸງ ໂຮງຮຽນມັດທະຍົມອິນແປງໄລຍະ III ເຊິ່ງມີ: ຫໍພັກຄູ, ຫໍສະໝຸດ, ສະໂມສອນໃຫຍ່, ພ້ອມທັງເງິນອຸປະຖໍາໃຫ້ແກ່ຄູອາຈານ ເພື່ອນໍາໃຊ້ເຂົ້າໃນການໄປທັດສະນະສຶກສານອກສະຖານທີ່, ທັງໝົດເຫຼົ່ານີ້ ກໍແມ່ນປ້າຄໍາເມິງ ວໍລະຈິດ ເຊິ່ງເພິ່ນໄດ້ຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການ ຂອງພໍ່ແມ່ພີ່ນ້ອງ, ອໍານາດການປົກຄອງ, ຄູອາຈານ ແລະລູກຫຼານນັກຮຽນທີ່ຍັງຕ້ອງການສິ່ງອໍານວຍຄວາມສະດວກຕ່າງໆໃນການຮໍ່າຮຽນ ປ້າຈຶ່ງໄດ້ເຕົ້າໂຮມທຶນມາຊ່ວຍກໍ່ສ້າງປັບປຸງເຖິງ 3 ຄັ້ງ ຈຶ່ງຖືວ່າສົມບູນແບບ ເຊິ່ງມີ: ໂຮງຮຽນ, ຫໍພັກຄູ, ຫໍສະໝຸດ, ສະໂມສອນ, ເດີ່ນກິລາ ແລະອຸປະກອນຮັບໃຊ້ ເຊັ່ນ: ຄອມພິວເຕີ, ໂຕະ ຕັ່ງ, ເຄື່ອງເສບຊຸດກອງດຸລິຍາງ ແລະອື່ນໆອີກ...

















**ວັນທີ 23/10/2011**

ຕື່ນຂຶ້ນມາພົບກັບຄວາມສົດຊື່ນ ຫອມ ເຢັນຂອງນ້ຳໝອກຍາມເຊົ້າ, ມື້ນີ້ ພາລະກິດຂອງພວກເຮົາ ແມ່ນຢູ່ທີ່ບ້ານ ແລທອງ, ຖືກເຊີນປັ້ນເຂົ້າເຊົ້າຈາກ ທ່ານ ທອງວັນ ນາຍບ້ານ ບ້ານໝ້ຽງ, ພວກເຮົາ ຊີມເຂົ້າໄກ່ນ້ອຍ ທີ່ກຳລັງສຸກເຫຼືອງຢູ່ໜ້າ ເຮືອນເພິ່ນກ່ອນຈະທັງກິນເຂົ້າທັງລົມກັນ ເລື່ອງຄວາມສຳພັນສອງບ້ານ ຄື: ບ້ານ ໝ້ຽງນາດອນ ແລະ ບ້ານແລທອງ ເຊິ່ງ ສອງບ້ານນີ້ຢູ່ຫ່າງກັນຕັ້ງວ່າ 30 ກວ່າ ກິໂລແມັດ ແຕ່ມີປະເພນີອັນໜຶ່ງທີ່ບໍ່ເຄີຍ ຈືດຈາງນຳກັນ ນັ້ນກໍຄື ການຂອດຮັກ ຂອດສານກັນທັງສອງບ້ານ ເຊິ່ງ 3 ປີໃດ ຈະຈັດຂຶ້ນເທື່ອໜຶ່ງ, ດັ່ງນັ້ນ ພວກເຮົາຈຶ່ງ ຕ້ອງນຳຫາຂໍ້ມູນເລື່ອງນີ້ໃຫ້ເຖິງທີ່ ເຊິ່ງ ນຳ ທາງສູ່ບ້ານ ແລທອງ ກໍມີທ່ານ ທອງວັນ ນາຍບ້ານ ບ້ານໝ້ຽງ ແລະ ທ່ານ ວັນສີ ຫົວໜ້າກຸ່ມເຂດຄັງວຽງ.

**ວັນທີ 24/10/2011**

ມຸ່ງໜ້າສູ່ຍອດງື່ມ (ຍອດນ້ຳງື່ມ ທີ່ໄຫຼໄປແຕກກິ່ງສາຂາ ແລະ ກາຍເປັນ ເຂື່ອນໄຟຟ້ານ້ຳງື່ມ ຢູ່ທ່າລາດນັ້ນເອງ), ຊ່ວງໄລຍະເດີນທາງ ປ້າຄຳອອນ ໄດ້ໂທ ລະສັບຫາເພື່ອນເກົ່າເພິ່ນ ນັ້ນກໍຄື ທ່ານ ພູມີ ທິບພະວອນ ເພິ່ນລົມກັນດ້ວຍ ຄວາມດີອົກດີໃຈ ແລ້ວທ່ານ ພູມີ ພ້ອມ ພັນລະຍາ ກໍໄດ້ເຊີນປ້າ ແລະທຸກໆຄົນ ກິນເຂົ້າທ່ຽງນຳຢູ່ທີ່ສວນໃຫຍ່ຂອງເພິ່ນ

ແຕ່ປ້າບໍ່ຮູ້ບ່ອນສວນເພິ່ນ ຈຶ່ງໄດ້ໄປສູ່ເອົາ ເອື້ອຍຄຳພັນ ກັບ ອ້າຍສີສົມພູ ໄປນຳກັນ, ໃນສວນໃຫຍ່ນັ້ນ ເພິ່ນໄດ້ເຮັດບ່ອນລ້ຽງແກະ, ລ້ຽງໄກ່ເນື້ອດຳ ດູກດຳ, ປູກເຫັດຫອມ, ປູກຜັກ ແລະອື່ນໆ. ອາຫານທ່ຽງໃນມື້ນີ້ ເພິ່ນກໍໄດ້ນຳເອົາຊີ້ນແກະສົດໆຈາກຟາມນີ້ເອງມາປີ້ງ, ຕົ້ມໂພ່ນເຄື່ອງໃນແກະ, ຕຸນແກະກັບຫົວເຜືອກ, ຂົ້ວເຫັດຫອມ ແລະສົ້ມຜັກກາດສົດໆຈາກສວນ, ບັນຍາກາດເບີກບານດ້ວຍການເລົ່າເລື່ອງຂອງເພື່ອນເກົ່າທີ່ພົບກັນອີກຄັ້ງ ເລົ່າເຖິງສະໄໝຮຽນໜັງສືນຳກັນ, ອາກາດເຢັນສະບາຍ ລົມພັດຕະຫຼອດຍາມ ຈົນທ່ານ ພູມີ ເວົ້າວ່າ ເທວະດາຢູ່ແຂວງຊຽງຂວາງ ໃຈກວ້າງໃຈດີ ເປີດແອໃຫ້ເຢັນກັນທົ່ວແຂວງເລີຍ, ອາຫານແມ່ນແຊບແບບສົດໆ ປ້າ ຄຳອອນ ເວົ້າວ່າ *"ມີແຕ່ແນວແຊບໆ ຂໍໃສ່ຖົງເມືອວຽງຈັນໄດ້ບໍ່ ?"*. ທ່ານ ພູມີ ຕອບວ່າ *"ຖ້າຢາກກິນ ກໍມາກິນໄດ້ ແຕ່ຢູ່ບ່ອນນີ້ ຢາກໄດ້ເອົາໄປບ່ອນອື່ນ "ຢ່າຝັນ"* ເຮັດໃຫ້ມີສຽງຫົວດັງຂຶ້ນຢ່າງ ພ້ອມພຽງກັນປານນັດເອົາໄວ້.







ຫຼັງຈາກໄດ້ເວລາ ພໍສົມຄວນ ພວກເຮົາກໍຂອບອົກຂອບໃຈນຳທ່ານ ພູມີ ພ້ອມພັນລະຍາ ແລ້ວກໍມຸ່ງໜ້າສູ່ໂຮງໝໍ 101 ວິລະຊົນ ເພື່ອໄປເບິ່ງໂຄງການສ້າງຕຶກພິເສດ ແລະຕຶກປະສູດ ທີ່ປ້າຄຳເມີງ ວໍລະຈິດ ໄດ້ເຕົ້າໂຮມທຶນຮອນຈາກຍາດມິດ ເພື່ອນສະຫາຍ ມາຊ່ວຍສ້າງຕາມຄວາມຮຽກຮ້ອງ ຕ້ອງການ ຂອງທາງໂຮງໝໍ ເຊິ່ງດຳເນີນການກໍ່ສ້າງໄປໄດ້ໄລຍະໜຶ່ງແລ້ວ, ນຳພາເບິ່ງການກໍ່ສ້າງໂດຍທ່ານພັນໂທ ດຣ. ໂຊງພະຈັນ ພິລາວົງ







ຮອງອຳນວຍການພາຍນອກຂອງໂຮງໝໍ 101 ວິລະຊົນ (ເພິ່ນກັບອ້າຍຫົງເຫີນ ຊ້ຳພັດ ເປັນເພື່ອນເກົ່າຮ່ວມໂຮງຮຽນດຽວກັນສະໄໝ ຢູ່ທີ່ເມືອງວຽງໄຊ ແຂວງຫົວພັນ ຕັ້ງແຕ່ປີ 1976).



**ເຊົ້າວັນທີ 25/10/2011**

ລາພໍ່ເຖົ້າຊຽງວັນນາ ເອື້ອຍຄຳສີ ແລະອ້າຍບົວພາ, ອອກຈາກບ້ານໝຽງ, ມຸ່ງໜ້າສູ່ອິນແປງຄັງວຽງ ແລະ ປັ້ນເຂົ້າເຊົ້າຮ່ວມກັບ ປ້າຄຳເມີງ ທີ່ເຮືອນຂອງເພິ່ນ, ເດີນທາງສູ່ບ້ານຊອຍນາຟ້າ ເພື່ອໄປເບິ່ງ ແລະເອົາຂໍ້ມູນຂອງໂຮງຮຽນ ເຊິ່ງເປັນອີກບ່ອນໜຶ່ງທີ່ປ້າຄຳເມີງ ໄດ້ມອບທຶນຮອນໃຫ້ປຸກສ້າງ ແລະປົວແປງອີກເຊັ່ນກັນ.



ບ້ານຊອຍນາຟ້າຫ່າງຈາກອິນແປງຄັງວຽງປະມານສິບກວ່າຫຼັກ, ນຳທາງໄປໂດຍປ້າຄຳເມີງເອງ ເຊິ່ງມີທ້າວ ນຸ່ຍ ເປັນຜູ້ຂັບລົດ ແລະມີນ້າດອກແກ້ວ ນັ່ງລົດໄປນຳເພິ່ນ ຕິດຕາມດ້ວຍລົດຂອງທີມງານພວກເຮົາ. ຫຼັງຈາກແລ້ວວຽກຢູ່ໂຮງຮຽນກໍເດີນທາງກັບນະຄອນຫຼວງວຽງຈັນເລີຍ.







ມາຮອດປີ 2012 ນີ້ ໂຄງການກໍ່ສ້າງຕຶກພິເສດ, ຕຶກປະສູດ ຂອງໂຮງໝໍ 101 ວິລະຊົນ ແຂວງຊຽງຂວາງ ແລະ ໂຮງຮຽນບ້ານຊອຍນາຟ້າ ທີ່ປ້າຄຳເມິງ ວໍລະຈິດ ພ້ອມຍາດຕິພີ່ນ້ອງ ເພື່ອນມິດສະຫາຍ ນັກທຸລະກິດທຸກຄົນໄດ້ສົມທົບທຶນ ກໍ່ສ້າງນັ້ນ ແມ່ນໄດ້ສຳເລັດເປັນທີ່ຮຽບຮ້ອຍແລ້ວ ພ້ອມຈັດພິທີມອບ-ຮັບຢ່າງເປັນ ທາງການໃນວັນທີ 27/7/2012 ແລະ 29/7/2012.

ທັງໝົດເຫຼົ່ານີ້ ທີ່ເຮັດໃຫ້ຂ້າພະເຈົ້າໄດ້ມີໂອກາດ ກໍດ້ວຍໄດ້ຮ່ວມເຮັດວຽກ ນຳ ປ້າຄຳອອນ ແລະ ປ້າຄຳເມິງ ແລ້ວນຳພາໃຫ້ເຫັນຫຼາຍບ່ອນ, ໄດ້ຮູ້ຫຼາຍຄົນ....

*ຂໍຂອບໃຈນຳປ້າຄຳເມິງ ວໍລະຈິດ*
*ປ້າຄຳອອນ ເພັດດາວເຮືອງ*
*ແລະຂໍຂອບໃຈນຳທຸກໆ ຄົນ...*
*ທີ່ນຳພາໃຫ້ຂ້າພະເຈົ້າໄດ້ພົບເຫັນ*
*ພູຜາ ທົ່ງນາ ອາກາດ*
*ຮອຍຍິ້ມ ແລະນ້ຳໃຈ...*
*ເຫຼົ່ານີ້ທີ່ຊຽງຂວາງແດນງາມ*



24/vn
ห้ามจำหน่าย





# ກາງນາ

### ໂດຍ: ດວງຈຳປາ

| | | |
|---|---|---|
| ແນມທົ່ງ | ນາບ້ານນ້ອງ | ເຂົ້າອ່ອນພວມຂຽວ |
| | ລົມແລງພັດ | ຕ່ອຍຕີເຟືອນຟື້ນ |
| ຂຽວອ່ອນ | ຂຽວໃບເຂົ້າ | ລີລານວຍນາດ |
| ເດຍລະ | ດາດທົ່ງກວ້າງ | ຄອຍອ້າຍ ກ່ຽວນຳ |

| | | | |
|---|---|---|---|
| ເຊີນ ເຢີ | ມາຢ່ອງຢ້ຽມ | ບ້ານປ່າຂາດອນ ນ້ອງນີ້ | |
| ບໍ່ຫ່ອນ | ເຄືອງຄຳອຶດ | ສຳຊິກິນ ລົງທ້ອງ | |
| ແນມວ່າ | ມາແປງສ້າງ | ກະສິກຳ ເຕີບໃຫຍ່ | |
| ເຂົ້າຊິຕື່ມໝາ | ນາຊິຕື່ມກວ້າງ | ຍາມໄດ້ພັດທະນາ | ພີ່ເອີຍ. |





# ຈຳປາມາລາລາວ

ໂດຍ: ຄຳອອນ ເພັດດາວເຮືອງ

ຈຳປາ ເປັນດອກໄມ້ ປະຈຳຊາດລາວເຮົາ
ຈຳປາ ເປັນມາລາຫອມ ຄູ່ລາວແຕ່ນານແລ້ວ
ຈຳປາ ເປັນມາລາແກ້ວ ແນວຫອມບໍ່ເຫັຍກິ່ນ
ຈຳປາ ເກີດຄູ່ດິນລ້ານຊ້າງຄຽງຂ້າງຊາດລາວ
ນີ້ແລ້ວ!

ຫອມກິ່ນ ຈຳປານີ້ ເປັນທີ່ຊວນຊົມ
ຫອມກິ່ນ ຈຳປາທົບ ອ່ອນລະມຸນຊວນຊຶ້ງ
ຫອມກິ່ນ ຈຳປາເທົ້າ ນານແສນນານ ບໍ່ເຫັຍກິ່ນ
ຫອມກິ່ນ ຈຳປາແສນຊາບຊຶ້ງ ບໍ່ມີມື້ຊິຈືດຈາງ ໄດ້ແລ້ວ!



ຈຳປາ ປຽບດັ່ງນາງນາດນ້ອງ ຜູ້ຜຸດຜ່ອງສາວລາວ
ຈຳປາ ຂາວ ເຫຼືອງ ບົວ ແດງ ກໍປຽບປຸນພົງເຊື້ອ
ຈຳປາ ເໜືອ ກາງ ໃຕ້ ເໝືອນດວງໃຈທຸກຊົນເຜົ່າ
ຈຳປາ ບານອາບເອ້ ສະຖິດໝັ້ນຄູ່ລາວ ນີ້ແລ້ວ!

ເວົ້າເຖິງດວງດອກໄມ້ ຫ້າກີບຈຳປາຫອມ
ເໝືອນດັ່ງຄົນລາວໄປ ຢູ່ທົ່ວໂລກາກວ້າງ
ດ້ວຍເຫດຜົນຫຼາຍດ້ານ ກະຈາຍໄປຫ້າທະວີບ
ແຕ່ກໍຍັງຮັກທໍ່ຫຸ້ມ ຈຳປາກຸ້ມກິ່ນກອມ ນີ້ແລ້ວ!

ຂໍຊັກຊວນເຊີດໄວ້ ຊູຊໍ່ຈຳປາລາວ
ເໝືອນດັ່ງເດືອນກັບດາວ ຄູ່ຄຽງນະພາກວ້າງ
ປວງປະຊາຊົນເຊື້ອ ສາມັກຄີຮັກທໍ່
ພາກັນຮັກສາຮາກ ແລະເຫງົ້າ ກໍກ້ານກິ່ງໃບ ໄວ້ເນີ!.



# ຕົ້ນໂພ ແລະ ລະຄັງ

## ໂດຍ: ທະນົງສັກ ວົງສັກດາ

ໂຮງຮຽນ ຫຼັງໃໝ່ນີ້ ນາມຊື່ ອິນແປງ
ຊາວຄັງວຽງໂຮມແຮງ ຮ່ວມໃຈກັນສ້າງ
ປ້າຄຳເມີງ ນຳໜ້າ ພາພົນເສີມແຕ່ງ
ແທນບຸນຄຸນເກົ່າຄັ້ງ ຫຼັງນ້ອຍເກົ່າໝອງ

ເປັນກຸສົນຝາກໄວ້ ຈາກຍາດເຫື່ອ ແລະຈິດໃຈ
ກາຍເປັນສາຍຝົນຮຳ ຊຸ່ມເຢັນພູມພື້ນ
ເຊີດຊູເສີມມູນເຊື້ອ ວິລະຊົນຄົນເມືອງແປກ
ປຽບທົ່ງໄຫສະຫງ່າຍັ້ງ ຍືນທ້າແດດຝົນ ແທ້ເນີ...

ໃຫ້ພວກຫຼານໜຸ່ມນ້ອຍ ໄດ້ຊົ້ນຮົ່ມໂພສີ
ມີປັນຍາຄຸນນະທຳ ຊ່ວຍຊົນນະບົດບັ້ນ
ເຫັນໂຮງຮຽນຫຼັງນີ້ ຄືຕົ້ນໂພກົກໃຫຍ່
ມີລະຄັງຫ້ອຍໄວ້ ຕີສົ່ງສຽງປ່າວກ້ອງ
ຜູ້ໃຈກວ້າງພົບແຕ່ບຸນ ແທ້ນາ.





# ລູກສາວພວນຜູ້ປະເສີດ

*ໂດຍ: ສຸຂີ ນໍຣະສິລປ໌*

*ເພິ່ນວ່າ ຄົນໃດ ດຸໝັ່ນພ້ອມ　　　　ພຽນພາກພະຍາຍາມ*
*ເປັນແວ່ນແຍງຊຸມຊົນ　　　　ລູກຫຼານເຫຼັນຫຼ້າ*
*ລຳລຶກບຸນຄຸນລົ້ນ　　　　ມາຕຸພູມເມືອງແມ່*
*ຖິ່ນກຳເນີດເກີດກຳ້　　　　ບໍ່ໄລເວັ້ນຫ່າງໜີ*

*ເພິ່ນວ່າ ກຸສົນໃດມີທຽບເທົ້າ　　　　ຄືອຸທິດການສຶກສາ*
*ປູກຄວາມຫວັງຄວາມຝັນ　　　　ລູກຫຼານພາຍຊ້ອຍ*
*ເປັນຜູ້ນຳວັນໜ້າ　　　　ແພງພວນນ້ອຍໜໍ່*
*ຄົນນັ້ນ ແສນປະເສີດເລີດລຳ້　　　　ຄວນທີ່ເປັນແວ່ນແກ້ວ*
*ໃຫ້ຍໍຍ້ອງເຊີດຊູ　ຊອບແລ້ວ*

*ຍັງມີ　ຍິງໜຶ່ງນັ້ນ　　　　ນາມໜໍ່ຄຳເມິງ (ວໍລະຈິດ)*
*ເປັນແກ່ນຄືງເສົາຫຼັກ　　　　ລູກພວນເສົາຄຳ້*
*ນຳເອົາແສງທວນໄຕ້　　　　ເຍົາວະຊົນຕາມໄຕ່*
*ລູກຫຼານພວນພີ່ນ້ອງ　　　　ເຫັນແລ້ວຊື່ນພະໄທ*
*ຂໍໃຫ້　ຂໍໃຫ້ສົມມາດແມ້ງ　　　　ຄືດັ່ງມະໂນນຶກ*
*ຄວາມດີງາມຄືຄວາມຫອມ　　　　ດັ່ງດອກຄາຍບານແຍ້ມ*
*ຫອມບໍ່ເຫີຍຫາຍສິ້ນ　　　　ມາລາພວນຫອມກິ່ນ*
*ກຸສົນສົນ ທັງຊາດນີ້ ແລະຊາດໜ້າ　　　　ໃຫ້ພຽງພ້ອມຕະຫຼອດການ*
*ແດ່ຖ້ອນ !*

# ອັດສະດົງທີ່ທົ່ງໄຫຫີນ

ໂດຍ: ສຸຂີ ນໍຣະສິລປ໌

* ທ້ອງຟ້າ ທົ່ງໄຫຫີນຍາມນີ້     ສະຫງົບງຽບສຽງປືນ
ບໍ່ມີລະເບີດຄວັນຍົນເບ     ຖອກເທພາຍພື້ນ
ປະຊາຊາວພວນລ້ວນ     ມີຊີວາສຸກຍິ່ງ
ບໍ່ມີໂຈນຕ່າງດ້າວ     ເຜົາບ້ານຈູດເມືອງ

* ນົກແອ່ນບິນເຈີດເຈີ້ຍ     ທວນທິດກະແສລົມ
ອັດສະດົງຍາມແລງ     ອະລ່າມສີແສງຄ້ອຍ
ສັກກຸນາບິນຜ້າຍ     ຄືນຄອນຈອນຄໍ່າ
ພູມພາບຜືນທົ່ງກວ້າງ     ເຫັນແລ້ວຊື່ນມະໂນ

* ຄິດເບິ່ງຄາວກ່ອນກີ້     ລະເບີດທັ່ງເຫລືອ
ຜືນແຜ່ນດິນເມືອງພວນ     ຖືກຈູດເລົາເຜົາກ້ຽງ
ທັງວັດວາເຮືອນຮ້ານ     ປະຊາຊົນມ້າງມຸ່ນ
ເປັນຝຸ່ນຄວັນໄຫງ່ງ້ອງ     ກວມກຸ້ມທົ່ງໄຫ

* ຊັບສິນມູນຄ່າລົ້ນ     ຫາຍວັບໄປກັບຕາ
ປະຊາສັງເວີຍເສີກ     ເຫຍື່ອກະຫາຍຄວາມບ້າ
ປະຊາຊົນຕາຍຖິ້ມ     ຄືສັດສາວາສິ່ງ
ຕາຍບໍລິສຸດທ່ຽງແທ້     ມິເຄີຍຮູ້ເຫດຜົນ

* ຜົນຮ້າຍຍັງພ່ວງທ້າຍ     ລະເບີດຫວ່ານຝັງດິນ
ລູກມິນທັງໂບມບີ     ແຜ່ກະຈາຍພາຍພື້ນ
ອຸປະສັກຂວາງກັ້ນ     ການກະທໍາການກະເສດ
ມີເຫດຮ້າຍບໍ່ເວັ້ນ     ໝາຍມຸ່ງຊິ່ງຊີວາ

* ດຽວນີ້ສິ່ງທີ່ຫຼົງເຫຼືອໄວ້ ຄືຄວາມທຸກປະຊາຊົນ
ຊາກສະຫຼັກຫັກພັງ ວັດວາເຮືອນຮ້ານ
ເຫັນຂຸມຮີຍາວກວ້າງ ການທຳລາຍຂອງລະເບີດ
ເຫັນແຕ່ຕໍກຸ້ນດຸ້ນ ເຫຼືອໄວ້ໃຫ້ຮ່ຳເພິງ

* ໂລກນີ້ຊ່າງໂຫດຮ້າຍ ກັບປະເທດອະນາຖາ
ບໍ່ຫ່ວງຄວາມເປັນຄົນ ມະນຸດເລີຍພໍດີ້
ສິດທິປະຊາຊົນນີ້ ພຽງກັນສະເໝີພາບ
ຂາວດຳໃຫຍ່ແລະນ້ອຍ ສະເໝີດ້ານດັ່ງດຽວ

* ຍ້ອນອຳນາດໂງ່ຈ້າ ໂລບມາກກະຫາຍເສິກ
ເຫັນປະຊາຊົນລາວ ດັ່ງເດຍລະສານລັຽງ
ເລີຍຄິດໄປທາງປື້ນ ກັບການບໍ່ຫາເຫດ
ເຫັນປະເທດນ້ອຍນ້ອຍ ເປັນເປົ້າເຫຍື່ອກະສູນ

* ຂໍໃຫ້ໂລກຈົ່ງໄດ້ ປະນາມຊົ່ວການກະທຳ
ພວກກະຫາຍສົງຄາມ ປ່ວງລະເມີເໝືອນບ້າ
ສາມັກຄີກັນໄວ້ ຫວງແຫນສັນຕິພາບ
ໂລກຈະສຸກຢູ່ຍັ້ງ ຫາຍຮ້ອນຢູ່ກະເສມ ຊອບແລ້ວ!.



# ບົດກະວີ ຈາກທົ່ງນາ

ໂດຍ ຫົງເຫີນ ຂຸນພິທັກ

ຄົນລາວເຮັດນາ ກິນເຂົ້າມາແຕ່ບູຮານະການ ໃນ**ນິທານຂຸນບູລົມ** ຫຼື **ພົງສາວະດານລ້ານຊ້າງ** ວັນນະກຳທີ່ເກົ່າທີ່ສຸດເລື່ອງໜຶ່ງ ມີຄຳກ່າວເປັນ ກາບກອນຕອນໜຶ່ງກ່າວເຖິງການເຮັດໄຮ່ໃສ່ນາວ່າ:

*"ການເມື່ອກ່ອນກໍເປັນດິນເປັນຫຍ້າ ເປັນຟ້າເປັນແຖນ ຜີແລຄົນທຮວ ໄປມາຫາກັນບໍ່ຂາດ ເມື່ອນັ້ນຍັງມີຂຸນໃຫຍ່ 3 ຄົນຜູ້ນຶ່ງ ຊື່ປູ່ລາງເຊີງ ຜູ້ນຶ່ງຊື່ຂຸນເຄັກ ຜູ້ນຶ່ງຊື່ຂຸນຄານ**ຢູ່ສ້າງ ເມືອງລຸ່ມກິນປາ ເຮັດນາເມືອງລຸ່ມກິນເຂົ້າ** ເມື່ອນັ້ນແຖນຈິ່ງ ໃຊ້ໃຫ້ມາກ່າວແກ່ ຄົນທັງຫຼາຍວ່າ ໃນເມືອງລຸ່ມນີ້ **ກິນເຂົ້າໃຫ້ບອກໃຫ້ໝາຍ ກິນແລງກິນງາຍກໍໃຫ້ບອກ ແກ່ແຖນ ໄດ້ກິນຊີ້ນ ກໍໃຫ້ສົ່ງຂາ ໄດ້ກິນປາກໍໃຫ້ສົ່ງຮ້ອຍ.***

*ແຕ່ວ່າຄົນທັງຫຼາຍບໍ່ຟັງຄວາມແຖນຈິ່ງເຮັດໃຫ້ນ້ຳຖ້ວມຫຼວງ ປູ່ລາງເຊີງພ້ອມຂຸນ ທັງສອງຈິ່ງເຮັດແພຂີ່ຂຶ້ນໄປເມືອງແຖນ. ເມື່ອນ້ຳບົກລົງ ປູ່ຈິ່ງຂໍນຳແຖນວ່າ ຕູຂ້ອຍຂໍໄປຢູ່ເມືອງລຸ່ມລຶດລຽງ ເມືອງພຽງພັກຍ່ອມພຸ້ນເຖີ້ນ. ເມື່ອນັ້ນພະຍາແຖນຈິ່ງ ໃຫ້ເອົາລົງມາສົ່ງ ພ້ອມທັງໃຫ້**ຄວາຍເຂົາລູ່ແກ່ເຂົາຈິ່ງເອົາກັນລົງມາຕັ້ງຢູ່ທີ່ນານ້ອຍອ້ອນໜູກໍຫັ້ນແລ. ຕໍ່ມາປູ່ລາງເຊີງກໍສອນເຂົາເຮັດໄຮ່ໄຖນາ ທໍຜ້າທໍສິ້ນລ້ຽງຊີວິດເຂົາ.***

ວິລະກຳໃນວັນນະກຳ ອັນສຸດແສນພິລະອາດຫານຂອງບັນພະບຸລຸດລາວແມ່ນການເລວພະຍາແຖນ ໃນ**ນິທານພະຍາຄັນຄາກ** ເພື່ອໃຫ້ໄດ້ມາຊຶ່ງຝົນເພື່ອເຮັດນາໃນຮີດສິບສອງ ຫາກເອົາປະເພນີທາງພຸດທະສາສະໜາອອກໄປ ປະເພນີອັນຍິ່ງໃຫຍ່ດັ້ງເດີມຂອງຊາວລາວ ກໍແມ່ນປະເພນີຈູດບັ້ງໄຟເພື່ອຂໍຝົນເພື່ອເຮັດນາ. ຄວາມມັ່ງຄັ່ງແລະຄວາມໝັ້ນຄົງຂອງຄອບຄົວ ຂອງຊຸມຊົນ ແລະ ຂອງບ້ານເມືອງ ແລະຂອງເຜົ່າພັນລ້ວນແຕ່ຂຶ້ນກັບຄວາມອຸດົມສົມບູນໃນການເກັບກ່ຽວເຂົ້າ ເພາະເຂົ້າແມ່ນອາຫານຫຼັກຂອງຄົນລາວ. ເຂົ້າແມ່ນສິ່ງທີ່ຂາດບໍ່ໄດ້ ໃນພິທີກຳຕ່າງໆ ທາງຄວາມເຊື່ອບໍ່ວ່າຈະເປັນພິທີກ່ຽວກັບຜີ ຫຼື ພຸດ ໃນນຶ່ງປີຊາວລາວມີປະເພນີພິທີກຳກ່ຽວກັບເຂົ້າ ເກືອບທຸກເດືອນ ເມື່ອໄດ້ເຂົ້າກໍມີປະເພນີທານເຂົ້າຫຼາຍຄັ້ງເຊັ່ນ: ບຸນຄູນລານ ບຸນເຂົ້າຈີ່ ເຂົ້າປະດັບດິນ ເຂົ້າສະຫຼາກ ນອກນັ້ນ ໃນແຕ່ລະປາງບຸນກໍມີເຂົ້າຕົ້ມ ເຂົ້າໜົມທຸກຄັ້ງ. ພິທີແຫ່ເຂົ້າໃຫຍ່ທີ່ສຸດກໍແມ່ນພິທີແຫ່ເຂົ້າພັນກ້ອນ ໃນບຸນພະເຫວດຫັ້ນແລ.

ດັ່ງນັ້ນຈຶ່ງ ບໍ່ມີຫຍັງໃຫຍ່ຫຼວງໄປກວ່າ **"ເຂົ້າ"** ແລະຜູ້ຜະລິດທຸກສິ່ງທຸກຢ່າງທີ່ກ່າວມານີ້ກໍແມ່ນ **"ຊາວນາ"**. ເວົ້າໃນດ້ານວັນນະຄະດີແລ້ວ ***ຊາວລາວມີ ຄຳຜະຫຍາ ໂຕງໂຕຍ ສຸພາສິດ ກາບກອນ ສຳນວນ*** ທີ່ພັນລະນາເຖິງເຂົ້າ ແລະກ່ຽວກັບເຂົ້າ ມາກມາຍ ແລະມີຢູ່ໃນທຸກໆຂັ້ນຕອນຂອງການຜະລິດ ການນຳໃຊ້ເຂົ້າ ແລະການດຳລົງຊີວິດ ຕົວຢ່າງດັ່ງຕໍ່ໄປນີ້:

## ໄຖນາ (ເຝິກຄວາຍ):

*ຢ່າຫຼໍ່ຮອຍເກົ່າ ຢ່າເລົ່າຄອງເດີມ*
*ໄປຖືກຮ່ອງ ລ່ອງຖືກຮອຍ*
*ເດືອນຫົກໃຫ້ແຕ່ງກ້າ ເດືອນຫ້າໃຫ້ແຕ່ງໄຖ*
*ຍາມເຈົ້າໄຖນາແລ້ວ ຢ່າລືມຄວາຍກັບແອກ*
*ຖືກຫ່າເຂົ້າບາດພ້ອມ ຍັງຊິໂອ້ອ່າວຫາ*

## ເຂົ້າປູກ (ກ້າ)

*ເໝີດກ້າແລ້ວນາ ເໝີດກັນຊາຖິ້ມບັ້ງ*
*ນາດີຍ້ອນກ້າ ພ້າດີຍ້ອນກັ່ນ*
*ນາດີຖາມຫາເຂົ້າປູກ ລູກດີຖາມຫາພໍ່ແມ່*
*ກ້ຽງຮອດໃບ ໃສຮອດກະດູກ*
*ກ້ຽງຮອດເຂົ້າປູກ ກ້ຽງຮອດເຂົ້າປັດລານ*
*ໄດ້ເມຍດີ ປານໄດ້ສິບໄຖຂາງ*
*ໄດ້ເມຍບາງ ຜົວນຸ່ງຜ້າໃໝ່*
*ນາແຮ່ງໃຫຍ່ ກ້າຊໍ້າແຮ່ງເຫຼືອ*

*ໄດ້ເມຍບໍ່ດີ ປານສິບໄຖເຫຼັກ*
*ໄດ້ເມຍປາກເກັກໆ ຜົວນຸ່ງຜ້າພ້ອຍ*
*ນາແຮ່ງນ້ອຍ ກ້າແຮ່ງບໍ່ພໍ*
*ນາໄຮ່ຫຼົ້ງ ປະສົງຫາແຕ່ກ້າອ່ອນ*
*ກ້າແກ່ມີບໍ່ແພ້ ນາຫຼົ້ງບໍ່ປະສົງ*
*ຊາດທີ່ຄວາຍເຫັນກ້າ*
*ກາເຫັນກ້ວຍ ກາຍໜີເສຍເປົ່າເປັນລື*
*ຄັນບໍ່ກິນອີ່ມທ້ອງ ເສຍແລ້ວແມ່ນບໍ່ໄປ*
*ບຸນຫົວບໍ່ເຄີຍຕົກກ້າ*
*ຕົກສາມຕາໄດ້ກ້າສາມໜໍ່*
*ກະຕ່າຍໝໍ້ກິນໄດ້ໜໍ່ດຽວ*
*ເມື່ອຊິແຫງນຄໍຂຶ້ນ ກາງຄືນກໍຟ້າມືດ*
*ເມື່ອຊິຢຶດຢໍ່ຢຽມໜາມງົ້ວຊິຖືກຕີນ*
*ວ່າຊິໄປຂົນເຂົ້າ ໝູຊິງຊິເອີ້ນດ່າ*
*ວ່າຊິໄປຫວ່ານກ້າ ກໍມາແລ້ງຂາດເຂີນ*
*ຄວາຍນ້ອຍຫຍ້ານກິນກ້າ*



## ແຮກນາ

*ປັກກົກນີ້ ນົກຈິບໂຕຕາບອດໃຫ້ບິນໜີ*
*ປັກກົກນີ້ ນົກຈອກໂຕຕາຫວານ ໃຫ້ບິນໜີ*
*ປັກກົກນີ້ ແມງຄາໂຕຮູ້ຮ່ຳກົກເຂົ້າໃຫ້ບິນໜີ*
*ສາມມື້ໃຫ້ມ້າງໜ້າ ຫ້າມື້ໃຫ້ຖ້ວມຄັນ*

## ດຳນາ

*ສິບຕົ້ນຫຼ້າ ບໍ່ທໍ່ຫ້າຫົວປີ*
*ດຳນາຫຼ້າຫົວປີບໍ່ທັນເພິ່ນ*
*ກ້າກໍບັ້ງ ຄວາຍເຖົ້າກໍໂຊ*
*ດຳຖີ່ເອົາກ່າງ ດຳຫ່າງເອົາຮວງ*
*ເຊື້ອເຂົ້າກ່ຳ ເອົາໄວ້ດຳໜອງ*

## ນາງາມ:

*ນາດີຍ້ອນກ້າ   ພ້າດີຍ້ອນກັ່ນ*
*ນາດີຍ້ອນກ້າ   ພ້າເຂົ້າຍ້ອນຫີນຊາ*
*ນາດີຍ້ອນຄັນ ໝູມັນຍ້ອນຜູ້ເຈົ້າມັນໝັ່ນ*
*ນາດີຍ້ອນຝຸ່ນ ບ້ານອຸ່ນຍ້ອນບ່າວ-ສາວຫຼາຍ*
*ຄຳທໍ່ຫົວໝາ ບໍ່ທໍ່ນາຕີນບ້ານ*

## ກ່ຽວເຂົ້າ

*ສາວບ້ານອື່ນຕາຍເປັນເຂົ້າ*
*ຂຽວຄືເຫົາອ້າຍບໍ່ກົ້ມໜ້າກ່ຽວ*
*ສາວບ້ານ...ຕາຍເປັນເຂົ້າໝາກກ້າ*
*ແກມຫຍ້າຊິຄ່ອຍເລັ້ມ*
*ນາເຂີນຫ້ວຍ  ຝົນບໍ່ຮວາຍກໍແລ້ງເປົ່າ*
*ໄດ້ແຕ່ເຂົ້າໝາກກ້າແກມຫຍ້າໄດ້ຄ່ອຍເລັ້ມ*

## ເຂົ້າຂຶ້ນເລົ້າ

*ທຸກບໍ່ມີເສື້ອຜ້າ ຝາເຮືອນດີພໍລີ້ຢູ່*
*ທຸກບໍ່ມີເຂົ້າຢູ່ທ້ອງນອນລີ້ຢູ່ບໍ່ເປັນ*
*ລີງກັງມາພໍ້ເຂົ້າ   ສະຫງວນກິນຟ້າວຟັ່ງ*
*ເຂົາຫາກຫຼຸຫຼັ່ງຟ້າວ ເມືອເລົ້າກ່ອນລີງ ແລນໍ*

## ສູດຂວັນເຂົ້າວ່າ

*ມາເຍີ ຂວັນເອີຍ ເຂົ້າຕຳຢ່າໃຫ້ຫັກ*
*ເຂົ້າສັກກະລັນຢ່າໃຫ້ຟົ້ງ*
*ເຂົ້າຊິກໃສ່ດົ້ງເຈົ້າຢ່າປີວໜີ...*
*ກິນບໍ່ໃຫ້ບົກ ຈົກບໍ່ໃຫ້ລົງ*



## ສູ່ຂວັນເຂົ້າ

ມາເຍີ ນາງເຂົ້າເຈົ້າ (ຈ້າວ) ເຂົ້າໜຽວກໍໃຫ້ມາມື້ນີ້ຕົ້ນຂຽວໆເຂົ້າກໍ່ຕົ້ນຕໍ່າໆ ເຂົ້າໝາກເຂືອ ກໍໃຫ້ມາມື້ນີ້ວັນນີ້ ຮວງເຜືອ ເຂົ້າປ້ອງແອ້ວ ແລເຂົ້າແຂ້ວງູ ສະພູ່ພ້ອມປັດໜີ ຮວງຮີເຂົ້າອື້ວນ້ອຍ ແລະເຂົ້າຂີ້ຄວາຍ ເມັດສວຍເຂົ້າຮວງຊ້າງ ເມັດຂວາງເຂົ້າລວາດທຽນ ລາຍວຽນ ເຂົ້າໝາກແງ່ງ ເຂົາຈຶ່ງແບ່ງໄວ້ໃຫ້ໝູ່ໄທໄກ ກໍໃຫ້ມາສາ ມື້ນີ້ວັນນີ້ ເອົາແຕ່ເຂົ້າກະເຊີງຮວງມຸ່ຍ ອຸ່ຍຮຸ່ຍນັ້ນແມ່ນເຂົ້າດໍແດງ ເມັດແດງນັ້ນ ແມ່ນເຂົ້າເລືອດແຮດ ເມັດແຈດແມ່ນເຂົ້າໜຽວເປັດ ເມັດຖີ່ນັ້ນແມ່ນ ເຂົ້າໝາກກອກ ເມັດນອກເຂົ້າມັນຫອມ ກິນນົວແມ່ນເຂົ້າປາດ ສະພາດພ້ອມເຂົ້າໝາກໂພ ຫອມພາໂລ ເຂົ້າງວງຊ້າງ ເຕັມໄຮ່ ກໍໃຫ້ມາມື້ນີ້ວັນນີ້
....

ເຂົ້າເຕັມເລົ້າ ບໍ່ງເວົ້າກໍຄື
ເຮັດໝົດປີ ໄຟໄໝ້ເລົ້າເຂົ້າ
ຄັນມີເຂົ້າ ມີເຂົ້າມີເຂົ້າ
ຄັນອຶດເຂົ້າອຶດເຂົ້າອຶດເຂົ້າ
ປີນີ້ໂຊກເຈົ້າເຂົ້າ ຂ້າງຂາງເຮືອນເຈົ້າຊິກ່ອງ
ໂຊກເຈົ້າເຂົ້າ ຂາງເລົ້າຊິກ່ອງກາງ
ສິບປີລໍ້າ ຊາວປີລໍ້າ ຈຶ່ງເຫັນໂອງມາຍາມມັ່ງ
ບາດວ່າເຂົ້າຂຶ້ນເລົ້າຈຶ່ງເຫັນເຈົ້າເທື່ອດຽວ

ນັບແຕ່ເດືອນ 3 ຂຶ້ນ 3 ຄ່ຳ ຕາມຈັນທະຣະຄະຕິ (ເດືອນກຸມພາ) ກໍຈະມີພິທີໄຂປະຕູເລົ້າເຂົ້າ (ເຂົ້າທີ່ຊາວນາຂົນຂຶ້ນເລົ້າຂຶ້ນເຍຍແຕ່ປາຍປີທີ່ແລ້ວຈະຖືກອັດໄວ້ ຈົນກວ່າຈະເຖິງມື້ນີ້ຈຶ່ງເປີດປະຕູເລົ້າ ເພື່ອນຳອອກໄປກິນ) ເພື່ອເລີ່ມກິນເຂົ້າໃໝ່ ທັງນີ້ເພາະຕາມຄະຕິຖືວ່າ ມື້ນີ້ເປັນມື້ດີ ພິເສດເປັນມື້ເພັງມື້ເຕັມ ໂດຍກ່າວກັນວ່າ ເປັນມື້ກິນບໍ່ມີປາກນາກບໍ່ມີຮູຂີ້ ໝາກຂາມປ້ອມ ສຸກຫວານ ສາກເຂົ້າເບືອບົ່ງໃບ ຫົວສີໄຄອອກດອກ ຊາວບ້ານ ຈະມີການສູ່ຂວັນເຂົ້າ ກະກຽມອາຫານ ເພື່ອການກິນດື່ມ ຊຸມແຊວມ່ວນຊື່ນ ສະແດງຄວາມຍິນດີໃນການກິນເຂົ້າໃໝ່.

24/VII



ຫ້າມຈຳໜ່າຍ

## ຕໍາເຂົ້າ

ຟັນພືນແຕ່ເຊົ້າ ຝັດເຂົ້າກາງຄືນ ຄະລໍາ
ເຂົ້າເພິ່ນຂາວລູກສາວເພິ່ນໝັ້ນ
ແກງເພິ່ນແຊບປາແດກເພິ່ນນົວ
ຜົວເພິ່ນດີ ເມຍເພິ່ນຊ່າງຍ້ອງ

## ໝ່າເຂົ້າ

ຟັນເຮືອໄວ້ຫຼາຍລໍາແຮທ່າ
ໝ່າເຂົ້າໄວ້ຫຼາຍບ້ານທົ່ວເມືອງ

## ກິນເຂົ້າ

ກິນເຂົ້າກິນປາ  ກິນແລງກິນງາຍ
ພາເຂົ້າພາປາ  ອິ່ມພິມີຜະຫຍາ
ກິນມໍາໆ ບໍ່ຄໍາເບິ່ງທ້ອງ
ກິນຫຼາຍທ້ອງແຕກ ແບກຫຼາຍຫຼັງຫັກ
ຫຍໍ້າເຂົ້າໜຶກ ຈົກເຂົ້າປ້ອນ
ເຮັດກິນຢ່າຄ້ານ ເຂົ້າບ້ານຢ່າອາຍ
ກິນເຂົ້າຜີ ຟັງຄວາມຜີ
ກິນເຂົ້າໂຕໂສຄວາມເພິ່ນ

ຜີເຜດພໍ້ເຂົ້າສາກ ກໍາພ້າຈອບນົມ
ຊີກງົກບໍ່ຖືກຕາ  ໝາກສີດາບໍ່ຖືກແຂ້ວ
ຫົວມັນແກວບໍ່ຖືກປັ້ນເຂົ້າໃຫຍ່

ປາກົດປີ້ງເຕັມພາສັງບໍ່ຍາກ
ສັງມາດະດັ່ນດົ້ນກິນເຂົ້າບ່າຍເກືອ
ຊຸບກະຈາບີ້     ເປັນພໍ່ນາດີກວ່າ
ພໍ່ນາເອື້ອມອີ່ມເຂົ້າ ຊຸບກະຈາເອື້ອມອີ່ມລົມ
ເຂົ້າຂາດແລງແກງຂາດໝໍ້ ຂໍກິນແຕ່ນໍາເພິ່ນ
ຜ້າຊິຫົ່ມແພຊິຕຸ້ມ ຫຍິບຍຸ້ມເຂົ້າໃສ່ກັນ

## ເຂົ້າຕົ້ມ/ຂອງທານ

ເຫັນເຂົ້າຕົ້ມແລ້ວຢາກບວດ
ເຫັນຫວດຂາດແລ້ວຢາກສິກ
ເດືອນສາມຄ້ອຍ   ເຈົ້າຫົວຄອຍປັ້ນເຂົ້າຈີ່
ເຂົ້າຈີ່ບໍ່ທານໍ້າອ້ອຍ  ຈົວນ້ອຍເຊັດນໍ້າຕາ

## ຄໍາສອນ

ເຂົ້າໜີນາ   ປາໜີນໍ້າ
ໝູເຮັດນາ   ໝາກິນເຂົ້າ



*ກິນເຂົ້າໂຕ ໂສຄວາມເພິ່ນ*
*ສິບພໍ່ຄ້າ ມາໄຫວ້ພໍ່ນາ*
*ກິນພວມຮ້ອນ ຟ້ອນພວມເມົາ*
*ເຮັດນາວ່າປີໜ້າ ໄປຄ້າວ່າປີຣີ*
*ໝາຫຼາຍເຈົ້າ ກິນເຂົ້າຫຼາຍເຮືອນ*
*ຊ້າງເຂົ້ານາ ອາດຍາເຂົ້າບ້ານ*
*ຊື້ຄວາຍຍາມນາ ຊື້ຜ້າຍາມບຸນ*
*ເງິນຫົວຂວັນເຈົ້າ ເຂົ້າຫົວຂ້ອນນາ*
*ໃຈໜັກໄດ້ກິນເຂົ້າ ໃຈເບົາໄດ້ກິນບຸ່ນ*
*ເຮັດນາບໍ່ເສຍໄຮ່ ລ້ຽງໄກ່ບໍ່ເສຍຮັງ*
*ເຈົ້າເຮືອນພາເຂົ້າ ເຈົ້າເຫຼົ້າພາກິນ*
*ເວົ້າດີຂໍເຂົ້າ ເວົ້າຮ້າຍຂໍເກືອ*
*ມື້ເຊົ້າຂໍແກງ ມື້ແລງຂໍເຂົ້າ*
*ຢ່າອຸ່ນເຂົ້າແລງ ຢ່າແທງຄໍໝໍ້ໜຶ້ງ*
*ເຮັດນາຢ່າຍອມກ້າ ໄປຄ້າຢ່າຍອມທຶນ*
*ນາແລ້ວຂ້າຄວາຍເຖິກ ເສິກແລ້ວຂ້າຄົນຫານ*
*ຮັກນາໃຫ້ຮັກກວານບ້ານ*

## ເພງກ່ອມລູກ

*ນອນສາຫຼ້າ ຫຼັບຕາແມ່ຊິກ່ອມ*
*ຫຼັບສອງຕາຢ່າໄຫ້ ແກ້ວແກ່ນໄທ້ ລູກແມ່ຄົນດີ*
*ເຈົ້າຢາກຊິ້ນບໍ່ມີຜູ້ໄປຫາ ເຈົ້າຢາກປາບໍ່ມີຜູ້ໄປ*
*ສ້ອນ ມີເຂົ້າເຢັນສອງສາມກ້ອນ*
*ປ້ອນແລ້ວລວາດຫຼັບໄປ*

*ນອກຈາກນີ້ຊາວລາວ ຍັງມີຄຳເວົ້າພັນລະນາເຖິງເຂົ້າອີກມາກມາຍ ຢູ່ໃນທຸກໄລຍະການເຄື່ອນໄຫວແຫ່ງຊີວິດ ນັບແຕ່ມື້ເກີດຈົນຕາຍ ແລະຢູ່ໃນບົດວັນນະກຳສຳຄັນອື່ນໆອີກ ເຊັ່ນ: ເລື່ອງທ້າວຮຸ່ງ ທ້າວເຈືອງ ສັງສິນໄຊ ເລື່ອງພື້ນບູລີຈັນ... ເປັນຕົ້ນ*

ຜູ້ສົນໃຈສາມາດອ່ານລາຍລະອຽດໄດ້ໃນປຶ້ມ

***"ລາວ ວັດທະນະທຳເຂົ້າໜຽວ"***

ຊຶ່ງເປັນຜົນງານ ຂອງໄມ້ຈັນ





## ເຂົ້າໂຮຍເກືອ

ໂດຍ: ທົງເຫີນ ຂຸນພິທັກ

ແມ່ສວ່າຍເຂົ້າ ຫອມຮຸ່ຍຮົມດັງ
ຂ້ອຍກຳລັງ ຫິວເຂົ້າຈ້ອຍໆ
ທັງນ້ອງນ້ອຍ ໃຫ້ແອ່ວຂໍກິນ
ແມ່ໄດ້ຍິນ ອິ່ນອອຍຍົວະເຍົ້າ
ຍິ່ນປັ້ນເຂົ້າ ອຸ່ນໆ ໂຮຍເກືອ
ໃຫ້ສອງເຂືອ ປັ້ນທຸ່ນອຸ່ນທ້ອງ
ໃຫ້ພານ້ອງ ໄປຫຼິ້ນອາຮາມ
ຊາມພໍ່ມາ ຫາປາໄດ້ຊີ້ນ
ຈຶ່ງກິນໃໝ່ ໃຫ້ອີ່ມມີແຮງ

## ເຂົ້າໄກ່ນ້ອຍ

ຊື່ວ່າ **"ເຂົ້າໄກ່ນ້ອຍ"** ແຕ່ເຮືອງເຮື່ອຄູນຄຳ ແທ້ເດ
ລ້ຽງຫຼໍ່ຊົນຊາວພວນ ໃຫ້ຮັ່ງມີປັນຍາພ້ອມ
ທັງເຫຼົ່າເປັນຂອງຕ້ອນ ໄທໄກພີ່ນ້ອງຕ່າງ
ນ້ອຍແຕ່ພຽງຊື່ເຂົ້າ ຄຸນນັ້ນມາກມີ ແທ້ນາ



